ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ສຳນັກງານນາຍົກລັດຖະມົນຕີ ເລກທີ 119 /ນຍ

ນະຄອນຫລວງວຽງຈັນ, ວັນທີ 20/04/2011

# ດຳລັດ
# ວ່າດ້ວຍຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009;
- ອີງຕາມໜັງສືສະເໜີ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2733/ຜທ.ລທ4, ລົງວັນທີ 23 ພະຈິກ 2010.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ແລະ ແນະນຳອະທິບາຍ ເນື້ອໃນຂອງບາງມາດຕາ ທີ່ເຫັນວ່າຈຳເປັນໃຫ້ລະອຽດຈະແຈ້ງ ຊ່ວຍໃຫ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນໄດ້ງ່າຍ, ຊັດເຈນ ແລະ ຮັດກຸມ ເຊັ່ນ ການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລະຫວ່າງ ຂະແໜງການຂອງສູນກາງດ້ວຍກັນ, ການບໍລິການການລົງທຶນປະຕູດຽວ ດັ່ງນີ້ເປັນຕົ້ນ ແນໃສ່ໃຫ້ມີຄວາມເຂົ້າໃຈຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ຮັບປະກັນເຮັດໃຫ້ການລົງທຶນ ມີປະສິດທິຜົນ.

## ໝວດທີ 2
## ການລົງທຶນທຸລະກິດຮ່ວມຕາມສັນຍາ ແລະ ການກຳນົດທຶນຈົດທະບຽນ

### ມາດຕາ 2. ການລົງທຶນທຸລະກິດຮ່ວມຕາມສັນຍາ

ນິຕິບຸກຄົນຕ່າງປະເທດ ທີ່ມາຮ່ວມທຸລະກິດກັບນິຕິບຸກຄົນພາຍໃນ ດ້ວຍຮູບແບບທຸລະກິດຮ່ວມຕາມສັນຍາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຕ້ອງໄດ້ນຳເອົາສັນຍາທີ່ເຊັນຮ່ວມກັນໄປຈົດທະບຽນນຳສຳນັກງານທະບຽນສານກ່ອນ. ຫລັງຈາກນັ້ນ ຈຶ່ງນຳມາແຈ້ງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຫລື ຂະແໜງການແຜນການ ແລະ ການລົງທຶນ ບ່ອນທີ່ນິຕິບຸກຄົນພາຍໃນໄດ້ຮັບອະນຸຍາດສ້າງຕັ້ງເພື່ອອອກໜັງສືຢັ້ງຢືນຮັບຮູ້ຕາມກົດໝາຍ.

ລັກສະນະຂອງການດຳເນີນທຸລະກິດຕາມສັນຍາ ສາມາດເຮັດໄດ້ໃນຮູບແບບການຮ່ວມມືໃນຂອບເຂດທຸລະກິດທີ່ລະບຸໄວ້ໃນສັນຍາເພື່ອແບ່ງປັນຜົນປະໂຫຍດຮ່ວມກັນ ແລະ ບໍ່ມີການສ້າງຕັ້ງເປັນນິຕິບຸກຄົນໃໝ່ຂຶ້ນ ຢູ່ ສປປ ລາວ.

### ມາດຕາ 3. ການກຳນົດທຶນຈົດທະບຽນ

ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນກິດຈະການທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຕ້ອງມີທຶນທັງໝົດ ແລະ ທຶນຈົດທະບຽນຕ່ຳສຸດບໍ່ໃຫ້ຫຼຸດ ໜຶ່ງຕື້ ກີບ.

### ມາດຕາ 4. ການຖອກທຶນຈົດທະບຽນ

ສຳລັບກິດຈະການລົງທຶນທົ່ວໄປ ພາຍຫຼັງທີ່ຜູ້ລົງທຶນ ໄດ້ຮັບໃບທະບຽນວິສາຫະກິດແລ້ວຕ້ອງຖອກທຶນຈົດທະບຽນ ໂດຍຜ່ານທະນາຄານທຸລະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢູ່ ສປປ ລາວ ແລະ ຕ້ອງນຳໄປຢັ້ງຢືນການຖອກທຶນດັ່ງກ່າວ ຢູ່ທະນາຄານແຫ່ງ ສປປ ລາວ ພາຍໃນກຳນົດເວລາ ສິບ ວັນລັດຖະການ.

ການຖອກທຶນຈົດທະບຽນ ຂອງວິສາຫະກິດທີ່ລົງທຶນ ໃນແຕ່ລະຂະແໜງການ ໃຫ້ປະຕິບັດຕາມອັດຕາ ແລະ ກຳນົດເວລາ ດັ່ງນີ້:

1. ການດຳເນີນທຸລະກິດໃນຂະແໜງກະສິກຳ ຕ້ອງຖອກທຶນຈົດທະບຽນເບື້ອງຕົ້ນໃນອັດຕາ 40% ຂອງທຶນຈົດທະບຽນທັງໝົດພາຍໃນກຳນົດເວລາ ເກົ້າສິບ ວັນລັດຖະການ ແລະ ທຶນຈົດທະບຽນທີ່ຍັງເຫຼືອຕ້ອງຖອກໃຫ້ຄົບຖ້ວນພາຍໃນກຳນົດເວລາ ໜຶ່ງ ປີ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດ ເປັນຕົ້ນໄປ.
2. ການດຳເນີນທຸລະກິດໃນຂະແໜງການຜະລິດ, ປຸງແຕ່ງອຸດສາຫະກຳ-ຫັດຖະກຳ ຕ້ອງຖອກທຶນຈົດທະບຽນເບື້ອງຕົ້ນໃນອັດຕາ 60% ຂອງທຶນຈົດທະບຽນທັງໝົດພາຍໃນກຳນົດເວລາ ເກົ້າສິບ

ວັນລັດຖະການ ແລະ ທຶນຈົດທະບຽນທີ່ຍັງເຫຼືອຕ້ອງຖອກໃຫ້ຄົບຖ້ວນ ພາຍໃນກຳນົດເວລາ ໜຶ່ງ ປີ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດ ເປັນຕົ້ນໄປ.

3. ການດຳເນີນທຸລະກິດໃນຂະແໜງການຄ້າ ແລະ ບໍລິການອື່ນໆ ຕ້ອງຖອກທຶນຈົດທະບຽນເບື້ອງຕົ້ນໃນອັດຕາ 80% ຂອງ ທຶນຈົດທະບຽນທັງໝົດ ພາຍໃນກຳນົດເວລາ ເກົ້າສິບ ວັນລັດຖະການ ແລະ ທຶນຈົດທະບຽນທີ່ຍັງເຫຼືອຕ້ອງຖອກໃຫ້ຄົບຖ້ວນພາຍໃນ ໜຶ່ງ ປີ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດເປັນຕົ້ນໄປ. ສຳລັບການດຳເນີນທຸລະກິດກ່ຽວກັບທະນາຄານທຸລະກິດ ຫລື ສະຖາບັນການເງິນໃຫ້ປະຕິບັດຕາມລະບຽບການຂອງສະຖາບັນການເງິນ ຫລື ທະນາຄານ ສປປ ລາວ ວາງອອກ.

ສຳລັບ ທຶນຈົດທະບຽນໃນກິດຈະການສຳປະທານ ໄດ້ກຳນົດອັດຕາຕ່ຳສຸດໄວ້ໃນມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ຜູ້ລົງທຶນຕ້ອງຖອກທຶນຈົດທະບຽນເບື້ອງຕົ້ນຢ່າງໜ້ອຍ 20% ຂອງທຶນຈົດທະບຽນທັງໝົດ ພາຍໃນກຳນົດເວລາ ເກົ້າສິບ ວັນລັດຖະການໂດຍຜ່ານທະນາຄານທຸລະກິດທີ່ໄດ້ຮັບການສ້າງຕັ້ງຢູ່ ສປປ ລາວ ແລະ ທຶນຈົດທະບຽນທີ່ເຫຼືອຕ້ອງຖອກໃຫ້ຄົບຖ້ວນ ພາຍໃນກຳນົດເວລາ ສອງ ປີ ນັບແຕ່ວັນສ້າງຕັ້ງວິສາຫະກິດເປັນຕົ້ນໄປ. ການຖອກທຶນແຕ່ລະຄັ້ງຂອງວິສາຫະກິດ ຕ້ອງໄດ້ຮັບການຢັ້ງຢືນຖອກທຶນດັ່ງກ່າວ ຢູ່ທະນາຄານແຫ່ງ ສປປ ລາວ ພາຍໃນກຳນົດເວລາ ສິບ ວັນລັດຖະການ.

ການຖອກທຶນຈົດທະບຽນຂອງວິສາຫະກິດ ທີ່ລົງທຶນໃນກິດຈະການທົ່ວໄປ ແລະ ກິດຈະການສຳປະທານ ຕ້ອງຖອກເປັນເງິນກີບ.

## ໝວດທີ 3
## ການລົງທຶນ ໃນກິດຈະການທົ່ວໄປ

### ມາດຕາ 5. ການສະເໜີລົງທຶນ

ຜູ້ລົງທຶນ ທີ່ມີຈຸດປະສົງ ລົງທຶນໃນກິດຈະການທົ່ວໄປ ກຳນົດຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ແລະ ບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ທີ່ບໍ່ຕິດພັນກັບກິດຈະການສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ແລະ 18 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສາມາດຍື່ນຄຳຮ້ອງຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂະແໜງການ ອຸດສາຫະກຳ ແລະ ການຄ້າ ຂັ້ນສູນກາງ ແລະ ທ້ອງຖິ່ນ.

### ມາດຕາ 6. ຂັ້ນຕອນ, ກຳນົດເວລາໃນການພິຈາລະນາ

ການພິຈາລະນາການຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກຳນົດໃນ ມາດຕາ 18 ຂອງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ແລະ 16 ຂອງກົດໝາຍວ່າດ້ວຍວິສາຫະກິດໂດຍບໍ່ຜ່ານກອງປະຊຸມ ເວັ້ນເສຍແຕ່ຂະແໜງການທີ່

ກ່ຽວຂ້ອງ ຫາກມີຄວາມເຫັນບໍ່ເປັນເອກະພາບ, ບໍ່ຄົບຖ້ວນ ຫລື ມີບັນຫາອື່ນໆ ຊຶ່ງບໍ່ສາມາດຂຶ້ນທະບຽນວິສາຫະກິດໄດ້.

**ມາດຕາ 7. ການປະກອບເອກະສານສະເໜີລົງທຶນ**

ເອກະສານ ປະກອບການສະເໜີລົງທຶນ ໃນກິດຈະການທົ່ວໄປ ມີດັ່ງນີ້:

1. ຄໍາຮ້ອງຂໍລົງທຶນຕາມແບບພິມ;
2. ສັນຍາ ແລະ ຂໍ້ຜູກພັນຕ່າງໆ (ຖ້າມີການຮ່ວມທຶນກັນ);
3. ເອກະສານ ທີ່ກ່ຽວຂ້ອງອື່ນໆ ເປັນຕົ້ນ:

- ຊີວະປະຫວັດຫຍໍ້ ຂອງຜູ້ລົງທຶນ;
- ໃບຢັ້ງຢືນຖານະການເງິນ ແລະ ປະສົບການຂອງຜູ້ລົງທຶນ;
- ເອກະສານຢັ້ງຢືນກ່ຽວກັບການເປັນ ນິຕິບຸກຄົນ ຢູ່ຕ່າງປະເທດ (ຖ້າມີ)
- ສໍາເນົາບັດປະຈໍາຕົວ (ບຸກຄົນພາຍໃນ) ແລະ ສໍາເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ);

ຜູ້ລົງທຶນທີ່ມີຈຸດປະສົງຢາກລົງທຶນໃນກິດຈະການທົ່ວໄປ ສາມາດເອົາແບບພິມຂໍລົງທຶນນໍາຫ້ອງການບໍລິການການລົງທຶນປະຕູດຽວຂອງຂະແໜງແຜນການ ແລະການລົງທຶນຂັ້ນສູນກາງ ແລະ ທ້ອງຖິ່ນ ຫລື ຂະແໜງອຸດສາຫະກໍາ ແລະ ການຄ້າ ຂັ້ນສູນກາງ ແລະ ທ້ອງຖິ່ນ ຫລື ເອົາຈາກເວັບໄຊ້.

**ມາດຕາ 8. ໃບທະບຽນວິສາຫະກິດ**

ໃບທະບຽນວິສາຫະກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 19 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໝາຍເຖິງເອກະສານທີ່ຢັ້ງຢືນວ່າ ຜູ້ລົງທຶນສາມາດດໍາເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ ແລະ ສາມາດເຄື່ອນໄຫວໄດ້ຕະຫຼອດອາຍຸຂອງກິດຈະການ. ໃບທະບຽນວິສາຫະກິດລວມເອົາໃບອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ໃບທະບຽນອາກອນ. ກ່ອນຈະດໍາເນີນກິດຈະການວິສາຫະກິດຕ້ອງຂໍໃບອະນຸຍາດທາງດ້ານເຕັກນິກ ຫລື ໃບຢັ້ງຢືນດໍາ ເນີນກິດຈະການ ນໍາຂະແໜງການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນຜູ້ພິຈາລະນາອອກໃບທະບຽນວິສາຫະກິດ ແລ້ວສໍາເນົາສົ່ງໃຫ້ພາກສ່ວນກ່ຽວຂ້ອງ ພາຍໃນກໍານົດເວລາ ສິບ ວັນລັດຖະການ ນັບແຕ່ວັນອອກໃບທະບຽນວິສາຫະກິດ ເປັນຕົ້ນໄປ ເພື່ອຕິດຕາມ ແລະ ຄຸ້ມຄອງຕາມພາລະບົດບາດຂອງຕົນ ທີ່ກໍານົດໄວ້ໃນລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.

ສໍາລັບໃບທະບຽນວິສາຫະກິດ ທີ່ແຂວງ, ນະຄອນ ອອກນັ້ນ ຕ້ອງສໍາເນົາສົ່ງພາກສ່ວນກ່ຽວຂ້ອງ ແລະ ນໍາສົ່ງຂໍ້ມູນໃຫ້ຫ້ອງການບໍລິການປະຕູດຽວຂອງກະຊວງອຸດສາຫະກໍາ ແລະການຄ້າພາຍໃນກໍານົດເວລາ ສິບ ວັນລັດຖະການ ນັບແຕ່ວັນອອກໃບທະບຽນດັ່ງກ່າວເປັນຕົ້ນໄປ.

ເນື້ອໃນຂອງໃບທະບຽນວິສາຫະກິດ ໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດ.

ຂະແໜງການການເງິນ ເປັນຜູ້ອອກເລກປະຈຳຕົວຂອງຜູ້ເສັຍອາກອນ ເພື່ອຈົດໃສ່ໃບທະບຽນວິສາຫະກິດ. ຜູ້ລົງທຶນຕ້ອງນຳໃຊ້ເລກປະຈຳຕົວດັ່ງກ່າວ ໃນການແຈ້ງເອກະສານຢ່າງເປັນທາງການຕໍ່ພາກລັດ.

ພາຍຫລັງໄດ້ຂຶ້ນທະບຽນວິສາຫະກິດແລ້ວ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ບ່ອນທີ່ຂຶ້ນທະບຽນດັ່ງກ່າວ ແລະ ອອກໃບອະນຸຍາດຄວັດຕາປະທັບພ້ອມ ເພື່ອໃຫ້ຂະແໜງການປ້ອງກັນຄວາມສະຫງົບ ຄວັດຕາປະທັບ ໃຫ້ຫົວໜ່ວຍວິສາຫະກິດພາຍໃນກຳນົດເວລາບໍ່ເກີນເຈັດ ວັນລັດຖະການ.

## ມາດຕາ 9. ການອອກເລກປະຈຳຕົວຜູ້ເສັຍອາກອນ

ເລກປະຈຳຕົວຂອງຜູ້ເສັຍອາກອນແມ່ນ ເລກລະຫັດທີ່ໃຊ້ສະເພາະກັບຜູ້ມີພັນທະເສັຍອາກອນໃຫ້ລັດ ໄປຈົນກວ່າສິ້ນສຸດອາຍຸຂອງໃບທະບຽນສຳປະທານ ຫລື ໃບທະບຽນວິສາຫະກິດ ເພື່ອຄຸ້ມຄອງ ແລະ ຕິດຕາມຂໍ້ມູນການມອບອາກອນໃນແຕ່ລະໄລຍະ ຊຶ່ງຂະແໜງສ່ວຍສາອາກອນ ເປັນຜູ້ກຳນົດເພື່ອໃຫ້ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະ ການຄ້າ ຈົດໃສ່ໃບທະບຽນສຳປະທານ ຫລື ໃບທະບຽນວິສາຫະກິດ. ເລກປະຈຳຕົວຜູ້ເສັຍອາກອນດັ່ງກ່າວນັ້ນ ຍັງນຳໃຊ້ເຂົ້າໃນໃບແຈ້ງເສັຍອາກອນ, ໃບເກັບເງິນ, ເອກະສານຊຳລະອາກອນ, ເອກະສານແຈ້ງພາສີ, ເອກະສານການບັນຊີ, ເອກະສານເຄື່ອນຍ້າຍສິນຄ້າເຄື່ອງຂອງ ຫລື ຜະລິດຕະພັນ ແລະ ເອກະສານອື່ນໆ ໃນທາງລັດຖະການ.

ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ປະສານງານເອົາເລກປະຈຳຕົວຜູ້ເສັຍອາກອນນຳຂະແໜງການການເງິນ.

# ໝວດທີ 4
# ການລົງທຶນ ໃນກິດຈະການສຳປະທານ

## ມາດຕາ 10. ການສະເໜີລົງທຶນ

ການສະເໜີລົງທຶນ ໃນກິດຈະການສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຜູ້ລົງທຶນຕ້ອງແມ່ນນິຕິບຸກຄົນ ແລະ ຕ້ອງປະກອບເອກະສານຄົບຖ້ວນສະເໜີຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂອງຂະແໜງແຜນການ ແລະ ການລົງທຶນ ຂັ້ນສູນກາງ ຫລື ທ້ອງຖິ່ນ, ຊຶ່ງກິດຈະການທີ່ອະນຸຍາດໃຫ້ສຳປະທານໄດ້ກຳນົດໄວ້ໃນ ເອກະສານຊ້ອນທ້າຍເລກທີ 3 ຂອງດຳລັດສະບັບນີ້.

**ມາດຕາ 11. ການປະກອບເອກະສານສະເໜີລົງທຶນ**

ເອກະສານ ປະກອບການສະເໜີລົງທຶນ ໃນກິດຈະການສຳປະທານ ມີດັ່ງນີ້:

1. ຄຳຮ້ອງຂໍສຳປະທານ;
2. ຂໍ້ມູນພື້ນຖານກ່ຽວກັບໂຄງການ ຫລື ບົດວິພາກເສດຖະກິດ-ເຕັກນິກ ຫລື ແຜນການດຳເນີນທຸລະກິດ ຢູ່ສປປ ລາວ;
3. ສັນຍາຜູ້ຮ່ວມສ້າງຕັ້ງວິສາຫະກິດ ຊຶ່ງຕ້ອງໃຫ້ຖືກຕ້ອງຕາມຮູບການ, ຮູບແບບຂອງວິສາຫະກິດທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ (ຖ້າເປັນການລົງທຶນແບບຮຸ້ນສ່ວນ);
4. ເອກະສານຊ້ອນທ້າຍອື່ນໆ ເປັນຕົ້ນ:

- ເອກະສານຢັ້ງຢືນຖານະການເງິນ ແລະ ປະສົບການຂອງຜູ້ລົງທຶນ;
- ຊີວະປະຫວັດຫຍໍ້ຂອງຜູ້ລົງທຶນ;
- ສຳເນົາບັດປະຈຳຕົວ (ບຸກຄົນພາຍໃນ) ແລະ ສຳເນົາໜັງສືຜ່ານແດນ (ບຸກຄົນຕ່າງປະເທດ).

ນອກຈາກເອກະສານປະກອບຂ້າງເທິງນັ້ນແລ້ວ ສຳລັບກິດຈະການສຳປະທານເປັນຕົ້ນກິດຈະການແຮ່ທາດ, ພະລັງງານໄຟຟ້າ ແລະສຳປະທານທີ່ດິນ ແມ່ນຕ້ອງມີບົດບັນທຶກການເກັບກຳຂໍ້ມູນເບື້ອງຕົ້ນຈາກພາກສະໜາມນຳອີກ.

ສຳລັບຜູ້ລົງທຶນ ທີ່ມີຈຸດປະສົງສ້າງຕັ້ງ ຫລື ພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໃຫ້ປະຕິບັດຕາມລະບຽບການສະເພາະ.

**ມາດຕາ 12. ການຄັດເລືອກຜູ້ສຳປະທານ**

ໃນກິດຈະການສຳປະທານທີ່ມີຄຳຮ້ອງຂໍລົງທຶນແຕ່ສອງສະບັບຂຶ້ນໄປ ວິທີການຄັດເລືອກໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນ ມາດຕາ 22 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 13. ການພິຈາລະນາ**

ການພິຈາລະນາ ການຂໍລົງທຶນໃນກິດຈະການສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

1. ໂຄງການ ຫລື ກິດຈະການສຳປະທານ ໃນບັນຊີຮຽກການລົງທຶນ ໃຫ້ຂະແໜງການແຜນການ ແລະ ການລົງທຶນ ຄົ້ນຄວ້າພິຈາລະນາ ແລ້ວນຳສະເໜີຕໍ່ກອງປະຊຸມຄະນະສົ່ງເສີມການລົງທຶນ ເພື່ອພິຈາລະນາອະນຸຍາດ ຫລື ປະຕິເສດ:

- ໃນກໍລະນີ ຫາກໄດ້ຮັບການເຫັນດີ ແມ່ນໃຫ້ດຳເນີນການເຈລະຈາກ່ຽວກັບບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ແລ້ວລາຍງານຜົນການເຈລະຈາດັ່ງກ່າວ ຕໍ່ກອງປະຊຸມຄະນະສົ່ງເສີມ

ການລົງທຶນ ກ່ອນຈະນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຊາບ ເພື່ອຂໍໃບມອບສິດເຊັນ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາໂຄງການ.

- ໃນກໍລະນີທາກບໍ່ເຫັນດີແມ່ນໃຫ້ອອກໜັງສືແຈ້ງຕອບຜູ້ສະເໜີຂໍລົງທຶນຊາບ.

2. ໂຄງການ ຫລື ກິດຈະການສຳປະທານໃດ ທີ່ບໍ່ມີໃນບັນຊີຮຽກການລົງທຶນ ໃຫ້ຂະແໜງການແຜນການ ແລະ ການລົງທຶນ ຄົ້ນຄວ້າພິຈາລະນາ ໂດຍປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອປະກອບຄຳເຫັນເປັນລາຍລັກອັກສອນ ໂດຍຜ່ານການນຳຂອງຕົນແລ້ວສົ່ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ພາຍໃນກຳນົດເວລາ ຊາວຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ. ຫລັງຈາກນັ້ນ ຂະແໜງການແຜນການ ແລະ ການລົງທຶນ ນຳສະເໜີຕໍ່ກອງປະຊຸມ ຄະນະສົ່ງເສີມການລົງທຶນ ກ່ອນຈະນຳສະເໜີຕໍ່ລັດຖະບານ ຫລື ອົງການປົກຄອງແຂວງ, ນະຄອນ ເພື່ອພິຈາລະນາອະນຸຍາດ ຫລື ປະຕິເສດ:

- ໃນກໍລະນີທາກໄດ້ຮັບການເຫັນດີ ແມ່ນໃຫ້ດຳເນີນການເຈລະຈາກ່ຽວກັບບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ແລ້ວລາຍງານຜົນການເຈລະຈາດັ່ງກ່າວ ຕໍ່ກອງປະຊຸມຄະນະສົ່ງເສີມການລົງທຶນ ກ່ອນຈະນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຊາບເພື່ອຂໍໃບມອບສິດເຊັນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາໂຄງການ.
- ໃນກໍລະນີທາກບໍ່ເຫັນດີ ແມ່ນໃຫ້ອອກໜັງສືແຈ້ງຕອບຜູ້ສະເໜີຂໍລົງທຶນຊາບ.

**ມາດຕາ 14. ການເຈລະຈາສັນຍາສຳປະທານ**

ນັບແຕ່ວັນໄດ້ຮັບແຈ້ງການຕົກລົງເຫັນດີ ຂອງລັດຖະບານ ຫລື ອົງການປົກຄອງແຂວງ, ນະຄອນ ຂະແໜງການແຜນການ ແລະ ການລົງທຶນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ລົງທຶນຊາບພາຍໃນກຳນົດເວລາ ສອງ ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການຕົກລົງດັ່ງກ່າວ ເປັນຕົ້ນໄປ ເພື່ອໃຫ້ຜູ້ລົງທຶນ ເຂົ້າມາເຈລະຈາ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ.

ພາຍຫລັງໄດ້ຮັບແຈ້ງແລ້ວ ຜູ້ລົງທຶນຕ້ອງແຈ້ງໃຫ້ຂະແໜງການແຜນການ ແລະ ການລົງທຶນຊາບກ່ຽວກັບວັນເວລາທີ່ຈະເຂົ້າມາເຈລະຈາ ພາຍໃນກຳນົດເວລາ ສິບ ວັນລັດຖະການ, ຖ້າກາຍກຳນົດເວລາດັ່ງກ່າວ ຫລື ຖ້າວ່າຜູ້ລົງທຶນ ຫາກບໍ່ເຂົ້າມາເຈລະຈາພາຍໃນກຳນົດເວລາ ສາມສິບ ວັນລັດຖະການ ນັບຈາກວັນເວລາທີ່ໄດ້ອອກໜັງສືແຈ້ງໃຫ້ເຂົ້າມາເຈລະຈາຖືວ່າຜູ້ລົງທຶນສະລະສິດໃນການລົງທຶນ.

ເມື່ອຂະແໜງການແຜນການ ແລະ ການລົງທຶນ ໄດ້ສຳເລັດການເຈລະຈາບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ແລ້ວ ຕ້ອງລາຍງານຜົນການເຈລະຈາຕໍ່ ກອງປະຊຸມຄະນະສົ່ງເສີມ

ການລົງທຶນ ກ່ອນຈະນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ເພື່ອຂໍໃບມອບສິດເຊັນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ໂຄງການດັ່ງກ່າວ.

**ມາດຕາ 15. ການວາງເງິນຄ້ຳປະກັນ**

ການວາງເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນການປະຕິບັດບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ.

ເງື່ອນໄຂ ແລະ ຈຳນວນເງິນຄ້ຳປະກັນ ແມ່ນຂຶ້ນກັບຂະໜາດ, ປະເພດ, ຂະແໜງການ ແລະ ການຕົກລົງໃນເວລາເຈລະຈາ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ເຊັ່ນ:

1. **ໂຄງການໄຟຟ້າ**

- ຂະໜາດກຳລັງຕິດຕັ້ງ ແຕ່ 5 ເມກາວັດ ລົງມາ: ວາງເງິນຄ້ຳປະກັນ ຈຳນວນ 10.000 ໂດລາສະຫະລັດ;
- ຂະໜາດກຳລັງຕິດຕັ້ງ ສູງກວ່າ 5 ເມກາວັດ ຫາ 100 ເມກາວັດ: ວາງເງິນຄ້ຳປະກັນ ຈຳນວນ 30.000 ໂດລາສະຫະລັດ;
- ຂະໜາດກຳລັງຕິດຕັ້ງ ສູງກວ່າ 100 ເມກາວັດ ຂຶ້ນໄປ: ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ.

2. **ໂຄງການສຳປະທານທີ່ດິນ**

- ເນື້ອທີ່ດິນ 2 ຫາ 150 ເຮັກຕາ: ວາງເງິນຄ້ຳປະກັນ ຈຳນວນ 30.000 ໂດລາສະຫະລັດ;
- ເນື້ອທີ່ດິນ 151 ຫາ 1.000 ເຮັກຕາ: ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ;
- ເນື້ອທີ່ດິນ 1.001 ເຮັກຕາ ຂຶ້ນໄປ: ວາງເງິນຄ້ຳປະກັນ ຈຳນວນ 70.000 ໂດລາສະຫະລັດ.

3. **ໂຄງການສຳປະທານແຮ່ທາດ**

- ເນື້ອທີ່ສຳປະທານແຮ່ທາດໂລຫະ 1 ຫາ 300 ກິໂລຕາແມັດ: ວາງເງິນຄ້ຳປະກັນ ຈຳນວນ 50.000 ໂດລາສະຫະລັດ;
- ເນື້ອທີ່ສຳປະທານແຮ່ທາດໂລຫະ 301 ຫາ 500 ກິໂລຕາແມັດ: ວາງເງິນຄ້ຳປະກັນ ຈຳນວນ 100.000ໂດລາສະຫະລັດ.

ການວາງເງິນຄ້ຳເນື້ອທີ່ສຳປະທານແຮ່ທາດອະໂລຫະ, ແຮ່ທາດພະລັງງານເຊື້ອໄຟ ແລະ ແຮ່ທາດແຫລວ ຈະມີລະບຽບການສະເພາະໃນການກຳນົດເນື້ອທີ່ ແລະ ຈຳນວນເງິນຄ້ຳປະກັນ.

ການວາງເງິນຄ້ຳປະກັນ ສຳລັບ ກິດຈະການສຳປະທານປະເພດອື່ນໆ ທີ່ບໍ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແມ່ນຂຶ້ນກັບການຕົກລົງໃນເວລາເຈລະຈາ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ.

ຜູ້ລົງທຶນ ຕ້ອງວາງເງິນຄ້ຳປະກັນເປັນເງິນສົດ ດ້ວຍການໂອນເຂົ້າບັນຊີ ຂອງຂະແໜງການແຜນການ ແລະ ການລົງທຶນ ທີ່ເປີດໄວ້ຢູ່ຄັງເງິນແຫ່ງຊາດ. ສຳລັບເງິນຄ້ຳປະກັນນັ້ນອາດ

ເປັນສະກຸນເງິນກີບ ຫລື ເງິນຕາຕ່າງປະເທດ (ໂດລາສະຫະລັດ, ເງິນສະກຸນອື່ນໆ ທີ່ທະນາຄານແຫ່ງ ສປປ ລາວ ຮັບເອົາໄດ້) ກໍໄດ້ ໂດຍຄິດໄລ່ອັດຕາແລກປ່ຽນໃນວັນວາງເງິນຄໍ້າປະກັນຕາມທີ່ໄດ້ຕົກລົງກັນໃນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ.

ເງິນຄໍ້າປະກັນການປະຕິບັດ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາຈະສົ່ງຄືນໃຫ້ຜູ້ລົງທຶນເມື່ອຜູ້ລົງທຶນສໍາເລັດການປະຕິບັດພັນທະ ແລະ ເງື່ອນໄຂທີ່ກໍານົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ໂດຍມີການຢັ້ງຢືນຂອງຂະແໜງການກ່ຽວຂ້ອງ. ໃນກໍລະນີຜູ້ລົງທຶນ ຫາກບໍ່ປະຕິບັດພັນທະ ແລະ ເງື່ອນໄຂທີ່ໄດ້ກໍານົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາເງິນຄໍ້າປະກັນດັ່ງກ່າວ ຈະຖືກຮິບເປັນຂອງລັດ.

**ມາດຕາ 16. ໃບທະບຽນສໍາປະທານ**

ໃບທະບຽນສໍາປະທານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 25 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໝາຍເຖິງເອກະສານທີ່ຢັ້ງຢືນວ່າ ຜູ້ລົງທຶນສາມາດດໍາເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ແລະ ສາມາດເຄື່ອນໄຫວໄດ້ຕະຫຼອດອາຍຸຂອງການສໍາປະທານ. ໃບທະບຽນສໍາປະທານລວມເອົາໃບທະບຽນວິສາຫະກິດ, ໃບອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ໃບທະບຽນອາກອນ. ກ່ອນຈະດໍາເນີນກິດຈະການ ວິສາຫະກິດຕ້ອງຂໍໃບຢັ້ງຢືນ ຫລື ໃບອະນຸຍາດ ດ້ານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງອື່ນ ຕາມແຕ່ລະກໍລະນີ.

ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ພິຈາລະນາອອກໃບທະບຽນສໍາປະທານແລ້ວສໍາເນົາສົ່ງໃຫ້ພາກສ່ວນກ່ຽວຂ້ອງ ພາຍໃນກໍານົດເວລາ ສິບ ວັນລັດຖະການ ນັບແຕ່ວັນອອກໃບທະບຽນສໍາປະທານເປັນຕົ້ນໄປ ເພື່ອຕິດຕາມ ແລະ ຄຸ້ມຄອງຕາມພາລະບົດບາດຕົນທີ່ກໍານົດໄວ້ໃນລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.

ສໍາລັບໃບທະບຽນສໍາປະທານທີ່ແຂວງ, ນະຄອນ ອອກນັ້ນ ຕ້ອງສໍາເນົາສົ່ງໃຫ້ພາກສ່ວນກ່ຽວຂ້ອງ ແລະ ນໍາສົ່ງໃຫ້ ກະຊວງແຜນການ ແລະ ການລົງທຶນ ພາຍໃນກໍານົດເວລາ ສິບ ວັນລັດຖະການ ນັບແຕ່ວັນອອກໃບທະບຽນດັ່ງກ່າວເປັນຕົ້ນໄປ.

ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນຜູ້ອອກເລກລະຫັດປະຈໍາຕົວວິສາຫະກິດເພື່ອຈົດໃສ່ໃບທະບຽນສໍາປະທານ.

ຂະແໜງການການເງິນ ເປັນຜູ້ອອກເລກປະຈໍາຕົວຂອງຜູ້ເສຍອາກອນ ເພື່ອຈົດໃສ່ໃບທະບຽນສໍາປະທານ. ຜູ້ລົງທຶນຕ້ອງນໍາໃຊ້ເລກປະຈໍາຕົວດັ່ງກ່າວ ໃນການແຈ້ງເສຍອາກອນຕໍ່ຂະແໜງການການເງິນໃນແຕ່ລະປີ.

ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ປະສານງານເອົາເລກລະຫັດປະຈໍາຕົວວິສາຫະກິດນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ປະສານງານເອົາເລກປະຈໍາຕົວຂອງຜູ້ເສຍອາກອນນໍາຂະແໜງການການເງິນ.

ພາຍຫລັງ ໄດ້ອອກໃບທະບຽນສຳປະທານແລ້ວ ໃຫ້ຂະແໜງການແຜນການ ແລະ ການລົງທຶນ ບ່ອນທີ່ອອກທະບຽນດັ່ງກ່າວ ອອກໃບອະນຸຍາດຄວັດຕາປະທັບພ້ອມ ເພື່ອໃຫ້ຂະແໜງການປ້ອງກັນຄວາມສະຫງົບຄວັດຕາປະທັບພາຍໃນກຳນົດເວລາບໍ່ເກີນ ເຈັດ ວັນລັດຖະການ.

**ມາດຕາ 17. ເນື້ອໃນຂອງໃບທະບຽນສຳປະທານ**

ໃບທະບຽນສຳປະທານ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ວິສາຫະກິດ;
- ທີ່ຕັ້ງຂອງຫ້ອງການວິສາຫະກິດ ແລະ / ຫລື ທີ່ຕັ້ງບ່ອນດຳເນີນກິດຈະການ;
- ກິດຈະການທີ່ໄດ້ຮັບອະນຸຍາດໃຫ້ລົງທຶນ;
- ຮູບການລົງທຶນ;
- ປະເພດ, ຮູບການ ແລະ ຮູບແບບ ຂອງວິສາຫະກິດ
- ຊື່ຜູ້ຖືຮຸ້ນ ແລະ ກຳນົດອັດຕາສ່ວນການຖືຮຸ້ນ (ເປັນເປີເຊັນຂອງທຶນຈົດທະບຽນ);
- ທຶນທັງໝົດ ແລະ ທຶນຈົດທະບຽນ ກຳນົດເປັນຫົວໜ່ວຍເງິນກີບ. ໃນກໍລະນີ ຜູ້ລົງທຶນ ແຈ້ງທຶນທັງໝົດ ແລະ ທຶນຈົດທະບຽນ ເປັນຫົວໜ່ວຍເງິນຕາຕ່າງປະເທດ ແມ່ນໃຫ້ຄິດໄລ່ເປັນເງິນກີບ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດອອກໃນມື້ອອກໃບທະບຽນສຳປະທານ;
- ພັນທະທາງດ້ານພາສີ ແລະ ອາກອນ;
- ພັນທະດ້ານອື່ນໆ (ຖ້າມີ);
- ນະໂຍບາຍສົ່ງເສີມອາກອນທີ່ໄດ້ຮັບ (ຖ້າມີ);
- ລະຫັດໃບທະບຽນສຳປະທານ (ແມ່ນອັນດຽວກັນກັບເລກທີຂອງໃບທະບຽນສຳປະທານ);
- ເລກລະຫັດປະຈຳຕົວວິສາຫະກິດ;
- ເລກປະຈຳຕົວຜູ້ເສັຍອາກອນ;
- ເນື້ອໃນອື່ນໆ ຕາມສະພາບຈຸດພິເສດຂອງແຕ່ລະກິດຈະການ.

ລະຫັດໃບທະບຽນສຳປະທານ ຂອງແຕ່ລະວິສາຫະກິດ ແມ່ນນຳໃຊ້ລະຫັດດຽວກັນຂອງທຸກຂະແໜງການ ເພື່ອຈຸດປະສົງຂອງການຕິດຕາມ ແລະ ຄຸ້ມຄອງວິສາຫະກິດ. ສຳລັບໃນໄລຍະທີ່ບໍ່ທັນມີລະບົບເຄືອຄ່າຍເຊື່ອມໂຍງກັນລະຫວ່າງພາກສ່ວນກ່ຽວຂ້ອງໃນການອອກລະຫັດໃບທະບຽນສຳປະທານທີ່ເປັນເອກະພາບ ໃຫ້ນຳໃຊ້ລະຫັດ ຫລື ເລກປະຈຳຕົວ ຂອງແຕ່ລະຂະແໜງການ ທີ່ມີໃນປະຈຸບັນໄປຈົນກວ່າຈະມີລະບົບຖານຂໍ້ມູນທີ່ເປັນເອກະພາບ.

## ມາດຕາ 18. ເງື່ອນໄຂການໂອນຮຸ້ນ ຫລື ຮ່ວມທຶນ ໃນກິດຈະການສຳປະທານ

ວິສາຫະກິດ ທີ່ມີຈຸດປະສົງໂອນສິດສຳປະທານ, ໂອນຮຸ້ນ ຫລື ດັດແກ້ປ່ຽນແປງສັນຍາສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນວັກສຸດທ້າຍຂອງມາດຕາ 26 ແລະ 27 ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຕ້ອງນຳສະເໜີຕໍ່ຂະແໜງການແຜນການ ແລະ ການລົງທຶນ ເພື່ອພິຈາລະນາຮັບຮອງເອົາ ຕາມເງື່ອນໄຂທີ່ວິສາຫະກິດ ດັ່ງກ່າວ:

1. ໄດ້ຖອກທຶນຈົດທະບຽນຢ່າງຄົບຖ້ວນຕາມທີ່ກຳນົດໃນໃບທະບຽນສຳປະທານ;
2. ໄດ້ຊຳລະອາກອນ ຢ່າງເປັນປົກກະຕິ ແລະ ຄົບຖ້ວນ;
3. ໄດ້ຊຳລະຄ່າເຊົ່າ, ຄ່າສຳປະທານ ເປັນປົກກະຕິ;
4. ໄດ້ປະຕິບັດໜ້າວຽກຕ່າງໆ ຕາມຕາຕະລາງເຄື່ອນໄຫວວຽກງານ ໃນແຕ່ລະໄລຍະ.

# ໝວດທີ 5
# ການສ້າງ ແລະ ພິຈາລະນາ ບັນຊີຮຽກການລົງທຶນ

## ມາດຕາ 19. ການສ້າງບັນຊີຮຽກການລົງທຶນ

ການສ້າງບັນຊີຮຽກການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 29 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ແນະນຳ, ຊຸກຍູ້ ຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເພື່ອຄົ້ນຄວ້າ ແລະ ສ້າງ ຫລື ປັບປຸງ ບັນຊີຮຽກການລົງທຶນ;
2. ຂະແໜງການກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ຕ້ອງສົ່ງບັນຊີຮຽກການລົງທຶນຂອງຕົນ ໃຫ້ຂະແໜງການແຜນການ ແລະ ການລົງທຶນ ພາຍໃນ ເດືອນ ເມສາ ຂອງທຸກໆປີ;
3. ຂະແໜງການແຜນການ ແລະ ການລົງທຶນ ຮັບໂຮມ, ຄັດເລືອກ ບັນຊີດັ່ງກ່າວ ແລ້ວນຳສະເໜີລັດຖະບານ ຫລື ອົງການປົກຄອງແຂວງ, ນະຄອນ ຕາມພາລະບົດບາດ ແລະ ຂອບເຂດສິດຂອງຕົນ.

ການສ້າງບັນຊີຮຽກການລົງທຶນດັ່ງກ່າວ ຕ້ອງຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

## ມາດຕາ 20. ຂອບເຂດສິດໃນການຮັບຮອງບັນຊີຮຽກການລົງທຶນ

ການພິຈາລະນາຮັບຮອງບັນຊີໂຄງການ ຫລື ກິດຈະການຮຽກການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 31 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດຕາມຂອບເຂດຄວາມຮັບຜິດຊອບ ຂອງແຕ່ລະຂັ້ນ ດັ່ງນີ້:

- ໂຄງການ ຫລື ກິດຈະການ ທີ່ມີມູນຄ່າການລົງທຶນ ຫຼາຍກວ່າ ຊາວ ລ້ານໂດລາສະຫະລັດ ຂື້ນໄປ ຕ້ອງຜ່ານການຮັບຮອງຂອງ ລັດຖະບານ;
- ໂຄງການ ຫລື ກິດຈະການ ທີ່ມີມູນຄ່າການລົງທຶນ ແຕ່ ຫ້າ ລ້ານ ໂດລາສະຫະລັດ ຫາ ຊາວ ລ້ານ ໂດລາສະຫະລັດ ໃຫ້ຜ່ານການຮັບຮອງຂອງ ກະຊວງແຜນການ ແລະ ການລົງທຶນ;
- ໂຄງການ ຫລື ກິດຈະການ ທີ່ມູນຄ່າຫຼຸດ ຫ້າ ລ້ານໂດລາສາຫະລັດລົງມາ ໃຫ້ຜ່ານການຮັບຮອງ ຂອງອົງການປົກຄອງແຂວງ, ນະຄອນ.

**ມາດຕາ 21. ການອະນຸມັດການລົງທຶນໃນໂຄງການ ຫລື ກິດຈະການຮຽກການລົງທຶນ**

ການອະນຸຍາດການລົງທຶນໃນໂຄງການ ຫລື ກິດຈະການຮຽກການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 32 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

- ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸມັດໂຄງການ ຫລື ກິດຈະການຮຽກການລົງທຶນ ກ່ຽວກັບກິດຈະການທົ່ວໄປ.
- ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸມັດ ໂຄງການ ຫລື ກິດຈະການຮຽກການລົງທຶນ ກ່ຽວກັບກິດຈະການສຳປະທານ.

## ໝວດທີ 6
## ຄະນະສົ່ງເສີມການລົງທຶນ ແລະ ການບໍລິການການລົງທຶນປະຕູດຽວ

**ມາດຕາ 22. ຄະນະສົ່ງເສີມການລົງທຶນ**

ຄະນະສົ່ງເສີມການລົງທຶນ ຊຶ່ງຂຽນຫຍໍ້ວ່າ "ຄລທ" ສ້າງຕັ້ງຂື້ນ ເພື່ອສົ່ງເສີມ ແລະ ຄຸ້ມຄອງວຽກງານການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ ຊຶ່ງປະກອບມີ ຄະນະສົ່ງເສີມການລົງທຶນ ຂັ້ນສູນກາງ ແລະ ຄະນະສົ່ງເສີມການລົງທຶນ ຂັ້ນທ້ອງຖິ່ນ.

ຄະນະສົ່ງເສີມການລົງທຶນ ປະກອບດ້ວຍ: ປະທານ, ຮອງປະທານ ແລະ ຄະນະຈຳນວນໜຶ່ງດັ່ງນີ້:

- ປະທານຄະນະສົ່ງເສີມການລົງທຶນ ຂັ້ນສູນກາງ ແມ່ນ ລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ເປັນປະທານໂດຍຕຳແໜ່ງ ແລະ ຮອງປະທານ ແມ່ນລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ການລົງທຶນ ຜູ້ຊີ້ນຳວຽກງານລົງທຶນເປັນຮອງປະທານໂດຍຕຳແໜ່ງ.
- ປະທານຄະນະສົ່ງເສີມການລົງທຶນຂັ້ນທ້ອງຖິ່ນ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນເປັນປະທານໂດຍຕຳແໜ່ງ ແລະ ຮອງປະທານແມ່ນຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຜູ້ຊີ້ນຳວຽກງານເສດຖະກິດເປັນຮອງປະທານໂດຍຕຳແໜ່ງ.

- ຄະນະຂອງ ຄະນະສົ່ງເສີມການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ ປະກອບດ້ວຍ ຜູ້ຕາງໜ້າຈາກຂະແໜງການ ດັ່ງນີ້: ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການການຕ່າງປະເທດ, ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່, ຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການໄປສະນີ, ໂທລະຄົມ ແລະ ໄປສະນີ, ຂະແໜງການສຶກສາທິການ, ຂະແໜງການສາທາລະນະສຸກ, ຂະແໜງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ຂະແໜງການວິທະຍາສາດ ແລະ ເຕັກໂນໂລຢີ, ຂະແໜງການທ່ອງທ່ຽວແຫ່ງຊາດ, ຂະແໜງການຄຸ້ມຄອງທີ່ດິນແຫ່ງຊາດ, ຂະແໜງການການຕ່າງປະເທດ, ຂະແໜງການປ້ອງກັນຊາດ, ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ, ຂະແໜງຍຸຕິທຳ ແລະ ຂະ ແໜງການທະນາຄານແຫ່ງ ສປປ ລາວ, ຊຶ່ງຢູ່ຂັ້ນສູນກາງ ມີລັດຖະມົນຕີຊ່ວຍວ່າການ ແລະ ພະນັກງານຂັ້ນກົມ ຫລື ຂັ້ນພະແນກກ່ຽວຂ້ອງຂອງແຕ່ລະຂະແໜງການ ເປັນຄະນະຂອງຄະນະສົ່ງເສີມການລົງທຶນຂັ້ນສູນກາງ, ສຳລັບຢູ່ຂັ້ນທ້ອງຖິ່ນມີພະນັກງານຂັ້ນພະແນກເປັນຄະນະຂອງຄະນະສົ່ງເສີມການລົງທຶນຂັ້ນທ້ອງຖິ່ນ.
- ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ, ນະຄອນ ເປັນກົງຈັກຊ່ວຍວຽກ ແລະ ເປັນເສນາທິການ ໃຫ້ແກ່ຄະນະສົ່ງເສີມການລົງທຶນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການການລົງທຶນປະຕູດຽວຂອງຂະແໜງການແຜນການ ແລະ ການລົງທຶນ.
- ຫ້ອງການບໍລິການການລົງທຶນປະຕູດຽວ ຢູ່ຂັ້ນສູນກາງ ແລະ ຢູ່ຂັ້ນທ້ອງຖິ່ນ ຂອງຂະແໜງການແຜນການ ແລະ ການລົງທຶນ ເປັນກອງເລຂານຸການຂອງ ຄະນະສົ່ງເສີມການລົງທຶນ .

ຄະນະສົ່ງເສີມການລົງທຶນຂັ້ນສູນກາງ ໃຊ້ຕາປະທັບດຽວກັນກັບຕາປະທັບຂອງ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ແລະ ຄະນະສົ່ງເສີມການລົງທຶນຂັ້ນທ້ອງຖິ່ນໃຊ້ຕາປະທັບດຽວກັນກັບຕາປະທັບຂອງເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຕາມພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 23. ສິດ ແລະ ໜ້າທີ່ ຂອງຄະນະສົ່ງເສີມການລົງທຶນ**

ຄະນະສົ່ງເສີມການລົງທຶນມີສິດ ແລະ ໜ້າທີ່ ດັ່ງນີ້:

- ດຳເນີນກອງປະຊຸມພິຈາລະນາວຽກງານການລົງທຶນ ປະຈຳອາທິດ, ໃນບາງກໍລະນີ ກອງປະຊຸມອາດຈະຈັດຂຶ້ນໂດຍອີງໃສ່ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ;
- ຄົ້ນຄວ້າ, ລາຍງານ, ພິຈາລະນາ, ຕົກລົງອະນຸຍາດ ຫລື ປະຕິເສດ ກິດຈະການການລົງທຶນຕາມຂອບເຂດສິດຂອງຕົນ;

- ຄົ້ນຄວ້າ, ລາຍງານ, ພິຈາລະນາ, ຕົກລົງອະນຸຍາດ ຫລື ປະຕິເສດ ການດັດແກ້, ການໂອນຮຸ້ນ, ການຕໍ່ອາຍຸ, ປັບປຸງ, ປ່ຽນແປງ, ໂຈະ ຫລື ຍົກເລີກ ກິດຈະການການລົງທຶນ ຫລື ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ ແລະ ສັນຍາສຳປະທານອື່ນໆ ຕາມຂອບເຂດສິດຂອງຕົນ ;
- ພິຈາລະນາຮັບຮອງບັນຊີໂຄງການ ຫລື ກິດຈະການ ຮຽກການລົງທຶນ ຕາມຂອບເຂດສິດຂອງຕົນ;
- ເຊັນ ໃບທະບຽນສຳປະທານ ຫລື ໃບອະນຸຍາດຕ່າງໆ ຕາມພາລະບົດບາດຂອງຕົນ;
- ລົງນາມໃນເອກະສານນິຕິກຳຕ່າງໆ ຄື ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ ແລະ ສັນຍາສຳປະທານອື່ນໆ ຕາມການມອບສິດຂອງລັດຖະບານ;
- ຕິດຕາມ, ກວດກາ, ປະເມີນຜົນ, ຊຸກຍູ້ ແລະ ແນະນຳບັນດາວິສາຫະກິດ ທີ່ດຳເນີນກິດຈະການການລົງທຶນໃຫ້ປະຕິບັດຖືກຕ້ອງຕາມສັນຍາ, ລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ;
- ຕິດຕາມ, ກວດກາການສົ່ງເສີມ ແລະ ຄຸ້ມຄອງການອອກອະນຸຍາດການລົງທຶນຂອງຄະນະສົ່ງເສີມການລົງທຶນ ໃນແຕ່ລະຂັ້ນ;
- ອອກແຈ້ງການໂຈະ ຫລື ຍົກເລີກ ໃບທະບຽນສຳປະທານ ຫລື ໃບອະນຸຍາດຕ່າງໆ ທີ່ຂັດກັບກົດໝາຍ, ລະບຽບນິຕິກຳ, ບົດບັນທຶກຄວາມເຂົ້າໃຈ, ສັນຍາພັດທະນາໂຄງການ ຫລື ສັນຍາສຳປະທານ;
- ດຳເນີນກອງປະຊຸມສະຫລຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດວຽກງານຂອງ ຫ້ອງການບໍລິການການລົງທຶນປະຕູດຽວ, ວຽກງານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນແຕ່ລະໄຕມາດ, ງວດ ແລະ ປີ;
- ຕົກລົງຍ້ອງຍໍ ຫລື ລົງວິໄນ ຕໍ່ພະນັກງານຂອງຫ້ອງການບໍລິການການລົງທຶນປະຕູດຽວ ຂອງຂະແໜງແຜນການ ແລະ ການລົງທຶນ;
- ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 24. ຫ້ອງການບໍລິການການລົງທຶນປະຕູດຽວ**

ຫ້ອງການບໍລິການການລົງທຶນປະຕູດຽວ ແມ່ນຖືກສ້າງຕັ້ງຂຶ້ນໂດຍສອດຄ່ອງກັບມາດຕາ 44 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ໂດຍແມ່ນຫ້ອງການບໍລິການການລົງທຶນປະຕູດຽວ ທີ່ຕັ້ງຢູ່ຂະແໜງແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນໃຈກາງ, ຊຶ່ງແມ່ນສະຖານທີ່ລວມສູນ ແລະ ບ່ອນປະຈຳການຂອງບັນດາພະນັກງານບໍລິການປະຕູດຽວ ຈາກຂະແໜງການຕົ້ນຕໍ ຄື: ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການອຸດສະຫະກຳ ແລະການຄ້າ, ຂະແໜງການການເງິນ, ຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການການຕ່າງປະເທດ ແລະ ຂະແໜງການອື່ນໆ ທີ່ເຫັນວ່າມີຄວາມຈຳເປັນໃນແຕ່ລະໄລຍະ ຕາມການເຫັນດີຂອງປະທານຄະນະສົ່ງເສີມການລົງທຶນ.

ຫ້ອງການບໍລິການການລົງທຶນປະຕູດຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ເກັບກຳ, ລວບລວມ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບການລົງທຶນ ໃຫ້ແກ່ຜູ້ລົງທຶນ ໂດຍການປະສານກັບບັນດາຂະແໜງການກ່ຽວຂ້ອງ;
- ອະທິບາຍຊີ້ແຈງດ້ານກົດໝາຍ, ລະບຽບນິຕິກຳຕ່າງໆທີ່ກ່ຽວຂ້ອງ ກັບວຽກງານການລົງທຶນ ໃຫ້ຜູ້ລົງທຶນ;
- ອະທິບາຍ ແລະ ແນະນຳວິທີການປະກອບເອກະສານຕາມແບບພິມທີ່ໄດ້ກຳນົດໄວ້ ແລະ ເອກະສານຕ່າງໆ ກ່ຽວກັບວຽກງານການລົງທຶນ;
- ຮັບຄຳຮ້ອງການລົງທຶນ ໃນກິດຈະການທົ່ວໄປ ແລະ ກິດຈະການສຳປະທານ;
- ຮັບຄຳຮ້ອງການຂໍປ່ຽນແປງພື້ນຖານທາງດ້ານນິຕິກຳ ໃນກິດຈະການທົ່ວໄປ ແລະ ກິດຈະການສຳປະທານ;
- ຮັບຄຳຮ້ອງຂໍນະໂຍບາຍດ້ານພາສີ ຂອງວິສາຫະກິດທີ່ລົງທຶນໃນກິດຈະການທົ່ວໄປ ແລະ ກິດຈະການສຳປະທານ;
- ຮັບ ແລະ ບໍລິການ ຄຳຮ້ອງຂໍວີຊາທຸລະກິດ, ບັດແຮງງານ ແລະ ບັດພັກເຊົາຂອງຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍຄອບຄົວ, ວິຊາການ ແລະ ແຮງງານຕ່າງປະເທດ;
- ອອກໃບຢັ້ງຢືນການຮັບເອກະສານ ພາຍຫລັງທີ່ໄດ້ ກວດກາຄວາມຄົບຖ້ວນຂອງເອກະສານຕ່າງໆ ຕາມແບບພິມທີ່ໄດ້ກຳນົດໄວ້ ແລະ ລະບຸວັນເວລາການນັດໝາຍມາຮັບເອົາຄຳຕອບຕໍ່ເອກະສານທີ່ຜູ້ລົງທຶນ ຫຼື ວິສາຫະກິດ ໄດ້ສະເໜີ;
- ນຳສົ່ງ ເອກະສານ ຫລື ຄຳຮ້ອງຕ່າງໆ ໃຫ້ຂະແໜງການກ່ຽວຂ້ອງຂອງຕົນ ພິຈາລະນາ.
- ມອບຈົດໝາຍຕອບຜູ້ລົງທຶນ, ມອບໃບທະບຽນວິສາຫະກິດ, ໃບທະບຽນສຳປະທານ, ໃບຮັບຮອງການໃຫ້ນະໂຍບາຍຍົກເວັ້ນພາສີ ແລະ ໃບອະນຸຍາດຕ່າງໆທີ່ກ່າວມາຂ້າງເທິງ ໃຫ້ແກ່ຜູ້ລົງທຶນ ຫລື ວິສາຫະກິດ ພາຍຫຼັງທີ່ຂະແໜງການກ່ຽວຂ້ອງໄດ້ພິຈາລະນາ ແລະ ຕົກລົງ;
- ກະກຽມວາລະກອງປະຊຸມ ແລະ ສັງລວມບັນດາເອກະສານສຳລັບກອງປະຊຸມ ກ່ອນນຳສະເໜີຕໍ່ ຄະນະສົ່ງເສີມການລົງທຶນ ເພື່ອພິຈາລະນາ ຈັດກອງປະຊຸມ;
- ອອກຈົດໝາຍເຊີນຄະນະສົ່ງເສີມການລົງທຶນ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມກອງປະຊຸມ;
- ບັນທຶກກອງປະຊຸມແລະນຳສົ່ງມະຕິກອງປະຊຸມໃຫ້ແກ່ຄະນະສົ່ງເສີມການລົງທຶນ ແລະ ຂະແໜງການທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກອງປະຊຸມ;
- ປະສານງານເອົາເລກລະຫັດປະຈຳຕົວວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ປະສານງານເອົາເລກປະຈຳຕົວຂອງຜູ້ເສຍອາກອນນຳຂະແໜງການການເງິນ.
- ປະຕິບັດໜ້າທີ່ວຽກງານອື່ນໆ ຕາມການມອບໝາຍຂອງ ຄະນະສົ່ງເສີມການລົງທຶນ.

ຫ້ອງການບໍລິການການລົງທຶນປະຕູດຽວຂອງຂະແໜງແຜນການ ແລະ ການລົງ ທຶນຂັ້ນສູນກາງ ແມ່ນການຈັດຕັ້ງໜຶ່ງ ທີ່ສັງກັດຢູ່ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ໂດຍແມ່ນ ຫົວໜ້າກົມສົ່ງເສີມການລົງທຶນ ເປັນຫົວໜ້າຫ້ອງການ ໂດຍຕໍາ ແໜ່ງ.

ຫ້ອງການບໍລິການການລົງທຶນປະຕູດຽວ ຂອງຂະແໜງແຜນການ ແລະ ການລົງທຶນ ຂັ້ນທ້ອງຖິ່ນແມ່ນການຈັດຕັ້ງໜຶ່ງ ທີ່ສັງກັດຢູ່ພະແນກແຜນການ ແລະ ການລົງທຶນ ໂດຍແມ່ນຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນຫົວໜ້າຫ້ອງການ ໂດຍຕໍາແໜ່ງ.

ສໍາລັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການບໍລິການລົງທຶນປະຕູດຽວທີ່ຕັ້ງຢູ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ປະຕິບັດຕາມລະບຽບການຂອງພາກສ່ວນດັ່ງກ່າວ.

**ມາດຕາ 25. ເງື່ອນໄຂມາດຕະຖານ ຂອງພະນັກງານ ຫ້ອງການບໍລິການການລົງທຶນປະຕູດຽວ**

ພະນັກງານຫ້ອງການບໍລິການການລົງທຶນປະຕູດຽວແມ່ນພະນັກງານລະດັບຂັ້ນພະແນກ ຫລື ນັກວິຊາການ ທີ່ຖືກມອບໝາຍຈາກຂະແໜງການທີ່ກ່ຽວຂ້ອງ ແລະ ໄດ້ຮັບການແຕ່ງຕັ້ງໂດຍປະທານຄະນະສົ່ງເສີມການລົງທຶນ, ຊຶ່ງຕ້ອງເປັນຜູ້ມີເງື່ອນໄຂມາດຕະຖານ ດັ່ງນີ້:

1. ມີລະດັບການສຶກສາປະລິນຍາຕີ ຂຶ້ນໄປ;
2. ເປັນຜູ້ມີລະດັບຄວາມຮູ້ຄວາມສາມາດ ແລະ ກໍາແໜ້ນແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໄດ້ເປັນຢ່າງດີ;
3. ກໍາແໜ້ນລະບຽບກົດໝາຍ ແລະ ວຽກງານຂອງຂະແໜງການຕົນ ເປັນຢ່າງດີ;
4. ຮູ້ພາສາອັງກິດ ແລະ ສາມາດນໍາໃຊ້ລະບົບໄອທີ ໃນລະດັບທີ່ແນ່ນອນສົມຄວນ;
5. ມີຄຸນສົມບັດ ແລະ ມະນຸດສໍາພັນດີ;
6. ມີສຸຂະພາບດີ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງພະນັກງານ ຫ້ອງການບໍລິການການລົງທຶນປະຕູດຽວ**

1. ພະນັກງານ ຫ້ອງການບໍລິການການລົງທຶນປະຕູດຽວ ມີສິດ ດັ່ງນີ້:
   - ເຂົ້າຮ່ວມກອງປະຊຸມຕ່າງໆ ທີ່ກ່ຽວຂ້ອງກັບວຽກງານການລົງທຶນ;
   - ປະກອບຄໍາເຫັນ ເຂົ້າໃນການຈັດຕັ້ງປະຕິບັດ ວຽກງານການບໍລິການການລົງທຶນ;
   - ໄດ້ຮັບການຝຶກອົບຮົມ, ຖອດຖອນບົດຮຽນກ່ຽວກັບ ການຄຸ້ມຄອງວຽກງານລົງທຶນຢູ່ພາຍໃນ ແລະ ຕ່າງປະເທດ;
   - ຕົກລົງບາງບັນຫາ ຕາມການມອບໝາຍຂອງຂະແໜງການຂອງຕົນ;
   - ປະສານງານ ແລະ ທວງຖາມເອົາຄໍາຕອບ ຈາກຂະແໜງການຂອງຕົນ ທີ່ກ່ຽວຂ້ອງກັບ ວຽກບໍລິການທີ່ຕົນຮັບຜິດຊອບ;

- ສະເໜີຄະນະສົ່ງເສີມການລົງທຶນ ເພື່ອປັບປຸງແກ້ໄຂ ກົນໄກການປະສານງານ ຂອງຂະແໜງການຕົນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
- ອະທິບາຍ ຊີ້ແຈ້ງຕໍ່ຄະນະສົ່ງເສີມການລົງທຶນ ໃນກໍລະນີ ທີ່ບໍ່ໄດ້ຮັບຄວາມເປັນທຳ;
- ໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆໃນການປະກອບສ່ວນວຽກງານການລົງທຶນ ເປັນແຕ່ລະໄລຍະຕາມຄວາມເໝາະສົມ;
- ນຳໃຊ້ສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ແລະ ຕາມລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.

2. ພະນັກງານຫ້ອງການບໍລິການການລົງທຶນປະຕູດຽວ ມີໜ້າທີ່ ດັ່ງນີ້ :
- ເກັບກຳຂໍ້ມູນ ແລະ ເອກະສານຕ່າງໆ ກ່ຽວກັບວຽກງານການລົງທຶນ ທີ່ກ່ຽວຂ້ອງກັບຂະແໜງການຕົນ ສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວຢ່າງຄົບຖ້ວນ;
- ສະໜອງຂໍ້ມູນຂ່າວສານ, ອະທິບາຍກ່ຽວກັບລະບຽບກົດໝາຍ ທີ່ພົວພັນກັບວຽກງານວິຊາສະເພາະຂອງຂະແໜງການຕົນ;
- ກວດກາເບິ່ງຄວາມຄົບຖ້ວນຂອງເອກະສານ ຕາມແບບພິມທີ່ໄດ້ກຳນົດໄວ້ ແລ້ວນຳສົ່ງໄປຍັງຂະແໜງການຂອງຕົນເພື່ອສືບຕໍ່ຄົ້ນຄວ້າພິຈາລະນາຕາມລະບຽບການ ແລະ ກົດໝາຍ.
- ລາຍງານວຽກງານຕ່າງໆ ທີ່ກ່ຽວກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂັ້ນເທິງຖັດຕົນ ເປັນປະຈຳແຕ່ລະວັນ, ອາທິດ, ເດືອນ;
- ຕິດຕາມ, ປະສານງານກັບຂະແໜງການຕົນໃນການໃຫ້ບໍລິການການລົງທຶນ ໂດຍສອດຄ່ອງກັບສິດ ແລະ ພາລະບົດບາດຂອງຕົນ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ແລະ ຕາມລະບຽບການ ແລະ ກົດໝາຍຂອງ ສປປ ລາວ.

## ໝວດທີ 7
## ຫ້ອງການຜູ້ຕາງໜ້າ

### ມາດຕາ 27. ຫ້ອງການຜູ້ຕາງໜ້າ

ຫ້ອງການຜູ້ຕາງໜ້າ ທີ່ສ້າງຕັ້ງຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແມ່ນຕົວແທນຂອງນິຕິບຸກຄົນ ທີ່ຈົດທະບຽນຢູ່ຕ່າງປະເທດທີ່ມີຄວາມສົນໃຈເຂົ້າມາລົງທຶນໃນ ສປປ ລາວ ເພື່ອເກັບກຳຂໍ້ມູນຕ່າງໆ ກ່ຽວກັບການລົງທຶນ ແລະ/ຫລື ເຮັດໜ້າທີ່ປະສານງານລະຫວ່າງຂະແໜງການກ່ຽວຂ້ອງຂອງລັດຖະບານກັບບໍລິສັດ ແມ່ ຢູ່ຕ່າງປະເທດ, ຊຶ່ງຂະແໜງການແຜນການ ແລະ ການລົງທຶນ ຂັ້ນສູນກາງ ເປັນຜູ້ພິຈາລະນາ ແລະ ອອກໃບທະບຽນຫ້ອງການຜູ້ຕາງໜ້າດັ່ງກ່າວ ໂດຍບໍ່ຜ່ານກອງປະຊຸມຄະນະສົ່ງເສີມການລົງທຶນ.

ໃບທະບຽນຫ້ອງການຜູ້ຕາງໜ້າ ປະກອບດ້ວຍ ເລກລະຫັດປະຈຳຕົວວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ, ຊຶ່ງຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ປະສານງານເອົາເລກລະຫັດປະຈຳຕົວວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ປະສານງານເອົາເລກປະຈຳຕົວຂອງຜູ້ເສຍອາກອນ ນຳຂະແໜງການການເງິນ. ພາຍຫລັງໄດ້ອອກໃບທະບຽນຫ້ອງການຜູ້ຕາງໜ້າແລ້ວ, ຂະແໜງການແຜນການ ແລະ ການລົງທຶນ ຕ້ອງອອກໃບອະນຸຍາດຄວັດຕາປະທັບພ້ອມ ເພື່ອໃຫ້ຂະແໜງການປ້ອງກັນຄວາມສະຫງົບຄວັດຕາປະທັບບໍ່ເກີນ ເຈັດ ວັນລັດຖະການ ພ້ອມທັງສຳເນົາສົ່ງໃບທະບຽນ ແລະ ເອກະສານທີ່ກ່ຽວຂ້ອງຂອງຫ້ອງການຜູ້ຕາງໜ້າດັ່ງກ່າວ ໃຫ້ຂະແໜງການປ້ອງກັນຄວາມສະຫງົບຕິດຕາມການເຄື່ອນໄຫວ ຂອງຜູ້ລົງທຶນຕາມພາລະບົດບາດຂອງຕົນ.

ສຳລັບນິຕິບຸກຄົນຕ່າງປະເທດ ທີ່ເຊັນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ກັບລັດຖະບານໃນກໍລະນີ ຍັງບໍ່ທັນມີນິຕິບຸກຄົນຢູ່ລາວ ຕ້ອງໄດ້ສ້າງຕັ້ງຫອ້ງການຜູ້ຕາງໜ້າຂື້ນຢູ່ລາວ ເພື່ອອຳນວຍຄວາມສະດວກ ເປັນສື່ກາງໃຫ້ແກ່ພາກລັດໃນການຕິດຕໍ່ປະສານງານກັບບໍລິສັດແມ່ຢູ່ຕ່າງປະເທດ (ບໍລິສັດທີ່ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ກັບ ລັດຖະບານ).

### ມາດຕາ 28. ອາຍຸຂອງຫ້ອງການຜູ້ຕາງໜ້າ

ອາຍຸຂອງຫ້ອງການຜູ້ຕາງໜ້າ ແມ່ນ 1 ປີ ແລະ ສາມາດຂໍຕໍ່ໄດ້ 2 ຄັ້ງ ລວມອາຍຸທັງໝົດຂອງຫ້ອງການຜູ້ຕາງໜ້າແມ່ນບໍ່ໃຫ້ເກີນ 3 ປີ, ຍົກເວັ້ນກໍລະນີບໍລິສັດແມ່ຂອງຫ້ອງການຜູ້ຕາງໜ້ານັ້ນ ມີບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາເຊັນກັບລັດຖະບານ ເພື່ອສຳຫຼວດ ແລະ ເກັບກຳຂໍ້ມູນສະເພາະຂອງໂຄງການ ແມ່ນສາມາດຂໍຕໍ່ໄດ້ຕາມອາຍຸຂອງບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ທີ່ເຊັນກັບລັດຖະບານ.

ສຳລັບຫ້ອງການຜູ້ຕາງໜ້າໃຫ້ບໍລິສັດແມ່ຢູ່ຕ່າງປະເທດ ທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບທີ່ໄດ້ຮັບອະນຸຍາດຜ່ານມາ ຢູ່ສປປ ລາວ ແມ່ນສາມາດຂໍຕໍ່ອາຍຸໄດ້ຕື່ມອີກ 3 ຄັ້ງ ນັບແຕ່ວັນດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ. ໃນບາງກໍລະນີທີ່ຈຳເປັນກະຊວງແຜນການ ແລະ ການລົງທຶນອາດພິຈາລະນາຕໍ່ອາຍຸໃຫ້ເປັນກໍລະນີສະເພາະ. ພາຍຫຼັງສິ້ນສຸດອາຍຸຂອງຫ້ອງການຜູ້ຕາງໜ້າແລ້ວ, ຫາກບໍລິສັດແມ່ມີຄວາມສົນໃຈລົງທຶນຕ້ອງຍື່ນຄຳຮ້ອງຂໍລົງທຶນຕາມລະບຽບການ ແລະ ກົດໝາຍຂອງສປປ ລາວ.

ອາຍຸຂອງຫ້ອງການຜູ້ຕາງໜ້າ ອາດຈະສິ້ນສຸດລົງກ່ອນກຳນົດເວລາທີ່ກຳນົດໄວ້ ໃນໃບທະບຽນຫ້ອງການຜູ້ຕາງໜ້າ ຕາມການສະເໜີຂອງຜູ້ລົງທຶນ ຫລື ຕາມການຕົກລົງຂອງຂະແໜງການແຜນການ ແລະ ການລົງທຶນ ໃນກໍລະນີຜູ້ລົງທຶນ ຫລື ຫ້ອງການຜູ້ຕາງໜ້າດັ່ງກ່າວ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍຂອງສປປ ລາວ.

**ມາດຕາ 29. ຂອບເຂດສິດ ແລະ ໜ້າທີ່ຂອງຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າມີຂອບເຂດສິດ ແລະ ໜ້າທີ່ ດັ່ງນີ້:

- ເກັບກຳຂໍ້ມູນ ແລະ ສຶກສາຄວາມເປັນໄປໄດ້ໃນການລົງທຶນ;
- ຕິດຕໍ່ພົວພັນທັງພາຍໃນ ແລະ ຕ່າງປະເທດ ເພື່ອອຳນວຍຄວາມສະດວກໃຫ້ບໍລິສັດແມ່;
- ຕິດຕາມການປະຕິບັດບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ;
- ໃນກໍລະນີ ທີ່ຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ ທີ່ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບ ລັດຖະບານມີສິດໄດ້ຮັບນະໂຍບາຍດ້ານພາສີ ໃນການນຳເຂົ້າເຄື່ອງມືອຸປະກອນ ທີ່ເປັນພາຫະນະກົນຈັກໜັກຮັບໃຊ້ວຽກງານວິຊາສະເພາະຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາດັ່ງກ່າວ.

**ມາດຕາ 30. ຂໍ້ຫ້າມໃນການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າ**

ຫ້ອງການຜູ້ຕາງໜ້າ ຫ້າມບໍ່ໃຫ້ເຄື່ອນໄຫວ ດັ່ງນີ້:

- ດຳເນີນທຸລະກິດ ຫລື ເຄື່ອນໄຫວທາງດ້ານການຄ້າໃດໜຶ່ງ ນອກຈາກການເຄື່ອນໄຫວທີ່ໄດ້ຮັບອະນຸຍາດຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
- ສ້າງລາຍຮັບ;
- ອອກໃບຮັບເງິນ ຫລື ໃບຮຽກເກັບເງິນສຳລັບລາຍໄດ້ ຫລື ລາຍຮັບຕ່າງໆ;
- ປະກາດຕົນເອງຢູ່ໃນຖານະບໍ່ສາມາດໃຊ້ໜີ້ສິນຕາມກຳນົດ ຫລື ປະກາດຕົນເອງລົ້ມລະລາຍ;

## ໝວດທີ 8
## ການສົ່ງເສີມການລົງທຶນ ດ້ານພາສີ ແລະ ອາກອນ

**ມາດຕາ 31. ກິດຈະການສົ່ງເສີມ**

ປະຕິບັດຕາມທີ່ໄດ້ກຳນົດໃນ ມາດຕາ 49 ຂອງກົດໝາຍສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ເພື່ອຄົ້ນຄວ້າ ແລະ ສ້າງເປັນບັນຊີລະອຽດ ແລ້ວສະເໜີຕໍ່ລັດຖະບານ ເພື່ອຮັບຮອງເອົາບັນຊີດັ່ງ ກ່າວໃຫ້ເປັນເອກະສານຊ້ອນທ້າຍເລກທີ 1 ຂອງດຳລັດສະບັບນີ້. ເອກະສານຊ້ອນທ້າຍດັ່ງກ່າວອາດຈະມີການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບເປັນຈິງໃນແຕ່ລະໄລຍະ.

**ມາດຕາ 32. ເຂດສົ່ງເສີມການລົງທຶນ**

ກະຊວງແຜນການ ແລະ ການລົງທຶນ ໂດຍການສົມທົບກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງຂັ້ນສູນກາງເປັນຜູ້ຄົ້ນຄວ້າ ແລະ ສ້າງບັນຊີລະອຽດກ່ຽວກັບເຂດ

ສົ່ງເສີມການລົງທຶນ ໃນແຕ່ລະໄລຍະແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ ບັນຊີດັ່ງກ່າວ ໃຫ້ເປັນເອກະສານຊ້ອນທ້າຍເລກທີ 2 ຂອງດຳລັດສະບັບນີ້.ເອກະສານຊ້ອນທ້າຍ ດັ່ງກ່າວ ອາດຈະມີການປັບປຸງເພື່ອໃຫ້ສອດຄ່ອງກັບສະພາບເປັນຈິງໃນແຕ່ລະໄລຍະ.

**ມາດຕາ 33. ນະໂຍບາຍດ້ານອາກອນ**

ການລົງທຶນໃນກິດຈະການສົ່ງເສີມ ແລະ ເຂດສົ່ງເສີມການລົງທຶນ ທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ ເລກທີ 1 ແລະ ເລກທີ 2 ຂອງດຳລັດສະບັບນີ້ ຖືກຍົກເວັ້ນອາກອນກຳໄລຕາມກຳນົດເວລາທີ່ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນຂອງ ສ ປປ ລາວ ທີ່ມີຜົນບັງຄັບໃຊ້ໃນແຕ່ລະໄລຍະ.

ນະໂຍບາຍ ແລະ ໄລຍະເວລາຍົກເວັ້ນອາກອນກຳໄລ ແມ່ນກຳນົດໄວ້ໃນໃບທະບຽນສຳປະທານ ຫລື ໃບທະບຽນວິສາຫະກິດ. ໄລຍະເວລາ ຍົກເວັ້ນອາກອນກຳໄລ ແມ່ນນັບແຕ່ວັນທີ່ວິສາຫະກິດ ມີລາຍຮັບ ເປັນຕົ້ນໄປ.

ສ່ວນການນຳເຂົ້າ ວັດຖຸດິບ, ອຸປະກອນ, ເຄື່ອງຈັກ ແລະ ອາໄຫລ່ ແລະ ພາຫະນະຮັບໃຊ້ການຜະລິດທາງກົງ, ການບໍລິການ, ການກໍ່ສ້າງໂຮງງານ, ຕຶກອາຄານ, ການສຳຫຼວດອອກແບບ, ການກໍ່ສ້າງ ຫລື ພັດທະນາໂຄງການ ແມ່ນປະຕິບັດຕາມລະບຽບ ແລະ ກົດໝາຍຂອງສປປ ລາວ.

**ມາດຕາ 34. ການຍົກເວັ້ນ ອາກອນກຳໄລ ສຳລັບກິດຈະການຜະລິດສິນຄ້າໃໝ່, ກິດຈະການ ຄົ້ນຄ້ວາ ແລະ ສ້າງເທັກໂນໂລຍີໃໝ່**

ກິດຈະການການຜະລິດສິນຄ້າໃໝ່ ໝາຍເຖິງການຜະລິດ, ການປຸງແຕ່ງວັດຖຸດິບ ພາຍໃນປະເທດ ໃຫ້ເປັນຜະລິດຕະພັນສຳເລັດຮູບທີ່ມີຍີ່ຫໍ້ໃໝ່ ດ້ວຍການນຳໃຊ້ກຳມະວິທີ ແລະ ເຕັກໂນໂລຍີໃໝ່ ເຂົ້າໃນການຜະລິດ ແລະ ປຸງແຕ່ງ; ຄວາມທັນສະໄໝຂອງກຳມະວິທີ ແລະ ເຕັກໂນໂລຍີ ລວມທັງຜະລິດຕະພັນທີ່ຜະລິດອອກມານັ້ນ ໄດ້ຮັບການຮັບຮອງ ແລະ ຢັ້ງຢືນດ້ານຄຸນນະພາບ ແລະ ມາດຕະຖານສາກົນ (ISO ຫຼື ມາດຕະຖານທີ່ສາກົນ ນຳໃຊ້) ຈາກອົງການທີ່ກ່ຽວຂ້ອງ. ໄລຍະການຍົກເວັ້ນອາກອນກຳໄລ ສຳລັບກິດຈະການການຜະລິດສິນຄ້າໃໝ່ ແມ່ນນັບແຕ່ປີມີກຳໄລ ເປັນຕົ້ນໄປ. ໃນກໍລະນີທີ່ ກິດຈະການດັ່ງກ່າວ ຫາກບໍ່ໄດ້ຮັບການຢັ້ງຢືນ ພາຍໃນໄລຍະເວລາ ສາມ ປີ, ໄລຍະຍົກເວັ້ນການເສຍອາກອນກຳໄລ ຈະນັບແຕ່ວັນດຳເນີນທຸລະກິດ ເປັນຕົ້ນໄປ.

ການຄົ້ນຄວ້າ ແລະ ການພັດທະນາເທັກໂນໂລຍີໃໝ່ ໝາຍເຖິງການລົງທຶນເຂົ້າໃນກິດຈະການກໍ່ສ້າງສູນຄົ້ນຄວ້າ ແລະ ສູນວິໄຈ, ຫ້ອງທົດລອງທາງດ້ານວິທະຍາສາດ ເພື່ອພັດທະນາຜະລິດຕະພັນ ຫລື ປະດິດຜະລິດຕະພັນຊະນິດໃໝ່ ໃຫ້ກາຍເປັນສິນຄ້າ. ໄລຍະການຍົກເວັ້ນອາກອນກຳໄລ ສຳລັບກິດຈະການການຜະລິດສິນຄ້າໃໝ່ ແມ່ນນັບແຕ່ປີມີກຳໄລເປັນຕົ້ນໄປ.

**ມາດຕາ 35. ການຍົກເວັ້ນອາກອນກຳໄລ ຍ້ອນການນຳເອົາກຳໄລສຸດທິໄປລົງທຶນຕໍ່**

ວິສາຫະກິດ ທີ່ພົ້ນຈາກໄລຍະທີ່ຖືກຍົກເວັ້ນອາກອນກຳໄລ ຫາກນຳເອົາກຳໄລສຸດທິ ຫລັງຈາກເສຍອາກອນກຳໄລປະຈຳປີແລ້ວ ໄປລົງທຶນຕໍ່ເພື່ອເພີ້ມກິດຈະການ ຫລື ຂະຫຍາຍກິດຈະການອອກຕື່ມ ຈະຖືກຍົກເວັ້ນອາກອນກຳໄລຂອງປີຕໍ່ໄປ ພາຍໃນກຳນົດ ໜຶ່ງ ປີ ຕາມອັດຕາສ່ວນກຳໄລທີ່ໄດ້ລົງທຶນຕໍ່ ເມື່ອສົມທຽບໃສ່ທຶນຕົວຈິງຕາມການສະຫລຸບບັນຊີທ້າຍປີ.

**ມາດຕາ 36. ການຍົກມູນຄ່າການຂາດທຶນປະຈຳປີໄປຫັກອອກຈາກກຳໄລໃນປີຖັດໄປ**

ວິສາຫະກິດ ທີ່ແຈ້ງເສຍອາກອນກຳໄລ ຕາມລະບົບການຖືບັນຊີແບບຂະຫຍາຍຕົວ ຫລື ແບບທຳມະດາ ທີ່ໄດ້ປະຕິບັດຕາມລະບົບການຖືບັນຊີຢ່າງຄົບຖ້ວນຕາມກົດໝາຍວ່າດ້ວຍການບັນຊີ ຫາກມີການຂາດທຶນປະຈຳປີ ໂດຍມີການຢັ້ງຢືນການຂາດທຶນ ຈາກອົງການກວດສອບບັນຊີ ຫລື ບໍລິສັດກວດສອບບັນຊີ ທີ່ລັດຖະບານ ສປປ ລາວ ຮັບຮູ້ ແລະ ຂະແໜງສ່ວຍສາອາກອນໄດ້ກວດກາເຫັນວ່າຂາດທຶນແທ້ຕາມການຢັ້ງຢືນດັ່ງກ່າວ ມີສິດຍົກມູນຄ່າການຂາດທຶນດັ່ງກ່າວ ໄປຫັກອອກຈາກກຳໄລຂອງປີຖັດໄປພາຍໃນກຳນົດ ສາມ ປີ, ເມື່ອໝົດກຳນົດແລ້ວມູນຄ່າການຂາດທຶນທີ່ຍັງເຫລືອ ຈະບໍ່ອະນຸຍາດໃຫ້ຫັກອອກຈາກກຳໄລຕໍ່ໄປອີກ.

**ມາດຕາ 37. ການຍົກເວັ້ນພາສີ**

ວິສາຫະກິດທີ່ລົງທຶນໃນກິດຈະການສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ ເລກທີ 1 ແລະ ກິດຈະການສຳປະທານ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍເລກທີ 3 ຂອງດຳລັດສະບັບນີ້ ຈະໄດ້ຮັບການຍົກເວັ້ນການເສຍພາສີນຳເຂົ້າວັດຖຸດິບ, ອຸປະກອນ, ເຄື່ອງຈັກ ແລະ ພາຫະນະຮັບໃຊ້ການຜະລິດທາງກົງ. ວິສາຫະກິດທີ່ກ່ຽວຂ້ອງຕ້ອງສ້າງແຜນການນຳເຂົ້າປະຈຳປີ ແລ້ວສະເໜີຕໍ່ຂະແໜງການການເງິນ ຂັ້ນສູນກາງ ຫລື ທ້ອງຖິ່ນ ຫລື ຍື່ນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂອງ ຂະແໜງການແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ ແລ້ວແຕ່ກໍລະນີ.

ສຳລັບວິສາຫະກິດລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນ ກ່ອນ ກົດໝາຍສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08/07/2009 ທີ່ຕອ້ງການໄດ້ຮັບນະໂຍບາຍຍົກເວັ້ນພາສີນຳເຂົ້າຕາມດຳລັດສະບັບນີ້ ໃຫ້ປະຕິບັດຕາມທີ່ໄດ້ກ່າວມາຂ້າງເທິງນີ້ເຊັ່ນດຽວກັນ.

**ມາດຕາ 38. ຂັ້ນຕອນການພິຈາລະນາຍົກເວັ້ນພາສີ**

ການພິຈາລະນາຍົກເວັ້ນພາສີ ໃຫ້ປະຕິບັດບົນພື້ນຖານ ການຮັບຮອງເອົາແຜນນຳເຂົ້າປະຈຳປີຂອງວິສາຫະກິດ ຊຶ່ງຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານ ຕາມແບບພິມແຜນການນຳເຂົ້າປະຈຳປີ ທີ່ຂະແໜງການການເງິນກຳນົດ;
2. ພາຍຫຼັງທີ່ ຂະແໜງການການເງິນ ໄດ້ຮັບເອກະສານຄຳຮ້ອງຄົບຖ້ວນແລ້ວ ໃຫ້ນຳສົ່ງໄປຍັງ ຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ແລະ ສະເໜີຂໍທິດຊີ້ນຳຈາກຂັ້ນນຳຂອງຕົນ;
3. ຂະແໜງການທີ່ກ່ຽວຂ້ອງ ຕ້ອງປະກອບຄຳເຫັນຢ່າງເປັນລາຍລັກອັກສອນໃຫ້ແກ່ ຂະແໜງການການເງິນ ພາຍໃນກຳນົດເວລາ ສິບ ວັນລັດຖະການ. ໃນກໍລະນີ ຫາກບໍ່ໃຫ້ຄຳຕອບພາຍໃນກຳນົດເວລາດັ່ງກ່າວ ຖືວ່າຂະແໜງການນັ້ນ ເຫັນດີ;
4. ຫຼັງຈາກນັ້ນ ຂະແໜງການການເງິນ ຈັດກອງປະຊຸມ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາຜ່ານແຜນການນຳເຂົ້າປະຈຳປີ ແລະ ອອກໃບຮັບຮອງ ໃຫ້ວິສາຫະກິດ ພາຍໃນກຳນົດ ສາມສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

   ແຜນການນຳເຂົ້າປະຈຳປີ ທີ່ໄດ້ຮັບຮອງແລ້ວ ສາມາດ ສະເໜີຂໍດັດແກ້ໄດ້ ໜຶ່ງຄັ້ງ ເພື່ອໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບການດຳເນີນທຸລະກິດຕົວຈິງ.

   ສຳລັບ ການນຳເຂົ້ານອກແຜນ ຂອງແຜນການນຳເຂົ້າປະຈຳປີເປັນຕົ້ນ ການນຳເຂົ້າອຸປະກອນຮັບໃຊ້ ຫລື ອາໄຫຼ່ສຸກເສີນ ເພື່ອທົດແທນອັນເກົ່າທີ່ເປ່ເພ ເຊິ່ງມູນຄ່າລວມທັງໝົດບໍ່ເກີນ 30.000 ໂດລາສະຫະລັດ ແລະ ອະນຸຍາດໃຫ້ບໍ່ເກີນ ສອງ ເທື່ອຕໍ່ປີ ມອບໃຫ້ຂະແໜງການການເງິນ ເປັນຜູ້ພິຈາລະນາອະນຸຍາດໄດ້ເລີຍ. ໃນກໍລະນີ ມູນຄ່າລວມທັງໝົດ ເກີນ 30.000 ໂດລາສະຫະລັດ ຕ້ອງໄດ້ຄົ້ນຄວ້າຮ່ວມກັບ ຂະແໜງການກ່ຽວຂ້ອງ ເພື່ອສະເໜີຂັ້ນນຳພິຈາລະນາ;
5. ຂະແໜງການການເງິນ ຕ້ອງສົ່ງແຜນການນຳເຂົ້າປະຈຳປີ ທີ່ຖືກຮັບຮອງແລ້ວນັ້ນ ໃຫ້ດ່ານພາສີສາກົນບ່ອນນຳເຂົ້າ ເພື່ອຄຸ້ມຄອງ, ກວດກາການນຳເຂົ້າຕົວຈິງໃນແຕ່ລະຄັ້ງ ໂດຍມີປຶ້ມຕິດຕາມການນຳເຂົ້າພ້ອມທັງ ເຮັດບົດສະຫຼຸບລາຍງານປະຈຳເດືອນ, ປະຈຳໄຕມາດ ສົ່ງໃຫ້ ຂະແໜງການການເງິນ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການແຜນການ ແລະ ການລົງທຶນ.

**ມາດຕາ 39. ການຍົກເວັ້ນພາສີນຳເຂົ້າ ວັດຖຸອຸປະກອນ ສຳລັບການກໍ່ສ້າງ ແລະ ເຄື່ອງຈັກເພື່ອການຜະລິດ**

ການນຳເຂົ້າວັດສະດຸ ແລະ ອຸປະກອນກໍ່ສ້າງ ແມ່ນອະນຸຍາດໃຫ້ນຳເຂົ້າ ສຳລັບເພື່ອການກໍ່ສ້າງໂຮງງານ, ຕຶກອາຄານ ແລະ ສິ່ງປຸກສ້າງ ທີ່ເປັນຊັບສິນຄົງທີ່ຂອງວິສາຫະກິດເທົ່ານັ້ນ. ສຳລັບຈຳນວນວັດສະດຸ ແລະ ອຸປະກອນກໍ່ສ້າງ ທີ່ຈະນຳເຂົ້າ ໃຫ້ອີງໃສ່ແບບ, ແຜນຜັງ, ໃບຄິດໄລ່ບໍລິມາດວຽກຂອງການກໍ່ສ້າງທີ່ໄດ້ຮັບຮອງໂດຍຂະແໜງການທີ່ກ່ຽວຂ້ອງ.

ການອະນຸຍາດໃຫ້ນຳເຂົ້າ ເຄື່ອງຈັກເພື່ອການຜະລິດ ໃຫ້ອີງໃສ່ຄວາມຕ້ອງການຕົວຈິງ ຕາມບົດວິພາກເສດຖະກິດເຕັກນິກ ຫລື ແຜນການດຳເນີນທຸລະກິດ ບົນພື້ນຖານການເຫັນດີຂອງ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 40. ການຍົກເວັ້ນພາສີນຳເຂົ້າ ອຸປະກອນ ແລະ ອາໄຫລ່ ປ່ຽນຖ່າຍເຄື່ອງຈັກ ເພື່ອຮັບໃຊ້ການຜະລິດ**

ການນຳເຂົ້າອຸປະກອນ ແລະ ອາໄຫລ່ປ່ຽນຖ່າຍ ເຄື່ອງຈັກ ເພື່ອຮັບໃຊ້ການຜະລິດ ທີ່ມີຢູ່ໃນແຜນການນຳເຂົ້າປະຈຳປີຂອງວິສາຫະກິດ ທີ່ຂະແໜງການການເງິນຮັບຮອງແລ້ວ ແມ່ນໄດ້ຮັບການຍົກເວັ້ນພາສີນຳເຂົ້າ.

**ມາດຕາ 41. ການຍົກເວັ້ນພາສີນຳເຂົ້າ ເຄື່ອງຮັບໃຊ້ຫ້ອງການ**

ເຄື່ອງຮັບໃຊ້ຫ້ອງການ ໃນການລິເລີ່ມ ສ້າງຕັ້ງວິສາຫະກິດ ເຊັ່ນ: ຄອມພິວເຕີ, ຈັກພິມດີດ, ຈັກອັດເອກະສານ, ເຄື່ອງແຟກເອກະສານ ເປັນຕົ້ນ ແມ່ນອະນຸຍາດໃຫ້ຍົກເວັ້ນພາສີນຳເຂົ້າ ພຽງຄັ້ງດຽວໂດຍສອດຄ່ອງກັບບົດວິພາກເສດຖະກິດ ຫລື ແຜນດຳເນີນທຸລະກິດ ທີ່ຮັບຮອງ ໂດຍຂະແໜງການທີ່ກ່ຽວຂ້ອງ. ສຳລັບການນຳເຂົ້າຄັ້ງຕໍ່ໄປໃຫ້ເສຍພາສີ-ອາກອນ ຕາມກົດໝາຍ.

**ມາດຕາ 42. ການຍົກເວັ້ນພາສີນຳເຂົ້າ ຍານພາຫະນະ ເພື່ອຮັບໃຊ້ການຜະລິດ**

ຍານພາຫະນະ ທີ່ຮັບໃຊ້ແກ່ການຜະລິດ ແລະ ການບໍລິການໂດຍກົງ ຊຶ່ງສອດຄ່ອງກັບກິດຈະການ ແລະ ໜ້າວຽກຂອງການລົງທຶນ ແມ່ນອະນຸຍາດໃຫ້ນຳເຂົ້າ ໂດຍການຍົກເວັ້ນພາສີ. ຈຳນວນພາຫະນະ ທີ່ອະນຸຍາດໃຫ້ຍົກເວັ້ນພາສີນຳເຂົ້ານັ້ນ ຕ້ອງສອດຄ່ອງກັບບໍລິມາດວຽກງານຕົວຈິງຂອງແຕ່ລະໂຄງການ ທີ່ຂະແໜງການກ່ຽວຂ້ອງ ໄດ້ຮັບຮອງ.

ການຍົກເວັ້ນພາສີນຳເຂົ້າ ຍານພາຫະນະ ເພື່ອຮັບໃຊ້ການຜະລິດ ໃຫ້ປະຕິບັດຕາມລະບຽບການສະເພາະ ຂອງກະຊວງການເງິນ.

**ມາດຕາ 43. ການນຳເຂົ້າຊົ່ວຄາວເຄື່ອງຈັກ, ອຸປະກອນ, ເຄື່ອງອາໄຫລ່, ເຄື່ອງໃຊ້ຫ້ອງການ**

ການນຳເຂົ້າຊົ່ວຄາວເຄື່ອງຈັກ, ເຄື່ອງມື, ອຸປະກອນຮັບໃຊ້ການຜະລິດ, ສຳຫຼວດອອກແບບ, ກໍ່ສ້າງ ຫລື ພັດທະນາໂຄງການ ອະນຸຍາດສະເພາະແຕ່ວັດຖຸສິ່ງຂອງທີ່ມີອາຍຸການໃຊ້ງານຕະຫລອດໄລຍະອາຍຸຂອງວຽກງານ ຫລື ໂຄງການ ແລະ ສາມາດນຳອອກຄືນໄດ້ຕາມຈຳນວນ ແລະ ຕາມສັນຍາຄ້ຳປະກັນເທົ່ານັ້ນ ຕົວຢ່າງ: ອຸປະກອນຫ້ອງທົດລອງ, ເຄື່ອງປັ່ນໄຟ, ປ້ຳນ້ຳ, ເຄື່ອງມືຊ່າງ, ເຄື່ອງສຳຮອງໄຟ, ຖັງບັນຈຸນ້ຳ, ຖັງບັນຈຸນ້ຳມັນ, ຖັງຕົ້ມຢາງ, ປ້ຳລົມ, ເຄື່ອງຕັດເຫລັກ, ເລື່ອຍ, ເຄື່ອງເຈຍ, ເຫລັກແມ່ແບບ, ໂຄງເຫລັກນັ່ງຮ້ານ ແລະ ອື່ນໆ.

ສ່ວນວັດຖຸສິ່ງຂອງ, ວັດຖຸອຸປະກອນ ມາຮັບໃຊ້ໃນການກໍ່ສ້າງ ແລະ ສ້ອມແປງ, ເຄື່ອງອາໄຫລ່ທີ່ນໍາໃຊ້ໝົດໄປ ຫລື ຫຼຸ້ຍຫຼັ່ງນໄປຈາກສະພາບເດີມ ທີ່ບໍ່ສາມາດນໍາອອກຄືນໄດ້ຕາມຈໍານວນ ແລະ ສະພາບເດີມຈາກໃນເວລານໍາເຂົ້າ ເນື່ອງຈາກການໃຊ້ງານໃນໂຄງການນັ້ນ ແມ່ນບໍ່ອະນຸຍາດນໍາເຂົ້າຊົ່ວຄາວ ຕົວຢ່າງ: ເຫຼັກເສັ້ນ, ຊີມັງ, ທູບຈອດ, ຫີນເຈຍ, ຢາງຕົ້ນລົດ, ເຄື່ອງອາໄຫລ່ປ່ຽນຖ່າຍພາຍໃນເຄື່ອງຈັກ, ອຸປະກອນ ແລະ ອື່ນໆ.

**ມາດຕາ 44. ການນໍາເຂົ້າຊົ່ວຄາວພາຫະນະ**

ນິຕິບຸກຄົນພາຍໃນ ແລະ ນິຕິບຸກຄົນຕ່າງປະເທດ ທີ່ໄດ້ ເຊັນບົດບັນທຶກຄວາມເຂົ້າໃຈ ຫຼື ສັນຍາ ກັບ ລັດຖະບານ ໃນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ສໍາຫຼວດ ແລະ ອອກແບບຂອງໂຄງການ ສາມາດນໍາເຂົ້າຊົ່ວຄາວພາຫະນະຮັບໃຊ້ການຜະລິດ ທາງກົງ ແລະ ທາງອ້ອມ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍວ່າດ້ວຍພາສີ.

ສໍາລັບ ນິຕິບຸກຄົນຕ່າງປະເທດ ທີ່ຈະນໍາເຂົ້າຊົ່ວຄາວພາຫະນະໄດ້ນັ້ນ ຕ້ອງໄດ້ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ໂດຍສອດຄ່ອງກັບ ມາດຕາ 27 ຂອງດໍາລັດສະບັບນີ້.

**ມາດຕາ 45. ນະໂຍບາຍການເຂົ້າເຖິງແຫລ່ງທຶນ**

ສໍາລັບວິສາຫະກິດ ທີ່ຕ້ອງການກູ້ຢືມເງິນຈາກແຫລ່ງທຶນພາຍໃນ ຕ້ອງຖອກທຶນຈົດທະບຽນເບື້ອງຕົ້ນ ຂອງວິສາຫະກິດຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 4 ຂອງດໍາລັດສະບັບນີ້ສາກ່ອນ.

ວິສາຫະກິດສາມາດກູ້ຢືມເງິນນໍາທະນາຄານທຸລະກິດ ແລະ ສະຖາບັນການເງິນ ຢູ່ ສປປ ລາວ ຕາມລະບຽບການ ຂອງທະນາຄານທຸລະກິດກ່ຽວຂ້ອງ ແລະ ຢູ່ຕ່າງປະເທດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຂອງທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 46. ນະໂຍບາຍສົ່ງເສີມສະເພາະ**

ວິສາຫະກິດທີ່ຈະໄດ້ຮັບນະໂຍບາຍສົ່ງເສີມສະເພາະ ຕາມມາດຕາ 54 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແມ່ນກິດຈະການສົ່ງເສີມລະດັບທີ 1 ຂອງເອກະສານຊ້ອນທ້າຍເລກທີ 1 ຂອງດໍາລັດສະບັບນີ້.

## ໝວດທີ 9
## ການສົ່ງເສີມດ້ານຂໍ້ມູນຂ່າວສານ ແລະ ສິດນຳໃຊ້ທີ່ດິນ

### ມາດຕາ 47. ການສົ່ງເສີມດ້ານຂໍ້ມູນຂ່າວສານ

ການສົ່ງເສີມດ້ານຂໍ້ມູນຂ່າວສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 57 ຂອງກົດໝາຍວ່າວ່າດ້ວຍການສົ່ງເສີມການລົງທຶນ ແມ່ນຜູ້ລົງທຶນພາຍໃນ, ຜູ້ລົງທຶນຕ່າງປະເທດ ແລະວິສາຫະກິດ ສາມາດຮັບຂໍ້ມູນຂ່າວສານການລົງທຶນ ໂດຍຜ່ານລະບົບເວບໄຊ ແລະ ຈາກຫ້ອງການບໍລິການການລົງທຶນປະຕູດຽວ ນຳຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການອຸດສາຫະກຳ ແລະ ການຄ້າ ຂັ້ນສູນກາງ ແລະ ທ້ອງຖິ່ນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ສະຖານທູດລາວ, ກົງສູນລາວ ຫລື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈຳຢູ່ຕ່າງປະເທດ.

### ມາດຕາ 48 . ການສົ່ງເສີມດ້ວຍສິດນຳໃຊ້ທີ່ດິນ

ການສົ່ງເສີມດ້ວຍສິດນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 58 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໝາຍເຖິງ ການອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດ ຊື້ສິດນຳໃຊ້ທີ່ດິນນຳລັດສູງສຸດບໍ່ເກີນ ແປດຮ້ອຍ ຕາແມັດ ເພື່ອປຸກສ້າງເປັນທີ່ຢູ່ອາໄສ ຫລື ສຳນັກງານຫ້ອງການຂອງວິສາຫະກິດ, ນອກຈາກທີ່ດິນທີ່ຜູ້ລົງທຶນຕ່າງປະເທດໄດ້ເຊົ່າ ຫລື ສຳປະທານນຳລັດ ຫລື ເຊົ່າຈາກພົນລະເມືອງລາວ ເພື່ອດຳເນີນທຸລະກິດຕາມລະບຽບການ ແລະ ກົດໝາຍ.

### ມາດຕາ 49. ການຂໍນະໂຍບາຍສົ່ງເສີມດ້ວຍສິດນຳໃຊ້ທີ່ດິນ

ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນພັດທະນາໂຄງການຕ່າງໆໃນ ສປປ ລາວ ຫາກມີຈຸດປະສົງຊື້ສິດນຳໃຊ້ທີ່ດິນຈາກລັດ ທີ່ໄດ້ຈັດສັນໄວ້ແລ້ວນັ້ນ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ: ໃບທະບຽນວິສາຫະກິດ ຫລື ໃບທະບຽນສຳປະທານ ແລະ ເອກະສານອື່ນໆ ຕໍ່ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ບ່ອນທີ່ດິນຕັ້ງຢູ່ ໂດຍມີຄວາມ ເຫັນຢັ້ງຢືນຈາກຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະການຄ້າ ບ່ອນອອກໃບທະບຽນວິສາຫະກິດ ຫລື ໃບທະບຽນສຳປະທານ. ບໍ່ວ່າໃນກໍລະນີໃດກໍຕາມບໍ່ອະນຸຍາດໃຫ້ຜູ້ລົງທຶນຕ່າງປະເທດ ຊື້ສິດນຳໃຊ້ທີ່ດິນທີ່ລັດບໍ່ໄດ້ຈັດສັນ ຫລື ຊື້ ໂດຍກົງຈາກບຸກຄົນ ຫລື ນິຕິບຸກຄົນທີ່ເປັນພົນລະເມືອງລາວ.

### ມາດຕາ 50. ເງື່ອນໄຂການຂໍຊື້ສິດນຳໃຊ້ທີ່ດິນຂອງຜູ້ລົງທຶນຕ່າງປະເທດ

ຜູ້ລົງທຶນຕ່າງປະເທດ ທີ່ລົງທຶນພັດທະນາໂຄງການຕ່າງໆໃນ ສປປ ລາວ ຫາກມີຈຸດປະສົງຊື້ສິດນຳໃຊ້ທີ່ດິນຈາກລັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງມີທຶນຈົດທະບຽນ ແຕ່ ຫ້າແສນ ໂດລາສະຫະລັດ ຂຶ້ນໄປ ໂດຍມີການຢັ້ງຢືນມູນຄ່າທຶນນຳເຂົ້າຕົວຈິງຄົບຖ້ວນ ຕາມຈຳນວນທຶນຈົດທະບຽນດັ່ງກ່າວ ຈາກທະນາຄານແຫ່ງ ສປປ ລາວ;
2. ຕ້ອງແມ່ນທີ່ດິນທີ່ລັດໄດ້ຈັດສັນໄວ້ ແລະ ມີຂອບເຂດເນື້ອທີ່ດິນບໍ່ເກີນ ແປດຮ້ອຍ ຕາແມັດ ເທົ່ານັ້ນ;
3. ຕ້ອງນຳໃຊ້ເພື່ອປຸກສ້າງເປັນທີ່ຢູ່ອາໄສ ຫລື ສຳນັກງານຫ້ອງການ ຮັບໃຊ້ໃນການດຳເນີນທຸລະກິດຂອງຕົນ;
4. ອະນຸຍາດໃຫ້ຊື້ສິດນຳໃຊ້ທີ່ດິນ ນຳລັດ ພຽງເທື່ອດຽວຕໍ່ໜຶ່ງວິສາຫະກິດ ໂດຍບໍ່ຂຶ້ນກັບຈຳນວນຫົວໜ່ວຍວິສາຫະກິດທີ່ສ້າງຕັ້ງຢູ່ ສປປ ລາວ; ໃນກໍລະນີວິສາຫະກິດໃດໜຶ່ງຫາກມີຜູ້ຖືຫຸ້ນຫຼາຍກວ່າສອງຂາຮຸ້ນຂຶ້ນໄປ ຫລື ມີການຂະຫຍາຍສາຂາການລົງທຶນ ກໍອະນຸຍາດໃຫ້ຊື້ສິດນຳໃຊ້ ທີ່ດິນ ໃນນາມນິຕິບຸກຄົນດຽວ ແລະ ຊື້ສິດນຳໃຊ້ທີ່ດິນນຳລັດ ໄດ້ເທື່ອດຽວເທົ່ານັ້ນ.

### ມາດຕາ 51. ການພິຈາລະນາການຂໍຊື້ສິດນຳໃຊ້ທີ່ດິນ ຂອງຜູ້ລົງທຶນຕ່າງປະເທດ

ຫຼັງຈາກ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ໄດ້ຮັບຄຳຮ້ອງຂອງຜູ້ລົງທຶນຕ່າງປະເທດ ທີ່ຂໍຊື້ສິດນຳໃຊ້ທີ່ດິນແລ້ວ ຕ້ອງກວດກາເບິ່ງເອກະສານຕ່າງໆ ແລະ ເງື່ອນໄຂຂອງຜູ້ລົງທຶນ ທີ່ສະເໜີມານັ້ນຖືກຕ້ອງ ແລະ ຄົບຖ້ວນ ຕາມມາດຕາ 58 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ມາດຕາ 49 ແລະ 50 ຂອງດຳລັດສະບັບນີ້, ຖ້າຖືກຕ້ອງ ແລະ ຄົບຖ້ວນແລ້ວ ແມ່ນໃຫ້ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ບ່ອນທີ່ດິນຕັ້ງຢູ່ນັ້ນ ລົງກວດກາເບິ່ງພື້ນທີ່ຕົວຈິງ ໂດຍສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງພາຍໃນແຂວງ, ນະຄອນ ແລ້ວນຳສະເໜີລາຍງານຄະນະນຳອົງການປົກຄອງແຂວງ, ນະຄອນ ພິຈາລະນາຕົກລົງຕາມລະບຽບການ .

ຫຼັງຈາກ ຄະນະນຳອົງການປົກຄອງແຂວງ, ນະຄອນ ພິຈາລະນາຕົກລົງແລ້ວ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ບ່ອນທີ່ດິນຕັ້ງຢູ່ນັ້ນ ຈຶ່ງອອກໃບຕາດິນ ໃຫ້ຜູ້ລົງທຶນຕ່າງປະເທດ ທີ່ສະເໜີຊື້ສິດນຳໃຊ້ທີ່ດິນນັ້ນ ໂດຍໃຫ້ກຳນົດຊື່ບຸກຄົນ ຫລື ນິຕິບຸກຄົນ ແລະ ກຳນົດອາຍຸສິດນຳໃຊ້ທີ່ດິນໃສ່ໃນໃບຕາດິນດັ່ງກ່າວ.

## ມາດຕາ 52. ສິດຜົນປະໂຫຍດຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ

ຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ມີສິດຜົນປະໂຫຍດ ດັ່ງນີ້:

1. ນຳໃຊ້ທີ່ດິນຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດຕາມກຳນົດເວລາທີ່ກຳນົດໄວ້ໃນສັນຍາສຳປະທານ ຫລື ລະບຽບກົດໝາຍຂອງ ສປປ ລາວ ກຳນົດໄວ້ສະເພາະ; ສຳລັບຜູ້ລົງທຶນ ຕ່າງປະເທດທີ່ລົງທຶນໃນກິດຈະການທົ່ວໄປ ອາຍຸຂອງສິດນຳໃຊ້ທີ່ດິນແມ່ນໃຫ້ປະຕິບັດຕາມກຳນົດເວລາ ເຊົ່າ ຫລື ສຳປະທານທີ່ດິນຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ດ້ວຍການກຳນົດອາຍຸສິດນຳໃຊ້ທີ່ດິນໄວ້ໃນໃບຕາດິນຄັກແນ່;
2. ມອບໂອນສິດນຳໃຊ້ທີ່ດິນຂອງຕົນ ໃຫ້ຜູ້ລົງທຶນອື່ນ ທີ່ມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 50 ຂອງດຳລັດສະບັບນີ້ ຊຶ່ງຕ້ອງໄດ້ຮັບການຢັ້ງຢືນຈາກ ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະ ການຄ້າ. ສຳລັບອາຍຸຂອງສິດນຳໃຊ້ທີ່ດິນຂອງຜູ້ທີ່ໄດ້ຮັບຊ່ວງຕໍ່ຈາກຜູ້ລົງທຶນຕ່າງປະເທດນັ້ນ ແມ່ນບໍ່ໃຫ້ເກີນອາຍຸທີ່ຍັງເຫຼືອທີ່ໄດ້ກຳນົດໄວ້ໃນໃບຕາດິນ;
3. ເອົາສິດນຳໃຊ້ທີ່ດິນຂອງຕົນ ໄປຄ້ຳປະກັນການກູ້ຢືມຈາກ ທະນາຄານ ຫລື ສະຖາບັນການເງິນທີ່ເຄື່ອນໄຫວຖືກຕ້ອງໃນ ສປປ ລາວ;
4. ໂອນ ຫລື ຂາຍສິ່ງປຸກສ້າງທີ່ເປັນກຳມະສິດຂອງຕົນນັ້ນ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍຖືກຕ້ອງຕາມລະບຽບການ ແລະ ກົດໝາຍຂອງ ສປປ ລາວ.

## ມາດຕາ 53. ພັນທະຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ

ຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ມີພັນທະ ດັ່ງນີ້ :

1. ຊຳລະຄ່າຊື້ສິດນຳໃຊ້ທີ່ດິນໃຫ້ລັດ ເທື່ອດຽວ ຕາມລາຄາທ້ອງຕະຫຼາດບ່ອນທີ່ດິນຕັ້ງຢູ່ໃນເວລາຊື້ສິດນຳໃຊ້ທີ່ດິນ;
2. ຕ້ອງນຳໃຊ້ທີ່ດິນຕາມເປົ້າໝາຍ, ເສຍຄ່າທຳນຽມການໂອນສິດນຳໃຊ້ທີ່ດິນ, ຄ່າທຳນຽມນຳໃຊ້ທີ່ດິນໃນແຕ່ລະປີ ຕາມອັດຕາທີ່ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ;
3. ບໍ່ສ້າງຄວາມເສຍຫາຍໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມທຳມະຊາດ ຫລື ສັງຄົມ;
4. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
5. ພາຍໃນກຳນົດ ສີ່ສິບຫ້າ ວັນ ກ່ອນໝົດອາຍຸສິດນຳໃຊ້ທີ່ດິນ ຜູ້ລົງທຶນ ຕ້ອງສະເໜີຕໍ່ ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ ກ່ຽວກັບຈຸດປະສົງໃນການນຳໃຊ້ສິ່ງປຸກສ້າງທີ່ເປັນກຳມະສິດຂອງຕົນໃນດິນຕອນດັ່ງກ່າວ ໂດຍໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:
   - ໃນກໍລະນີ ຜູ້ລົງທຶນ ຕ້ອງການສືບຕໍ່ນຳໃຊ້ສິ່ງປຸກສ້າງທີ່ເປັນກຳມະສິດຂອງຕົນ ແຕ່ອາຍຸຂອງສິດນຳໃຊ້ທີ່ດິນທີ່ໄດ້ກຳນົດໄວ້ໃນໃບຕາດິນ ໄດ້ສິ້ນສຸດແລ້ວ, ຜູ້ລົງທຶນ ຕ້ອງເຊົ່າ ຫລື ຊື້ສິດ

ນຳໃຊ້ທີ່ດິນບ່ອນທີ່ສິ່ງປຸກສ້າງຂອງຕົນຕັ້ງຢູ່ນັ້ນ ນຳລັດ ໂດຍການຊຳລະຄ່າຊື້ສິດນຳໃຊ້ທີ່ດິນ ໃຫ້ລັດ ຕາມລາຄາທ້ອງຕະຫຼາດໃນເວລານັ້ນ ແລະ ປະຕິບັດຕາມຂັ້ນຕອນຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງດຳລັດສະບັບນີ້. ສຳລັບອາຍຸສິດນຳໃຊ້ທີ່ດິນທີ່ຊື້ຈາກລັດ ໃນກໍລະນີ ທີ່ຕ້ອງການສືບຕໍ່ນຳໃຊ້ສິ່ງປຸກສ້າງຂອງຕົນ ແມ່ນບໍ່ເກີນອາຍຸການລົງທຶນທີ່ໄດ້ຕໍ່ນັ້ນ.

- ໃນກໍລະນີຜູ້ລົງທຶນຕ່າງປະເທດຕ້ອງການໂອນ ຫລື ຂາຍສິ່ງປຸກສ້າງທີ່ເປັນກຳມະສິດຂອງຕົນໃນທີ່ດິນດັ່ງກ່າວໃຫ້ບຸກຄົນທົ່ວໄປ ຫລື ຜູ້ລົງທຶນອື່ນ ຕ້ອງເສຍຄ່າທຳນຽມຕ່າງໆ ຖືກຕ້ອງຕາມກົດໝາຍ ແລະ ລະບຽບນິຕິກຳ ຂອງ ສປປ ລາວ. ຖ້າຜູ້ຊື້ສິ່ງປຸກສ້າງຕໍ່ຫາກເປັນບຸກຄົນທົ່ວໄປ ຕ້ອງໄດ້ເຊົ່າທີ່ດິນນຳລັດ, ແຕ່ຖ້າຜູ້ຊື້ສິ່ງປຸກສ້າງຕໍ່ເປັນຜູ້ລົງທຶນຕ່າງປະເທດທີ່ມີເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນ ມາດຕາ 50 ຂອງດຳລັດສະບັບນີ້ ສາມາດເຊົ່າ ດິນ ຫລື ຊື້ສິດນຳໃຊ້ທີ່ດິນດັ່ງກ່າວ ນຳລັດໄດ້ໂດຍປະຕິບັດຕາມລະບຽບການທີ່ໄດ້ ກຳນົດໄວ້ໃນ ມາດຕາ 49 ຂອງດຳລັດສະບັບນີ້ ແລະ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ. ສຳລັບອາຍຸໃນການເຊົ່າ ຫລື ອາຍຸສິດນຳໃຊ້ທີ່ດິນຂອງຜູ້ຊື້ສິ່ງປຸກສ້າງຕໍ່ນັ້ນ ແມ່ນໃຫ້ປະຕິບັດຄືກັບເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນ ມາດຕາ 52 ຂໍ້ 1 ຂອງດຳລັດສະບັບນີ້. ໃນກໍລະນີຜູ້ລົງທຶນບໍ່ສາມາດຂາຍສິ່ງປຸກສ້າງໃນຕອນດິນດັ່ງກ່າວ ໄດ້ພາຍໃນກຳນົດເວລາ ໜຶ່ງ ປີ ນັບແຕ່ວັນແຈ້ງຈຸດປະສົງຂອງຕົນ ຕໍ່ອົງການຄຸ້ມຄອງທີ່ດິນເປັນຕົ້ນໄປ ຫລື ພາຍໃນກຳນົດ ໜຶ່ງ ປີ ທີ່ອາຍຸຂອງສິດນຳໃຊ້ທີ່ດິນດັ່ງກ່າວສິ້ນສຸດ ຖືວ່າສິດນຳໃຊ້ທີ່ດິນພ້ອມດ້ວຍສິ່ງປຸກສ້າງໃນທີ່ດິນດັ່ງກ່າວໄດ້ກາຍເປັນຂອງລັດ;

6. ປະຕິບັດຕາມລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ.

## ໝວດທີ 10
## ການຄຸ້ມຄອງຜູ້ລົງທຶນ ແລະ ຄອບຄົວຂອງຜູ້ລົງທຶນຕ່າງປະເທດ ທີ່ມາລົງທຶນ ຢູ່ ສປປ ລາວ

### ມາດຕາ 54. ການຂໍອະນຸຍາດນຳເຂົ້າແຮງງານ ແລະ ຂຶ້ນທະບຽນແຮງງານຕ່າງປະເທດ

ການວ່າຈ້າງແຮງງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 66 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ວິສາຫະກິດທີ່ມີຈຸດປະສົງຂໍອະນຸຍາດ ນຳເຂົ້າແຮງງານຕ່າງປະເທດປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

1. ສະເໜີແຜນຄວາມຕ້ອງການແຮງງານຕ່າງປະເທດ ຂອງໂຄງການລົງທຶນຕ່າງໆ ນຳຂະແໜງການແຜນການ ແລະ ການລົງທຶນ;
2. ສະເໜີຂໍອະນຸຍາດນຳເຂົ້າຈຳນວນແຮງງານຕ່າງປະເທດ ນຳຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ;

3. ສະເໜີຜ່ານລາຍຊື່ຜູ້ອອກແຮງງານຕ່າງປະເທດ ນຳຂະແໜງການປ້ອງກັນຄວາມສະຫງົບ ຂອງ ສປປ ລາວ;
4. ສະເໜີຜ່ານ ກະຊວງການຕ່າງປະເທດ ເພື່ອຂໍວີຊາທຸລະກິດ ຢູ່ສະຖານທູດລາວ ຫລື ສະຖານກົງສູນລາວ ຢູ່ຕ່າງປະເທດ, ຍົກເວັ້ນ ໃນກໍລະນີຈຳເປັນ ສາມາດຂໍວີຊາຢູ່ກັບດ່ານສາກົນໄດ້.

ວິສາຫະກິດທີ່ມີຈຸດປະສົງ ຂໍອະນຸຍາດຂຶ້ນທະບຽນແຮງງານໃຫ້ແກ່ແຮງງານຕ່າງປະເທດ ທີ່ໄດ້ເຂົ້າມາ ສປປ ລາວ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຂໍອະນຸຍາດເຮັດບັດເຮັດວຽກ ນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫລື ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ນະຄອນ;
2. ຂໍຂຶ້ນທະບຽນພັກເຊົາ ຫລື ຂໍອະນຸຍາດເຮັດບັດພັກເຊົາຊົ່ວຄາວ ຢູ່ ສປປ ລາວ ນຳກົມຕຳຫລວດຄຸ້ມຄອງຄົນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ;
3. ຂໍອະນຸຍາດວີຊາເຂົ້າ-ອອກ ສປປ ລາວ ຫຼາຍເທື່ອນຳກະຊວງການຕ່າງປະເທດ ຂອງ ສປປ ລາວ.

ຂັ້ນຕອນການຂໍອະນຸຍາດນຳເຂົ້າແຮງງານ ແລະ ຂຶ້ນທະບຽນແຮງງານຕ່າງປະເທດດັ່ງກ່າວຂ້າງເທິງນີ້ ສາມາດຍື່ນຕໍ່ ຫ້ອງການບໍລິການການລົງທຶນປະຕູດຽວ ຂອງຂະແໜງການແຜນການ ແລະ ການລົງທຶນ.

## ມາດຕາ 55. ເງື່ອນໄຂ ແລະ ຂັ້ນຕອນຂອງຜູ້ຂໍວີຊາທຸລະກິດ

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ຜູ້ຖືຮຸ້ນ, ອຳນວຍການ, ຮອງອຳນວຍການ ທີ່ມີຈຸດປະສົງຂໍອະນຸຍາດເອົາວີຊາທຸລະກິດ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດ ທີ່ຕັ້ງຢູ່ ສປປ ລາວ ຕ້ອງມີເງື່ອນໄຂ ດັ່ງນີ້:

- ເປັນຜູ້ລົງທຶນ ທີ່ຖືກຕ້ອງຕາມລະບຽບການ ແລະກົດໝາຍ ຂອງ ສປປ ລາວ;
- ຜູ້ຖືຮຸ້ນ, ອຳນວຍການ, ຮອງອຳນວຍການ ຕ້ອງມີລາຍຊື່ຢູ່ໃນກົດລະບຽບ ຫລື ໂຄງຮ່າງການຈັດຕັ້ງຂອງວິສາຫະກິດ ຮັບຮອງໂດຍ ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະ ການຄ້າ;
- ມີຊີວະປະຫວັດຈະແຈ້ງ, ບໍ່ຫຼົບຫຼີກຄະດີ ເພື່ອເຂົ້າມາລົງທຶນ ຢູ່ ສປປ ລາວ;
- ຕ້ອງປະຕິບັດຕາມລະບຽບກົດຫມາຍ ແລະ ຮີດຄອງປະເພນີ ຂອງ ສປປ ລາວ;
- ມີສຸຂະພາບສົມບູນ, ບໍ່ມີພະຍາດຕິດແປດ ຊຶ່ງອີງການອະນາໄມໂລກຫ້າມເຄື່ອນຍ້າຍ.

ຜູ້ລົງທຶນ ພ້ອມດ້ວຍສະມາຊິກຄອບຄົວ, ຜູ້ຖືຮຸ້ນ, ຜູ້ອຳນວຍການ, ຜູ້ຮອງອຳນວຍການ ທີ່ມີຈຸດປະສົງຂໍອະນຸຍາດວີຊາທຸລະກິດໃຫ້ປະກອບແບບພິມຕາມທີ່ຫ້ອງການບໍລິການການລົງທຶນປະຕູດຽວ ຂອງຂະແໜງການແຜນການ ແລະ ການລົງທຶນກຳນົດ.

**ມາດຕາ 56. ການຂໍອະນຸຍາດຂຶ້ນທະບຽນ ຫລື ເຮັດບັດພັກເຊົາໃຫ້ຜູ້ລົງທຶນພ້ອມດ້ວຍສະມາຊິກຄອບຄົວ, ຜູ້ຖືຮຸ້ນ, ຜູ້ອຳນວຍການ, ຮອງອຳນວຍການ, ນັກຊ່ຽວຊານ, ນັກວິຊາການ**

ວິສາຫະກິດ ທີ່ມີຈຸດປະສົງຂໍຂຶ້ນທະບຽນ ແລະ ຂໍອະນຸຍາດເຮັດບັດພັກເຊົາໃຫ້ຜູ້ລົງທຶນພ້ອມດ້ວຍສະມາຊິກຄອບຄົວ, ຜູ້ຖືຮຸ້ນ, ຜູ້ອຳນວຍການ, ຜູ້ຮອງອຳນວຍການ, ນັກຊ່ຽວຊານ, ນັກວິຊາການຂອງວິສາຫະກິດຕົນ ໃຫ້ແຈ້ງບັນຊີລາຍຊື່ຈຳນວນບຸກຄົນດັ່ງກ່າວ ພ້ອມທັງລະບຸຕຳແໜ່ງງານ, ສັນຊາດ, ກຳນົດເວລາເຮັດວຽກຢູ່ ສປປລາວ ແລ້ວ ສະເໜີຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂອງຂະແໜງການແຜນການ ແລະ ການລົງທຶນ ເພື່ອພິຈາລະນາ.

ວິສະຫາກິດ ທີ່ບໍ່ປະຕິບັດຕາມເງື່ອນໄຂຂ້າງເທິງນີ້ ແມ່ນບໍ່ອະນຸຍາດໃຫ້ເຮັດບັດພັກເຊົາເພື່ອຢູ່ ສປປ ລາວ ຢ່າງເດັດຂາດ.

**ມາດຕາ 57. ການພິຈາລະນາອອກບັດພັກເຊົາ ແລະ ການຕໍ່ອາຍຸບັດ**

ການພິຈາລະນາອອກບັດພັກເຊົາ ແລະ ການຕໍ່ອາຍຸບັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 67 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແມ່ນໃຫ້ປະຕິບັດຕາມ ດຳລັດວ່າດ້ວຍການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ແລະ ການຄຸ້ມຄອງຄົນຕ່າງປະເທດ ສະບັບເລກທີ 136/ນຍ, ລົງວັນທີ 25 ພຶດສະພາ 2009.

**ມາດຕາ 58. ພັນທະຂອງຜູ້ລົງທຶນ**

ພັນທະ ກ່ຽວກັບການຖືບັນຊີ ແລະ ການເສັຍພາສີ, ອາກອນ ຂອງຜູ້ລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 69 ຂໍ້ 1 ແລະ ຂໍ້ 2 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

- ຕ້ອງໄດ້ແຈ້ງເສັຍອາກອນໃຫ້ຄົບຖ້ວນຕາມການເຄື່ອນໄຫວທຸລະກິດຕົວຈິງ ແລະ ຖືກຕ້ອງຕາມເງື່ອນໄຂ, ກຳນົດເວລາ ທີ່ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍສວ່ຍສາອາກອນ,
- ຕ້ອງນຳໃຊ້ໃບເກັບເງິນ ໂດຍສອດຄ່ອງກັບ ດຳລັດວ່າດ້ວຍໃບເກັບເງິນ;
- ຖືບັນຊີ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍການບັນຊີ ຂອງ ສປປ ລາວ. ໃນກໍລະນີທີ່ຈຳເປັນກໍສາມາດນຳໃຊ້ລະບົບບັນຊີອື່ນທີ່ສາກົນຮັບຮູ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ;
- ຕ້ອງສະຫລຸບບັນຊີການເຄື່ອນໄຫວທຸລະກິດຂອງປີຜ່ານມາ ແລະ ສ້າງແຜນການເຄື່ອນໄຫວທຸລະກິດ ພ້ອມທັງແຜນການມອບພັນທະຂອງປີຕໍ່ໄປ ແຈ້ງຕໍ່ ຂະແໜງສ່ວຍສາອາກອນ ບ່ອນທີ່ຕົນຂຶ້ນກັບ ກ່ອນວັນທີ 31 ມີນາ ຂອງທຸກໆປີ ພ້ອມທັງສະເໜີຂໍໃບຢັ້ງຢືນການເສັຍອາກອນປະຈຳປີ ເພື່ອປະກອບໃສ່ສຳນວນເອກະສານ ທາງລັດຖະການຕ່າງໆ;

## ໝວດທີ 11
## ການແບ່ງຂັ້ນໃນການຄຸ້ມຄອງ

**ມາດຕາ 59. ການແບ່ງຂັ້ນໃນການຄຸ້ມຄອງການລົງທຶນ**

ອົງການຄຸ້ມຄອງການລົງທຶນ ແບ່ງອອກເປັນ ສອງຂັ້ນ: ຂັ້ນສູນກາງ ແລະ ທ້ອງຖິ່ນ.

- ອົງການຄຸ້ມຄອງການລົງທຶນ ຂັ້ນສູນກາງ ປະກອບດ້ວຍ ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ຄະນະກຳມະການຊີ້ນຳລະດັບຊາດ ເພື່ອຊີ້ນຳໂຄງການສ້າງເຂດເສດຖະກິດພິເສດ ຢູ່ ສປປ ລາວ ແລະ ບັນດາກະຊວງ-ອົງການທີ່ກ່ຽວຂ້ອງຂັ້ນສູນກາງພາຍໃຕ້ການຊີ້ນຳຂອງ ລັດຖະບານ.
- ອົງການຄຸ້ມຄອງການລົງທຶນ ຂັ້ນທ້ອງຖິ່ນ ປະກອບດ້ວຍ ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ແລະ ບັນດາພະແນກການທີ່ກ່ຽວຂ້ອງຂອງທ້ອງຖິ່ນ.

ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ຄະນະກຳມະການຊີ້ນຳລະດັບຊາດ ເພື່ອຊີ້ນຳ ໂຄງການສ້າງ ເຂດເສດຖະກິດພິເສດ ຢູ່ສປປ ລາວ ແລະ ບັນດາກະຊວງ, ອົງການທີ່ກ່ຽວຂ້ອງຂັ້ນສູນກາງ ມີສິດ ແລະ ໜ້າທີ່ປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນ ມາດຕາ 86, 90 ແລະ 91 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ພະແນກແຜນການ ແລະ ການລົງທຶນ, ພະແນກອຸດສາຫະກຳ ແລະ ການຄ້າ, ແລະ ບັນດາພະແນກການ ທີ່ກ່ຽວຂ້ອງຂອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ປະຕິບັດຕາມທີ່ໄດ້ ກຳນົດໄວ້ ໃນ ມາດຕາ 87, 88 ແລະ 91 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 60. ຄວາມຮັບຜິດຊອບຂອງອົງການຄຸ້ມຄອງການລົງທຶນ**

**ອົງການຄຸ້ມຄອງການລົງທຶນ ໃນແຕ່ລະຂັ້ນ ມີຄວາມຮັບຜິດຊອບ ດັ່ງນີ້:**

- **ຂັ້ນສູນກາງ:** ຮັບຜິດຊອບໃນການຄຸ້ມຄອງມະຫາພາກ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານການສົ່ງເສີມການລົງທຶນ ຂອງຂັ້ນທ້ອງຖິ່ນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.
- **ຂັ້ນທ້ອງຖິ່ນ:** ເປັນຜູ້ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການລົງທຶນທີ່ຂຶ້ນກັບຂອບເຂດຄວາມຮັບຜິດຊອບຂອງຕົນ ລວມທັງ ບັນດາໂຄງການ ຫຼື ກິດຈະການທີ່ສູນກາງ ອະນຸຍາດ ທີ່ຢູ່ໃນທ້ອງຖິ່ນຕົນ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນແຂວງ ແລ້ວລາຍງານໃຫ້ຂັ້ນສູນກາງ ຮັບຊາບ.

**ມາດຕາ 61. ການຄຸ້ມຄອງຂອງຂະແໜງການກ່ຽວຂ້ອງ**

ຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ບັນດາໂຄງການ ຫລື ກິດຈະການລົງທຶນ ທາງດ້ານເຕັກນິກ-ວິຊາການ

ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຂອງຕົນ ພ້ອມທັງລາຍງານການປະເມີນຜົນໃຫ້ຂະແໜງການທີ່ອອກອະນຸຍາດເປັນແຕ່ລະໄລຍະ.

## ໝວດທີ 12
## ສະຫລຸບ ແລະ ລາຍງານຂໍ້ມູນກ່ຽວກັບການລົງທຶນ

### ມາດຕາ 62. ການສະຫລຸບຂໍ້ມູນ

ການສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 86 ຂໍ້ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ຂະແໜງການແຜນການ ແລະ ການລົງທຶນ ສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ, ທະນາຄານແຫ່ງ ສປປລາວ ກຳນົດກົນໄກເກັບກຳຂໍ້ມູນກ່ຽວກັບວຽກງານການລົງທຶນ ໃນຂອບເຂດທົ່ວປະເທດ ໂດຍກຳນົດແບບພິມການເກັບກຳສະຖິຕິການລົງທຶນຢ່າງເປັນລະບົບ ແລະ ໃຫ້ເປັນເອກະພາບ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນດັ່ງນີ້:

- ຂະແໜງການແຜນການ ແລະ ການລົງທຶນ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ເກັບກຳຂໍ້ມູນການລົງທຶນ ຫລື ສະຖິຕິການລົງທຶນ ຂອງກິດຈະການສຳປະທານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.
- ຂະແໜງການອຸດສາຫະກຳ ແລະ ການຄ້າ ຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ເກັບກຳສະຖິຕິການລົງທຶນໃນກິດຈະການທົ່ວໄປ ແລະ ເປັນຖານຂໍ້ມູນແຫ່ງຊາດ ກ່ຽວກັບຫົວໜ່ວຍວິສາຫະກິດ.
- ຂະແໜງການການເງິນຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ເກັບກຳສະຖິຕິກ່ຽວກັບການເສຍອາກອນກຳໄລ, ມູນຄ່າການນຳເຂົ້າ, ມູນຄ່າການເສຍພາສີ ແລະ ອາກອນການນຳເຂົ້າວັດຖຸ, ອຸປະກອນ, ເຄື່ອງຈັກ, ພາຫະນະຮັບໃຊ້ການຜະລິດທາງກົງ, ການນຳເຂົ້າອື່ນໆຂອງບັນດາວິສາຫະກິດທີ່ໄດ້ຮັບ ແລະ ບໍ່ໄດ້ຮັບນະໂຍບາຍສົ່ງເສີມ.
- ທະນາຄານແຫ່ງ ສປປ ລາວ ເປັນຜູ້ເກັບກຳຂໍ້ມູນການນຳເຂົ້າທຶນຂອງບັນດາວິສາຫະກິດ.

### ມາດຕາ 63. ການລາຍງານວຽກງານການລົງທຶນ

ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ, ທະນາຄານແຫ່ງ ສປປ ລາວ ຕ້ອງສັງລວມຂໍ້ມູນສະຖິຕິ ແລະ ສະພາບການຈັດຕັ້ງປະຕິບັດວຽກງານການລົງທຶນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເປັນປະຈຳ ແຕ່ລະ ເດືອນ, ສາມ ເດືອນ, ຫົກ ເດືອນ ແລະ ປະຈຳປີສົ່ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ເພື່ອສັງລວມ ແລະ ລາຍງານຕໍ່ລັດຖະບານ.

ໃນກໍລະນີຈຳເປັນທຸກພາກສ່ວນ ທີ່ຮັບຜິດຊອບຕໍ່ວຽກງານການລົງທຶນ ຕ້ອງໄດ້ສະຫຼຸບສັງລວມຂໍ້ມູນສະຖິຕິ ແລະ ສະພາບການຈັດຕັ້ງປະຕິບັດວຽກງານການລົງທຶນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃນແຕ່ລະໄລຍະ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ.

**ມາດຕາ 64. ການລາຍງານການເຄື່ອນໄຫວຂອງວິສາຫະກິດ**

ການລາຍງານການເຄື່ອນໄຫວຂອງວິສາຫະກິດ ໃຫ້ປະຕິບັດ ດັ່ງນີ້:

- ວິສາຫະກິດ ທີ່ລົງທຶນໃນກິດຈະການທົ່ວໄປ ໃຫ້ລາຍງານສະພາບການເຄື່ອນໄຫວຂອງຕົນປະຈໍາທຸກເດືອນ ແລະ ປະຈໍາປີ ໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ;
- ວິສາຫະກິດ ທີ່ລົງທຶນໃນກິດຈະການສໍາປະທານ ຫລື ມີບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາກັບລັດຖະບານ ໃຫ້ລາຍງານສະພາບການເຄື່ອນໄຫວຂອງຕົນ ປະຈໍາທຸກເດືອນ ແລະ ປະຈໍາປີ ຫລື ຕາມທີ່ໄດ້ກໍານົດໄວ້ໃນ ບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ໃຫ້ຂະແໜງການແຜນການ ແລະ ການລົງທຶນ;

## ໝວດທີ 13
## ການຮັບຮູ້ການລົງທຶນຂອງວິສາຫະກິດ ທີ່ໄດ້ຮັບອະນຸຍາດຜ່ານມາ

**ມາດຕາ 65. ການຮັບຮູ້ການລົງທຶນຂອງວິສາຫະກິດທີ່ໄດ້ຮັບອະນຸຍາດຜ່ານມາ**

ບັນດາວິສາຫະກິດ ທີ່ໄດ້ຮັບໃບອະນຸຍາດລົງທຶນ ຫລື ເຊັນສັນຍາສໍາປະທານກ່ອນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ຖືກປະກາດໃຊ້ ແລະ ມີຜົນໃນການຈັດຕັ້ງປະຕິບັດຢ່າງເປັນທາງການ ແມ່ນຖືກຮັບຮູ້ສິດ ແລະ ພັນທະຕາມທີ່ໄດ້ກໍານົດໄວ້ໃນ ໃບອະນຸຍາດລົງທຶນພາຍໃນ ຫລື ໃບອະນຸຍາດລົງທຶນ ຕ່າງປະເທດ ຫລື ສັນຍາສໍາປະທານ ປະເພດຕ່າງໆ ຈົນກວ່າຈະໝົດອາຍຸການລົງທຶນ.

ວິສາຫະກິດທີ່ໄດ້ຮັບອະນຸຍາດຜ່ານມາ ຊຶ່ງມີຈຸດປະສົງຕ້ອງການຮັບນະໂຍບາຍສົ່ງເສີມການລົງທຶນຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ໃຫ້ສະເໜີພາຍໃນກໍານົດ ເກົ້າສິບ ວັນລັດຖະການ ນັບແຕ່ວັນປະກາດໃຊ້ດໍາລັດສະບັບນີ້ ຕໍ່ຂະແໜງການ ດັ່ງນີ້:

- ວິສາຫະກິດທີ່ລົງທຶນໃນກິດຈະການທົ່ວໄປ ໃຫ້ສະເໜີຕໍ່ ຂະແໜງການອຸດສາຫະກໍາ ແລະ ການຄ້າ;
- ວິສາຫະກິດທີ່ລົງທຶນໃນກິດຈະການສໍາປະທານ ໃຫ້ສະໜີຕໍ່ຂະແໜງການແຜນການ ແລະ ການລົງທຶນ.

**ມາດຕາ 66. ການຂໍຢັ້ງຢືນ ແລະຮັບຮອງຕໍ່ການປ່ຽນແປງເອກະສານນິຕິກໍາ**

ວິສາຫະກິດ ທີ່ໄດ້ຮັບອະນຸຍາດລົງທຶນ ກ່ອນ ແລະ ຫລັງ ດໍາລັດສະບັບນີ້ ຊຶ່ງມີຈຸດປະສົງປ່ຽນແປງເນື້ອໃນຂອງເອກະສານນິຕິກໍາໃດໜຶ່ງ ຕ້ອງສະເໜີຂໍການຢັ້ງຢືນ ແລະ ຮັບຮອງ ຢ່າງເປັນທາງການ ຈາກພາກສ່ວນ ດັ່ງນີ້:

- ສໍາລັບວິສາຫະກິດທີ່ລົງທຶນໃນກິດຈະການທົ່ວໄປ ໃຫ້ສະເໜີຕໍ່ ຂະແໜງການອຸດສາຫະກໍາ ແລະ

ການຄ້າ;

- ສຳລັບວິສາຫະກິດທີ່ລົງທຶນໃນກິດຈະການສຳປະທານ ໃຫ້ສະເໜີຕໍ່ຂະແໜງການແຜນການ ແລະ ການລົງທຶນ ບ່ອນທີ່ຕົນໄດ້ຮັບອະນຸຍາດ ເຊັນສັນຍາ.

## ໝວດທີ 14
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 67. ນະໂຍບາຍຕໍ່ຜູ້ມີຜົນງານ

ນະໂຍບາຍຕໍ່ຜູ້ມີຜົນງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 96 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

- ບຸກຄົນ ຫລື ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ການດຶງດູດ ແລະ ຊຸກຍູ້ການລົງທຶນ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ ໂດຍການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.
- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການເຄື່ອນໄຫວດຳເນີນທຸລະກິດໂດຍສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ ເປັນຕົ້ນ ການລົງທຶນມີປະສິດທິຜົນສູງ, ການປະຕິບັດພັນທະຕ່າງໆໄດ້ດີ, ການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ, ນຳໃຊ້ ແລະ ຍົກລະດັບແຮງງານຄົນລາວໄດ້ດີ, ປະກອບສ່ວນໃນການຫຼຸດຜ່ອນ ແລະ ແກ້ໄຂຄວາມທຸກຍາກ ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ, ການຮັກສາສະພາບແວດລ້ອມ, ການອະນຸລັກຮັກສາ ແລະ ສົ່ງເສີມວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ ໂດຍການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 68. ມາດຕະການຕໍ່ຜູ້ລະເມີດ

ມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 97 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ໃຫ້ປະຕິບັດ ດັ່ງນີ້:

- ບຸກຄົນໃດທີ່ລະເມີດ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ຂັດຂວາງທ່ວງດຶງເອກະສານ, ເມີນເສີຍຕໍ່ໜ້າທີ່ວຽກງານທີ່ຖືກມອບໝາຍ ຈະຖືກສຶກສາອົບຮົມ, ລົງວິໄນ, ຫລື ດຳເນີນຄະດີ ຕາມລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.
- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ລະເມີດ ກົດໝາຍຂອງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະໄລຍະ ຈະຖືກກ່າວເຕືອນ ແລະ ປະຕິບັດມາດຕະການຕາມຂັ້ນຕອນ ດັ່ງນີ້:

1. ຄັ້ງທີ 1 ຈະຖືກຕັກເຕືອນ, ສຶກສາອົບຮົມ ແລະ ແນະນຳ ໃຫ້ຈັດຕັ້ງປະຕິບັດຖືກຕ້ອງໂດຍມີບົດບັນທຶກເປັນລາຍລັກອັກສອນ ຄັກແນ່.

2. ຄັ້ງທີ 2 ຈະຖືກປະຕິບັດມາດຕະການຕ່າງໆ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງທີ່ໄດ້ກຳນົດໄວ້ ດັ່ງນີ້:
   - ວິສາຫະກິດ ທີ່ບໍ່ນຳໃຊ້ໃບເກັບເງິນ ຫລື ໄດ້ນຳໃຊ້ ແຕ່ບໍ່ຖືກຕ້ອງຕາມ ດຳລັດວ່າດ້ວຍໃບເກັບເງິນ; ບໍ່ຖືບັນຊີ ຫລື ຖືບັນຊີບໍ່ຖືກຕ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ຈະຖືກປະຕິບັດມາດຕະການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍໃບເກັບເງິນ, ກົດໝາຍວ່າດ້ວຍການບັນຊີ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ;
   - ໃນກໍລະນີ ວິສາຫະກິດ ບໍ່ເສັຍພັນທະຄົບຖ້ວນ, ຂະແໜງການການເງິນ ຈະບໍ່ອອກໃບຢັ້ງຢືນການເສັຍພັນທະ ແລະ ຈະບໍ່ຮັບຮອງເອົາແຜນການນຳເຂົ້າວັດຖຸດິບ, ອຸປະກອນ, ເຄື່ອງຈັກ ແລະ ພາຫະນະຮັບໃຊ້ການຜະລິດທາງກົງ ໃຫ້ແກ່ວິສາຫະກິດຈົນກ່ວາ ວິສາຫະກິດດັ່ງກ່າວ ໄດ້ເສັຍພັນທະຄົບຖ້ວນຕາມກົດໝາຍ. ຂະແໜງການການເງິນມີ ສິດສະເໜີ ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະ ການຄ້າ ສັ່ງໂຈະການເຄື່ອນໄຫວຂອງວິສາຫະກິດ ໄວ້ຊົ່ວຄາວ.
   - ວິສາຫະກິດທີ່ເຄື່ອນໄຫວທຸລະກິດ ແຕ່ບໍ່ແຈ້ງເສັຍອາກອນປະເພດຕ່າງໆ ທີ່ກ່ຽວຂ້ອງກັບການດຳເນີນທຸລະກິດຂອງຕົນ ຫລື ໄດ້ແຈ້ງເສັຍ ແຕ່ບໍ່ຖືກຕ້ອງຕາມກຳນົດເວລາ ຫລື ບໍ່ຖືກຕ້ອງຕາມການເຄື່ອນໄຫວທຸລະກິດຕົວຈິງ ຊຶ່ງຂະແໜງການສ່ວຍສາອາກອນ ໄດ້ສຶກສາອົບຮົມ, ແນະນຳ, ຕັກເຕືອນ ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ອອກໃບເລັ່ງທວງການແຈ້ງເສັຍອາກອນ ແລະ ອອກໃບເຕືອນການແຈ້ງເສັຍອາກອນ ແຕ່ກໍ່ຍັງບໍ່ມາແຈ້ງເສັຍອາກອນຕະຫຼອດໄລຍະເວລາ ໜຶ່ງປີ ຂະແໜງການສ່ວຍສາອາກອນ ຈະສະເໜີໃຫ້ ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການ ອຸດສາຫະກຳ ແລະ ການຄ້າ ຖອນໃບທະບຽນສຳປະທານ ຫລື ໃບທະບຽນວິສາຫະກິດ.

ພາຍຫຼັງທີ່ໄດ້ຮັບການສະເໜີຈາກ ຂະແໜງການສ່ວຍສາອາກອນ, ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະ ການຄ້າ ຈະພິຈາລະນາຖອນໃບທະບຽນສຳປະທານ ຫລື ໃບທະບຽນວິສາຫະກິດພາຍໃນກຳນົດ ໜຶ່ງ ເດືອນ ຫລື ຈະຖືກດຳເນີນຄະດີຕາມຂະບວນຍຸຕິທຳ ແລ້ວແຕ່ລະກໍລະນີ.

## ໝວດ 15
## ບົດບັນຍັດສຸດທ້າຍ

**ມາດຕາ 69. ການຈັດຕັ້ງປະຕິບັດ**

ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການການເງິນ, ຂະແໜງການທະນາຄານ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 70. ຜົນສັກສິດຂອງດຳລັດ**

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍສົ່ງເສີມການລົງທຶນພາຍໃນ ສະບັບເລກທີ 300/ນຍ ລົງວັນທີ 12 ຕຸລາ 2005 ແລະ ດຳລັດ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດສະບັບເລກທີ 301/ນຍ ລົງວັນທີ 12 ຕຸລາ 2005 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ທອງສິງ ທຳມະວົງ

# (ຮ່າງ)ເອກະສານຊ້ອນທ້າຍ ເລກທີ 1: ກິດຈະການທີ່ໄດ້ຮັບການສົ່ງເສີມ

| ລະຫັດ ISIC | ປະເພດກິດຈະການ | ລະດັບການສົ່ງເສີມ | | | ໝາຍເຫດ |
|---|---|---|---|---|---|
| | | ອັນດັບ 1 | ອັນດັບ 2 | ອັນດັບ 3 | |
| I | **ຂະແໜງ ກະສິກຳ ( ຕາມຄຳເຫັນຂອງກະຊວງກະສິກຳ ສະບັບເລກທີ 0233/ກລປ.ຂກ, ລົງວັນທີ 15/09/2010)** | | | | |
| | *ພືດ ແລະ ຜະລິດຕະພັນຈາກສັດລ້ຽງ, ການລ່າເນື້ອ ແລະ ການເຄື່ອນໄຫວບໍລິການທີ່ກ່ຽວຂ້ອງ* | | | | |
| | *ການຜະລິດ ແລະ ການລ້ຽງສັດ* | | | | |
| 0 141 | ການລ້ຽງງົວ ແລະ ຄວາຍ | | | | |
| | ການລ້ຽງງົວຊີ້ນເປັນຟາມ ຂະໜາດການຜະລິດ 10 ໂຕຕໍ່ອາທິດຂື້ນໄປ | | ✔ | | |
| | ການລ້ຽງງົວຊີ້ນເປັນຟາມຜະລິດລູກ ເພື່ອຈຳໜ່າຍ 50 ໂຕແມ່ຂື້ນໄປ | ✔ | | | |
| | ການລ້ຽງງົວພໍ່ພັນ ເພື່ອຜະລິດນ້ຳເຊື້ອສະໜອງໃຫ້ແກ່ການຂະຫຍາຍການຜະລິດຈຳໜ່າຍ 50 ແມ່ຂື້ນໄປ | ✔ | | | |
| | ການລ້ຽງງົວນົມແບບເປັນຟາມ ທີ່ມີ 50 ແມ່ຂື້ນໄປ | | ✔ | | |
| | ການລ້ຽງງົວຊີ້ນຄົບວົງຈອນ ເພື່ອສົ່ງອອກຕ່າງປະເທດ | ✔ | | | |
| | ການລ້ຽງຄວາຍເປັນຟາມຄົບວົງຈອນ | ✔ | | | |
| | ການລ້ຽງງົວເພື່ອການສຶກສາ, ຄົ້ນຄວ້າວິໃຈ ແລະ ອະນຸລັກພັນງົວ ຫລື ຄວາຍ | ✔ | | | |
| 0 142 | ການລ້ຽງສັດ ແລະ ສັດສາຍພັນດຽວ | | | | |
| | ການລ້ຽງມ້າແບບເປັນຟາມເພື່ອຜະລິດລູກທີ່ມີ 50 ແມ່ຂື້ນໄປ | ✔ | | | |
| | ການລ້ຽງມ້າແບບເປັນຟາມເພື່ອຜະລິດລູກທີ່ມີ 50 ແມ່ຂື້ນໄປ | ✔ | | | |
| | ການລ້ຽງມ້າເພື່ອການສຶກສາ, ຄົ້ນຄ້ວາວິໃຈ ແລະ ອະນຸລັກ | ✔ | | | |
| 0 144 | ການລ້ຽງແກະ ແລະ ແບ້ | | | | |
| | ການລ້ຽງແກະ ແລະ ແບ້ ແບບເປັນຟາມທີ່ມີ 100 ແມ່ພື້ນຖານຂື້ນໄປ | | | ✔ | |
| | ການລ້ຽງພໍ່ພັນແກະ ຫລື ແບ້ ເພື່ອຜະລິດນ້ຳເຊື້ອສະໜອງໃຫ້ແກ່ການຂະຫຍາຍການຜະລິດ | ✔ | | | |
| | ການລ້ຽງແກະ ແລະ ແບ້ແບບເປັນຟາມເພື່ອສົ່ງອອກຕ່າງປະເທດ | ✔ | | | |
| | ການລ້ຽງແກະ ຫລື ແບ້ ເພື່ອການສຶກສາ, ຄົ້ນຄວ້າວິໃຈ ແລະ ພັດທະນາສາຍພັນ | ✔ | | | |
| 0 145 | ການລ້ຽງໝູ | | | | |
| | ການລ້ຽງໝູພັນຊີ້ນ ແບບເປັນຟາມເພື່ອສະໜອງຕະຫລາດພາຍໃນ ບໍ່ຕ່ຳກວ່າ 500 ໂຕ/ຊຸດ | | | ✔ | |

| | | | | | |
|---|---|---|---|---|---|
| | ການລ້ຽງໝູພັນຊີ້ນ ແບບເປັນຟາມເພື່ອສົ່ງອອກຕ່າງປະເທດ | ✔ | | | |
| | ການລ້ຽງໝູພັນແບບເປັນຟາມເພື່ອຜະລິດລູກ ເພື່ອຈຳໜ່າຍທີ່ມີແມ່ພັນ 100 ແມ່ຂື້ນໄປ | ✔ | | | |
| | ການລ້ຽງໝູພື້ນເມືອງແບບເປັນຟາມຄົບວົງຈອນເພື່ອສະໜອງພາຍໃນ ແລະ ສົ່ງອອກ | ✔ | | | |
| | ການລ້ຽງໝູພໍ່ພັນ ເພື່ອບໍລິການປະສົມພັນເປັນຟາມຄົບວົງຈອນ | ✔ | | | |
| | ການລ້ຽງໝູເພື່ອການສຶກສາ, ຄົ້ນຄວ້າວິໃຈ, ພັດທະນາ ຫລື ອະນຸລັກສາຍພັນໝູ | ✔ | | | |
| 0 146 | ການລ້ຽງສັດປີກ | | | | |
| | ການລ້ຽງສັດປີກແບບເປັນຟາມເພື່ອຜະລິດລູກ | | | ✔ | |
| | ການລ້ຽງສັດປີກແບບເປັນຟາມຄົບວົງຈອນ | | | ✔ | |
| | ການລ້ຽງໄກ່ພັນໄຂ່ ເພື່ອຜະລິດໄຂ່ 6,000 ແມ່ຂື້ນໄປ | | | ✔ | |
| | ການລ້ຽງໄກ່ພັນຊີ້ນແບບເປັນຟາມ 120,000 ຕໍ່ປີຂື້ນໄປ | | | ✔ | |
| | ການລ້ຽງເປັດ ເພື່ອຜະລິດໄຂ່ ຫລື ຊີ້ນແບບເປັນຟາມຂະໜາດ 3,000 ແມ່ຂື້ນໄປ | | | ✔ | |
| | ການລ້ຽງໄກ່ງວງແບບເປັນຟາມຄົບວົງຈອນ | | | ✔ | |
| | ການລ້ຽງນົກກະທາແບບເປັນຟາມ | | | ✔ | |
| | ການລ້ຽງຫ່ານແບບເປັນຟາມ | | | ✔ | |
| | ການລ້ຽງນົກແບບເປັນຟາມ | | | ✔ | |
| | ການລ້ຽງສັດປີກເພື່ອການສຶກສາ, ຄົ້ນຄວ້າວິໃຈ | | ✔ | | |
| 0 149 | ການລ້ຽງສັດອື່ນໆ | | | | |
| | ການລ້ຽງຊ້າງ | ✔ | | | |
| | ການລ້ຽງກວາງແບບເປັນຟາມ | ✔ | | | |
| | ການລ້ຽງກະຕ່າຍແບບເປັນຟາມ | | | ✔ | |
| | ການລ້ຽງປະເພດສັດປ່າແບບເປັນຟາມ | | | ✔ | |
| | ການລ້ຽງເຜິ້ງ ຫລື ແມງໄມ້ທີ່ກິນໄດ້ ແບບເປັນຟາມ | ✔ | | | |
| | ການລ້ຽງສັດທົດລອງ ເພື່ອການສຶກສາ, ຄົ້ນຄວ້າວິໃຈ | ✔ | | | |
| 0 150 | ການເຮັດກະສິກຳແບບປະສົມປະສານ | ✔ | | | |
| | *ການເຄື່ອນໄຫວສະໜັບສະໜູນດ້ານກະສິກຳໄລຍະກ່ອນ ແລະ ຫລັງການເກັບກ່ຽວ* | | | | |
| 0 162 | ການເຄື່ອນໄຫວສະໜັບສະໜູນການຜະລິດສັດລ້ຽງ | ✔ | | | |

| | | | | | |
|---|---|---|---|---|---|
| | ການລົງທຶນດ້ານແນວພັນສັດ | ✔ | | | |
| | ການລົງທຶນດ້ານອາຫານສັດ | ✔ | | | |
| | ການລົງທຶນດ້ານອາຫານປາ | ✔ | | | |
| | ການລົງທຶນດ້ານການຜະລິດຢາສັດຕະວະແພດ (ຢາກັນ, ປິ່ນປົວ) | ✔ | | | |
| | ການລົງທຶນໃສ່ໂຮງງານຂ້າສັດແບບທັນສະໄໝ | ✔ | | | |
| 0 163 | ການເຄື່ອນໄຫວໄລຍະຫລັງການເກັບກ່ຽວ | | | | |
| | ກົນຈັກເກັບກ່ຽວເຟືອງ ແລະ ພືດອາຫານສັດ | ✔ | | | |
| | ການປຸງແຕ່ງຜະລິດຕະພັນສັດ ແລະ ປາ | ✔ | | | |
| | ກົນຈັກເຄື່ອງອົບແຫ້ງພືດອາຫານສັດ | ✔ | | | |
| 0 164 | ການປັບປຸງ ແລະ ກະກຽມແນວພັນ ເພື່ອໂຄສະນາເຜີຍແຜ່ | ✔ | | | |
| | *ການປະມົງ ແລະ ການລ້ຽງສັດ* | | | | |
| | *ການປະມົງ* | | | | |
| 0 312 | ການປະມົງໃນນ້ຳຈືດ (ແມ່ນ້ຳ) | | | | |
| | ການເພາະພັນ ຫລື ຜະລິດລູກປາ | ✔ | | | |
| | ການລ້ຽງປາກະຊັງ ເປັນຟາມຂະໜາດໃຫ່ຍ | | | ✔ | |
| | ການລ້ຽງປາໃນໜອງຂະໜາດ 1,5 ເຮັກຕາ ຂື້ນໄປ | | | ✔ | |
| | ການລ້ຽງສັດນ້ຳ | ✔ | | | |
| | *ການລ້ຽງສັດນ້ຳ* | | | | |
| 0 322 | ການລ້ຽງສັດນ້ຳໃນນ້ຳຈືດ (ແມ່ນ້ຳ) | | | | |
| | ການລ້ຽງກົບແບບເປັນຟາມເພື່ອສົ່ງອອກ | ✔ | | | |
| | ການລ້ຽງກຸ້ງໃນນ້ຳຈືດ | ✔ | | | |
| | ການລ້ຽງກຸ້ງນ້ຳກ່ອຍ | ✔ | | | |
| | ການລ້ຽງປາຝາ | ✔ | | | |
| | ການລ້ຽງແຂ້ | ✔ | | | |
| | ການລ້ຽງປາ ແລະ ສັດນ້ຳເພື່ອຄົນວິໃຈ | ✔ | | | |

| | | | | | |
|---|---|---|---|---|---|
| | *ການເຄື່ອນໄຫວກ່ຽວກັບສຸກຂະພາບສັດ ແລະ ດ້ານອື່ນກ່ຽວກັບສັດ ແລະສັດນ້ຳ* | | | | |
| | ໂຮງໝໍປົວສັດ | ✔ | | | |
| | ຄລີນິກ ຫລື ບ່ອນບໍລິການດ້ານສັດຕະວະແພດ | | ✔ | | |
| | ການບໍລິການວິໄຈອາຫານສັດ | ✔ | | | |
| | ຫ້ອງວິໄຈພະຍາດສັດ ແລະ ພະຍາດປາ | ✔ | | | |
| | ສູນຜະລິດນ້ຳເຊື້ອ ແລະ ໃນໂຕຣເຈນແຫລວ | ✔ | | | |
| | ການວິໄຈກ່ຽວກັບຢາສັດ | ✔ | | | |
| | ການບໍລິການກັກກັນສັດ | ✔ | | | |
| | *ການສຶກສາຄົ້ນຄ້ວາ ແລະ ກ່ຽວກັບສັດ* | | | | |
| | ໂຮງຮຽນວິຊາຊີບລ້ຽງສັດ, ສັດຕະວະແພດ ຫລື ປະມົງ | ✔ | | | |
| | ຫ້ອງພິພິດຕະພັນລ້ຽງສັດ, ສັດນ້ຳ, ສັດປ່າ ຫລື ສວນສັດ | ✔ | | | |
| | ສະຫະກອນການຜະລິດ ຫລື ບໍລິການດ້ານການລ້ຽງສັດ ຫລື ສັດນ້ຳ | | ✔ | | |
| | ການຜະລິດສື່ໂຄສະນາກ່ຽວກັບການລ້ຽງສັດ, ສັດຕະວະແພດ ແລະ ປະມົງ | | ✔ | | |
| | *ຂະແໜງປູກຝັງ* | | | | |
| | *ການປູກພືດລົ້ມລຸກ* | | | | |
| 0111 | ການປູກພືດປະເພດໃຫ້ເມັດ(ຍົກເວັ້ນ ເຂົ້າ), ຖົ່ວເຫຼືອງ, ຖົ່ວຂຽວ, ຖົ່ວດິນ ແລະ ການ ປູກພືດ ເພື່ອຜະລິດເມັດພັນ | | ✓ | | |
| 0112 | ການປູກເຂົ້າ | | ✓ | | |
| 0113 | ການປູກພືດຜັກ ກິນໃບ, ຮາກ ແລະ ຫົວ | | | ✓ | |
| 0114 | ການປູກອ້ອຍ | | ✓ | | |
| 0115 | ການປູກຢາສູບ | | | ✓ | |
| 0116 | ການປູກພືດປະເພດໃຫ້ເສັ້ນໃຍ | | | ✓ | |
| 0119 | ການປູກສາລີ | | ✓ | | |
| | ການປູກພືດຕະກູນຖົ່ວ | | | ✓ | |
| | ການປູກໝາກກ້ວຍ | | ✓ | | |
| | ການປູກໝາກນັດ | | ✓ | | |
| | ການປູກມັນຕົ້ນ | | ✓ | | |

| | | | | | |
|---|---|---|---|---|---|
| | ການປູກພືດປະເພດເຜືອກ | | | ✓ | |
| | ການປູກພືດ ຕະກູນໝາກແຕງ, ໝາກໂມ | | ✓ | | |
| | ການປູກພືດ ສຳລັບເຂດໜາວ, ເຂດຮ້ອນ ຈຳນວນໜຶ່ງ | | | ✓ | |
| | **ການປູກພືດໄມ້ຢືນຕົ້ນ** | | | | |
| | ການປູກຊາດື່ມ | ✓ | | | |
| | ການປູກກາເຟ | ✓ | | | |
| | ການປູກໝາກມ່ວງ | ✓ | | | |
| | ການປູກໝາກຕ້ອງ | ✓ | | | |
| | ການປູກໝາກລຳມຸດ | ✓ | | | |
| | ການປູມໝາກຖົ່ວລຽນ | ✓ | | | |
| | ການປູກໝາກມີ້ | ✓ | | | |
| | ການປູກໝາກລຳໃຍ | ✓ | | | |
| | ການປູກໝາກຂຽບ | ✓ | | | |
| | ການປູກໝາກສີດາ | ✓ | | | |
| | ການປູກໝາກລີ້ນຈີ້ | ✓ | | | |
| | ການປູກໝາກຈອງ | ✓ | | | |
| | ການປູກໝາກຄາຍ | ✓ | | | |
| | ການປູກໝາກໜັ້ນ | ✓ | | | |
| | ການປູກໝາກມັງກອນ | | ✓ | | |
| | ການປູກໝາກກະທັນ | | ✓ | | |
| | ການປູກໝາກໄມ້ ສຳລັບເຂດຮ້ອນ ແລະເຄິ່ງເຂດຮ້ອນ ຈຳນວນໜຶ່ງ | | ✓ | | |
| | ການປູກໝາກອາງຸ່ນ | ✓ | | | |
| | ການປູກໝາກພ້າວ | ✓ | | | |
| | ການປູກໝາກໄມ້ຕະກູນໝາກກ້ຽງ | | ✓ | | |
| 0123 | ການປູກໝາກໄມ້ຕະກູນໝາກໂປມ ແລະ ໝາກໄມ້ແກ່ນແຂງ | ✓ | | | |
| 0124 | ການປູກໝາກໄມ້ປະເພດເປັນພຸ່ມ, ເປືອກແຂງ ແລະ ຕົ້ນໄມ້ອື່ນໆ | | ✓ | | |

| | | | | | |
|---|---|---|---|---|---|
| 0125 | ການປູກພືດ ເພື່ອຜະລິດນ້ຳມັນ | ✓ | | | |
| 0127 | ການປູກພືດ ສຳລັບເຮັດເຄື່ອງດື່ມ | ✓ | | | |
| 0128 | ການປູກພືດເພື່ອເປັນສ່ວນປະກອບຂອງອາຫານ ເຊັ່ນ: ເຄື່ອງເທດ, ຢາ, ປຸງແຕ່ງເປັນນ້ຳຫອມ ແລະ ຢາ | | ✓ | | |
| 0129 | ການປູກຕົ້ນໄມ້ຢືນຕົ້ນອື່ນໆ | ✓ | | | |
| 0 130 | ການໂຄສະນາ ວິທະຍາສາດການປູກພືດ | | ✓ | | |
| | *ການເຄື່ອນໄຫວ ສະໜັບສະໜູນດ້ານກະສິກຳ ໄລຍະກ່ອນ ແລະ ຫຼັງການເກັບກ່ຽວ* | | | | |
| 0161 | ການບໍລິການ ສຳລັບ ການປູກພືດ | | ✓ | | |
| 0163 | ການບໍລິການຫຼັງການເກັບກ່ຽວ | | ✓ | | |
| 0164 | ການຜະລິດແນວພັນພືດ | | ✓ | | |
| | *ການຜະລິດສານເຄມີພື້ນຖານ, ຝຸ່ນວິທະຍາສາດ ແລະ ການປະສົມປະສານ ໄນໂຕເຈນ, ປລາສຕິກ ແລະ ສັງເຄາະໃນແບບຊິງເບື້ອງຕົ້ນ.* | | | | |
| 2012 | ການຜະລິດຝຸ່ນວິທະຍາສາດ ແລະ ສ່ວນປະສົມປະສານໄນໂຕຣເຈນ | | | | |
| | ການຜະລິດຝຸ່ນວິທະຍາສາດ | | ✓ | | |
| II | **ຂະແໜງ ຖະແຫຼງຂາວ ແລະ ວັດທະນາທຳ (ຕາມຄຳເຫັນຂອງກະຊວງ ສະບັບເລກທີ 587/ຖວ, ລົງວັນທີ 4/10/2010)** | | | | |
| | *ກິມພິມຈຳໜ່າຍ* | | | | |
| | **ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ** | | | | |
| | ການພິມ ການອັດສຳເນົາພາບແສງສີສຽງທີ່ອັດບັນທຶກມາ | | ✔ | | |
| | ການພິມ ແລະ ການບໍລິການທີ່ກ່ຽວພັນກັບການພິມ | | ✔ | | |
| 1811 | ການເຄື່ອນໄຫວບໍລິການທີ່ກ່ຽວພັນກັບການພິມ | | ✔ | | |
| 1820 | ການອັດສຳເນົາພາບແສງສີສຽງບັນທຶກມາ | ✔ | | | |
| | ການເຄື່ອນໄຫວຈັດພິມການພິມປຶ້ມ, ວາລະສານ ແລະ ການຈັດພິມອື່ນໆ | ✔ | | | |
| 5811 | ການພິມປຶ້ມອ່ານ | ✔ | | | |
| 5812 | ການພິມສາລະບານ ແລະ ຈົດໝາຍເຫດ | ✔ | | | |
| 5819 | ການເຄື່ອນໄຫວຈັດພິມອື່ນໆ | ✔ | | | |
| 5820 | ການຈັດພິມຊອບແວ | ✔ | | | |

| | | | | | |
|---|---|---|---|---|---|
| | *ກົມຮູບເງົາ* | | | | |
| | *ການເຄື່ອນໄຫວດ້ານຮູບເງົາ, ວີດີໂອ ແລະ ການຜະລິດລາຍການໂທລະພາບ, ການອັດບັດບັນທຶກສຽງ ແລະ ການເຄື່ອນໄຫວຈັດພິມບົດເພັງຕ່າງໆ* | | | | |
| | *ການເຄື່ອນໄຫວດ້ານຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ* | | | | |
| | ການສ້າງຕັ້ງໂຮງສາຍຮູບເງົາ | | | ✔ | |
| | ການສ້າງຕັ້ງໜ່ວຍສາຍຮູບເງົາເຄື່ອນທີ່ | | | ✔ | |
| 5911 | ການຜະລິດຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | | | ✔ | |
| 5912 | ການເຕີມແຕ່ງຮູບເງົາ,ວີດີໂອ ແລະ ລາຍການໂທລະພາບ | | ✔ | | |
| 5913 | ການເຄື່ອນໄຫວແຈກຢາຍຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | | | ✔ | |
| 5914 | ກິດຈະກຳການສາຍຮູບເງົາ | | ✔ | | |
| | *ກົມສື່ມວນຊົນ* | | | | |
| 5920 | ການເຄື່ອນໄຫວຈັດພິມບົດເພັງ ການບັນທຶກສຽງ | | | | |
| | ການບັນທຶກສຽງ | | | | |
| | *ການເຄື່ອນໄຫວອອກອາກາດ ແລະ ຈັດລາຍການ* | | | | |
| 6010 | ການອອກອາກາດທາງວິທະຍຸ, ການອອກອາກາດທາງໂທລະພາບ ແລະ ເຊົ່າຊື້ລາຍການ | ✔ | | | |
| 6021 | ການອອກອາກາດທາງໂທລະພາບ | ✔ | | | |
| | *ກົມສິລະປະການສະແດງ* | | | | |
| 9000 | ການປະດິດ, ສິລະປະ ແລະ ການເຄື່ອນໄຫວບັນເທີງ, ຫໍສະໝຸດ, ຫໍເກັບເອກະສານ, ຫໍພິພິດຕະພັນ ແລະ ການເຄື່ອນໄຫວທາງວັດທະນະທຳ | | | | |
| | ການປະດິດແຕ່ງ | | | | |
| | ໂຮງຮຽນສິລະປະດົນຕີພື້ນເມືອງ ແລະ ສາກົນ | ✔ | | | |
| | ໂຮງຮຽນຟ້ອນບາເລເທິງນ້ຳກ້ອນ ແລະ ເຕັ້ນລີລາດແບບສາກົນ | ✔ | | | |
| | ໂຮງຮຽນກຳກັບການສະແດງລະຄອນ ແລະ ກຳກັບການສະແດງທົ່ວໄປ | ✔ | | | |
| | ໂຮງງານຜະລິດຕຸກກະຕາ | ✔ | | | |
| | ໂຮງງານຜະລິດເຄື່ອງດົນຕີພື້ນເມືອງ ແລະ ສາກົນ | ✔ | | | |

| | | | | | |
|---|---|---|---|---|---|
| | ໂຮງຮຽນສອນວິທະຍາກິນ | ✔ | | | |
| | ຫໍສະໝຸດແຫ່ງຊາດ ແລະ ຫໍພິພິດຕະພັນ | | | | |
| 9101 | ການເຄື່ອນໄຫວຫໍສະໝຸດ ແລະ ການເກັບມ້ຽນເອກະສານ | | | | |
| 9102 | ກິດຈະກຳຫໍພິພິດຕະພັນ ແລະ ການດຳເນີນການສະຖານທີ່ ແລະ ອາຄານປະຫັວດສາດ | | | | |
| | *ກິນວັດທະນະທຳມະຫາຊົນ* | | | | |
| | ການຜະລິດເຄື່ອງຫລິ້ນເກມ ແລະ ເຄື່ອງຫລິ້ນອື່ນໆ | | | ✔ | |
| | ການເຄື່ອນໄຫວວຽກງານສັງຄົມທີ່ບໍ່ມີບ່ອນໃຫ້ພັກເຊົາອື່ນໆ | | | ✔ | |
| | ສວນອຸດທະຍານ, ສວນສັດວິທະຍາ ແລະ ການເຄື່ອນໄຫວຮັກສາທຳມະຊາດ | ✔ | | | |
| | ກິດຈະກຳສວນສະໜຸກ ແລະ ສວນປະເພດດຽວກັນ | | ✔ | | |
| **III** | **ຂະແໜງ ທ່ອງທ່ຽວ (ຕາມຄຳເຫັນຂອງອົງການທ່ອງທ່ຽວ ລະບັບເລກທີ 0308/ອທຊ, ລົງວັນທີ 29/7/2010)** | | | | |
| | ສູນປະຊຸມ ແລະ ວາງສະແດງສິນຄ້າເພື່ອການທ່ອງທ່ຽວ | ✔ | | | |
| | ສະຖານທີ່ທ່ອງທ່ຽວ (ສວນສັດເປີດ, ສວນວັດທະນະທຳ, ແຫ່ລງທ່ອງທ່ຽວຈຳລອງ...) | | ✔ | | |
| | ໂຮງແຮມ, ຣີສອດ (ລະດັບສີ່ດາວຂື້ນໄປ) | ✔ | | | |
| | ທຸລະກິດຂົນສົ່ງນັກທ່ອງທ່ຽວ | ✔ | | | |
| | ພັດຕະຄານ | ✔ | | | |
| | ໂຮງແຮມແຄມຖະໜົນໃຫ່ຍ (ໂມເຕັນ) | | ✔ | | |
| | ເຮືອທ່ອງທ່ຽວທີ່ມີຫ້ອງພັກແຮມ (ເຮືອສຳລານຂະໜາດ15 ຫ້ອງຂື້ນໄປ) | | ✔ | | |
| | ສະຖາບັນ, ສູນຝຶກອົບຮົມດ້ານການທ່ອງທ່ຽວ | | ✔ | | |
| **IV** | **ຂະແໜງພັດທະນາສີມືແຮງງານ ແລະ ຈັດຫາງານ (ຕາມຄຳເຫັນຂອງກະຊວງແຮງງານ ສະບັບລົງວັນທີ 15/9/2010)** | | | | |
| | *ການເຄື່ອນໄຫວວຽກງານຈັດຫາງານ* | | | | |
| | *ການສ້າງວຽກເຮັດງານທຳ* | | | | |
| | ບໍລິການຈັດຫາງານຂອງເອກະຊົນລາວ ຫລື ເອກະຊົນລາວຮ່ວມທຶນກັບຕ່າງປະເທດໂດຍມີສູນຝຶກອົບຮົມເປັນຂອງຕົນເອງ | | ✔ | | |
| | *ການຈັດຫາງານຊົ່ວຄາວ* | | | | |
| | ການຈັດຫາງານຊົ່ວຄາວ (ບໍ່ເກີນ 6 ເດືອນ) ເພື່ອຕອບສະໜອງແຮງງານໃນເວລາອັນຮີບດ່ວນຂອງໂຄງການ | | | ✔ | |
| | ສູນບໍລິການຈັດຫາງານປະຈຳພາກ | ✔ | | | |

| | | | | | |
|---|---|---|---|---|---|
| | ຕະໜ່າງບໍລິການຈັດຫາງານປະຈຳແຂວງ ແລະ ເມືອງ | | ✔ | | |
| | *ການພັດທະນາຊັບພະຍາກອນມະນຸດ* | | | | |
| | ສູນພັດທະນາສີມືແຮງງານຂອງແຂວງ | ✔ | | | |
| | ສູນພັດທະນາສີມືແຮງງານປະຈຳພາກ | ✔ | | | |
| | ສູນທົດສອບມາດຕະຖານສີມືແຮງງານ | ✔ | | | |
| **V** | **ຂະແໜງໄປສະນີ ແລະ ໂທລະຄົມ (ຕາມມະຕິຂອງກອງປະຊຸມ ຄັ້ງວັນທີ 5/10/2010 ທີ່ ອົງການໄປສະນີ)** | | | | |
| | *ການຜະລິດເຄື່ອງຄອມພິວເຕີ, ເຄື່ອງອີເລັກໂຕນິກ ແລະ ຜະລິດຕະພັນ* | | | | |
| 2620 | ການຜະລິດເຄື່ອງຄອມພິວເຕີ ແລະ ເຄື່ອງປະກອບສ່ວນນອກ | ✔ | | | |
| 2630 | ການຜະລິດອຸປະກອນດ້ານການສື່ສານ | ✔ | | | |
| | *ການຜະລິດສາຍສົ່ງໄຟຟ້າ ແລະ  ອຸປະກອນສາຍສົ່ງ* | | | | |
| 2736 | ການຜະລິດສາຍໃຍແກ້ວ | ✔ | | | |
| 2732 | ການຜະລິດເຄື່ອງອີເລັກໂຕນິກ ອື່ນໆ ແລະ ສາຍສົ່ງສັນຍານ | ✔ | | | |
| | *ການເຄື່ອນໄຫວດ້ານໂປຣແກມຄອມພິວເຕີ, ໃຫ້ການປຶກສາ ແລະກິດຈະກຳທີ່ກ່ຽວພັນ* | | | | |
| 6201 | ການເຄື່ອນໄຫວດ້ານໂປຣແກມຄອມພິວເຕີ | ✔ | | | |
| | *ການເຄື່ອນໄຫວບໍລິການດ້ານຂໍ້ມູນຂ່າວສານ* | | | | |
| 6311 | ການດຳເນີນການເກັບຂໍ້ມູນ, ຈັດຫາ ແລະ ບັນດາກິດຈະກຳກ່ຽວພັນ | ✔ | | | |
| 6312 | ບໍລິການເຊົ່າຊ່ອງສັນຍານ | ✔ | | | |
| | *ການເຄື່ອນໄຫວບໍລິການດ້ານຂໍ້ມູນຂ່າວສານອື່ນໆ* | | | | |
| 6321 | ສຳນັກງານຂ່າວສານ | | | ✔ | |
| | *ການເຄື່ອນໄຫວດ້ານໄປສະນີ ແລະການຈັດສົ່ງຂ່າວສານ* | | | | |
| | ການຮັບຝາກ, ຈັດສົ່ງ, ແຈກຢາຍໄປສະນີພັນ ແລະພັດສະດຸໄປສະນີ | | | ✔ | |
| **VI** | **ຂະແໜງ ສຶກສາ (ຕາມຄຳເຫັນຂອງກະຊວງສຶກສາ ສະບັບເລກທີ 689/, ລົງວັນທີ 14/9/2010)** | | | | |
| | *ການສຶກສາໃນໂຮງຮຽນ* | | | | |
| | *ການສຶກສາກ່ອນໄວຮຽນ* | | | | |
| | ລ້ຽງເດັກ | ✔ | | | |

| | | | | | |
|---|---|---|---|---|---|
| | ອານຸບານ | ✔ | | | |
| | **ສາມັນສຶກສາ** | | | | |
| | ປະຖົມສຶກສາ | ✔ | | | |
| | ມັດທະຍົມຕອນຕົ້ນ | ✔ | | | |
| | ມັດທະຍົມຕອນປາຍ | ✔ | | | |
| | **ອາຊີວະສຶກສາ** | | | | |
| | ວິຊາຊີບຊັ້ນຕົ້ນ | ✔ | | | |
| | ວິຊາຊີບຊັ້ນກາງ | ✔ | | | |
| | ວິຊາຊີບຊັ້ນສູງ | ✔ | | | |
| | **ການສຶກສາຊັ້ນສູງ** | | | | |
| | **ອານຸປະລິຍາ** | | | | |
| | - ພາສາຕ່າງປະເທດ | ✔ | | | |
| | - ບໍລິຫານທຸລະກິດ | ✔ | | | |
| | - IT | ✔ | | | |
| | **ປະລິຍາຕີ** | | | | |
| | - ພາສາຕ່າງປະເທດ | ✔ | | | |
| | - ບໍລິຫານທຸລະກິດ | ✔ | | | |
| | - IT | ✔ | | | |
| | **ຫຼັງປະລິຍາຕີ** | | | | |
| | - ພາສາຕ່າງປະເທດ | ✔ | | | |
| | - ບໍລິຫານທຸລະກິດ | ✔ | | | |
| | - IT | ✔ | | | |
| | ປະລິຍາໂທ | ✔ | | | |
| | ປະລິຍາເອກ | ✔ | | | |
| | **ການສຶກສານອກໂຮງຮຽນ** | | | | |

| | | | | | |
|---|---|---|---|---|---|
| | ສູນຝຶກວິຊາຊີບຕ່າງໆ | ✔ | | | |
| VII | **ຂະແໜງສາທາ (ຕາມມະຕິກອງປະຊຸມ ຄັ້ງວັນທີ 6/10/2010 ທີ່ກະຊວງສາທາລະນະສຸກ)** | | | | |
| 2100 | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງແຕ່ງ ແລະ ຜະລິດຕະພັນຈາກພືດ | ✓ | | | |
| 3250 | ການຜະລິດ ແລະ ສະໜອງຢາປົວພະຍາດ ແລະ ອຸປະກອນ ການປິ່ນປົວແຂ້ວ | ✓ | | | |
| 8610 | ກິດຈະການໂຮງພະຍາບານ | | | ✓ | |
| | ການລົງທຶນແບບຮຸ້ນສ່ວນກັບໂຮງພະຍາບານໃນການໃຫ້ບໍລິການເຄື່ອງມືອຸປະກອນການເພດ | | ✓ | | |
| 8620 | ການເຄື່ອນໄຫວດ້ານການແພດ ແລະ ການປິ່ນປົວແຂ້ວ | | | ✓ | |
| 8690 | ການເຄື່ອນໄຫວກ່ຽວກັບສຸຂະພາບອື່ນໆ | | | ✓ | |
| | *ການເຄື່ອນໄຫວປິ່ນປົວຮັກສາກັບທີ່* | | | | |
| 8710 | ສະຖານພະຍາບານ | ✓ | | | |
| 8720 | ການເຄື່ອນໄຫວປິ່ນປົວກັບທີ່ ສຳລັບ ຜູ້ມີຄວາມຕອບສະໜອງຊ້າ, ສຸຂະພາບຈິດ ແລະ ຜູ້ທີ່ໄດ້ຮັບຜົນກະທົບທາງຈິດໃຈ | | | ✓ | |
| 8730 | ການເຄື່ອນໄຫວປິ່ນປົວກັບທີ່ສຳລັບຜູ້ສູງອາຍຸ ແລະ ຄົນພິການ | | | ✓ | |
| 8790 | ການເຄື່ອນໄຫວປິ່ນປົວກັບທີ່ອື່ນໆ ທີ່ຍັງບໍ່ທັນໄດ້ຈັດເຂົ້າບ່ອນໃດ | | | ✓ | |
| | ການສ້າງໂຮງໝໍເອກກະຊົນ ທັນສະໄໝ | ✓ | | | |
| | ໂຮງງານຜະລິດຢາ ທັງຮູບແບບ ການລົງທຶນຝ່າຍດຽວ ແລະ ການລົງທຶນ ແບບຮຸ້ນສ່ວນ | ✓ | | | |
| | ການປູກ ແລະ ຜະລິດຢາພື້ນເມືອງຕ່າງໆ | ✓ | | | |
| | ການສ້າງສູນ ລົດພະຍາບານ | ✓ | | | |
| | ສູນພັດທະນາແລະສ້າງພະນັກງານແພດ | | ✓ | | |
| VIII | **ຂະແໜງພະລັງງານ (ຕາມຄຳເຫັນຂອງກະຊວງພະລັງງານ ສະບັບເລກທີ 1404/ພບ.ຫກ, ລົງວັນທີ 14/10/10)** | | | | |
| 2680 | ການຜະລິດຫົວອ່ານ, ອັດເທບ ແລະ ອຸປະກອນເກັບແສງສີສຽງການຜະລິດເຄື່ອງອຸປະກອນໄຟຟ້າ | | ✔ | | |
| 2710 | ການຜະລິດໂມເຕີໄຟຟ້າລົດຍົນ, ເຄື່ອງປັ່ນໄຟ, ໝໍ້ແບ່ງໄຟ, ເຄື່ອງສົ່ງໄຟຟ້າ ແລະ ເຄື່ອງຄວບຄຸມໄຟຟ້າ | ✔ | | | |
| 2720 | ການຜະລິດໝໍ້ໄຟ ແລະ ໝໍ້ເກັບໄຟຟ້າ | | ✔ | | |
| | *ການຜະລິດສາຍສົ່ງໄຟຟ້າ ແລະ ອຸປະກອນສາຍສົ່ງ* | | | | |
| 2733 | ການຜະລິດອຸປະກອນສາຍສົ່ງ | ✔ | | | |

| | | | | | |
|---|---|---|---|---|---|
| 2740 | ການຜະລິດອຸປະກອນເຄື່ອງໃຕ້ໄຟຟ້າສຳຫຼັບການຜະລິດອຸປະກອນເຄື່ອງໃຕ້ໄຟຟ້າ ສຳລັບ ໃຫ້ແສງສະຫວ່າງ | ✔ | | | |
| 2750 | ການຜະລິດເຄື່ອງໃຊ້ໄຟຟ້າພາຍໃນອາຄານ | ✔ | | | |
| 2790 | ການຜະລິດເຄື່ອງອຸປະກອນໄຟຟ້າອື່ນໆ | ✔ | | | |
| 3510 | ການຜະລິດກະແສໄຟຟ້າຈາກເຄື່ອນໄຟຟ້າ. | ✔ | | | |
| | ການຜະລິດໄຟຟ້າຈາກຖ່ານຫີນ | ✔ | | | |
| | ການຜະລິດໄຟຟ້າຈາກເຂື່ອນໄຟຟ້າຂະໜາດນ້ອຍ | ✔ | | | |
| 4321 | ການຕິດຕັ້ງຕາຄ່າຍໄຟຟ້າ | | ✔ | | |
| | ການຜະລິດໄຟຟ້າເພື່ອສະໜອງໄຟຟ້າໃຫ້ເຂດຊົນນະບົດ | ✔ | | | |
| | ການສົ່ງກະແສໄຟຟ້າ | | ✔ | | |
| | ການແຈກຢາຍກະແສໄຟຟ້າ | | ✔ | | |
| | ກໍ່ສ້າງຕິດຕັ້ງຕາຄ່າຍໄຟຟ້າ, ທໍ່ສົ່ງນ້ຳ ແລະ ການກໍ່ສ້າງຕິດຕັ້ງອື່ນໆ | | ✔ | | |
| | ການຜະລິດ ຫຼື ກັ່ນນ້ຳມັນເຊື້ອໄຟປະເພດຕ່າງໆ | ✔ | | | |
| | ການຜະລິດອາຍແກສຫຸງຕົ້ມ(LPG) | ✔ | | | |
| | ການຜະລິດອາຍແກສທຳມະຊາດ | ✔ | | | |
| | ການຜະລິດນ້ຳມັນເຊື້ອໄຟໄບໂອດີແຊນ ແລະ ນ້ຳມັນເຊື້ອໄຟໄບໂອເອເທີນ່ອນ | ✔ | | | |
| | ການຜະລິດແຜງໄຟຟ້າແສງຕາເວັນ | ✔ | | | |
| | ການຜະລິດອາຍແກສ ຈາກ ມູນສັດ ແລະ ສິ່ງເສດເຫຼືອກະສິກຳ | ✔ | | | |
| | ການຜະລິດໄຟຟ້າດ້ວຍລົມທຳມະຊາດ | ✔ | | | |
| | ການຜະລິດກົງຫັນ ເທີບາຍ ຂອງ ເຂື່ອນໄຟຟ້າ | ✔ | | | |
| | ການຜະລິດເຄື່ອງຜະລິດກະແສໄຟຟ້າ ເຈນເນີເຣດເຕີ ຂອງ ເຂື່ອນໄຟຟ້າ | ✔ | | | |
| | ການຜະລິດ ອຸປະກອນຕັດໄຟ ແລະ ເຄື່ອງປະກອບໃນສະຖານີໄຟຟ້າ | ✔ | | | |
| | ການຜະລິດເຄື່ອງບັນຊາໄຟຟ້າ ຂອງເຂື່ອນ ແລະ ສະຖານີໄຟຟ້າ | ✔ | | | |
| | ການຜະລິດດອກກັນໄຟຟ້າ | ✔ | | | |
| | ການຜະລິດດອກໄຟຟ້າ | ✔ | | | |
| | ການຜະລິດຫົວປັກສຽບ, ຮູປັກສຽບ ແລະ ກົງຕັກໄຟຟ້າ | ✔ | | | |
| IX | **ຂະແໜງອຸດສາຫະກຳປຸງແຕ່ງ (ຕາມຄຳເຫັນຂອງກະຊວງອຸດສາຫະກຳ ສະບັບເລກທີ 2634/ທອຄ,ລົງວັນທີ 20/10/2010)** | | | | |

| | | | | | |
|---|---|---|---|---|---|
| | ການປຸງແຕ່ງຊີ້ນ | ✔ | | | |
| | ການປຸງແຕ່ງສາລີ | ✔ | | | |
| 1010 | ການດຳເນີນການປຸງແຕ່ງ ຜະລິດຕະພັນສັດລ້ຽງ ແລະ ການເກັບຮັກສາ | ✔ | | | |
| 1020 | ການດຳເນີນການປຸງແຕ່ງ ແລະ ການເກັບຮັກສາປາ ແລະ ສັດນ້ຳ | ✔ | | | |
| 1030 | ການດຳເນີນການແລະ ການເກັບຮັກສາໝາກໄມ້ ແລະ ຜັກ | ✔ | | | |
| 1040 | ການປຸງແຕ່ງຜັກ ແລະ ນ້ຳມັນສັດ ແລະ ໄຂມັນ | ✔ | | | |
| | ການປຸງແຕ່ງຜະລິດຕະພັນນົມ ຫລື ນ້ຳເຜີ້ງ ຫລື ນົມເຜີ້ງ | ✔ | | | |
| 1061 | ການສີເມັດພືດ | ✔ | | | |
| 1062 | ການຜະລິດແປ້ງແລະ ຜະລິດຕະພັນແປ້ງ | ✔ | | | |
| 1071 | ການຜະລິດເຂົ້າຈີ່, ເຂົ້າໜົມປັງ | ✔ | | | |
| 1072 | ການຜະລິດນ້ຳຕານ | | ✔ | | |
| 1073 | ການຜະລິດກາກາວ, ຊອກໂກແລັດ ແລະ ຂະໜົມຫວານນ້ຳຕານ | | ✔ | | |
| 1074 | ການຜະລິດເສັ້ນໝີ່, ເສັ້ນເຝີແລະ ຜະລິດຕະພັນຈາກແປ້ງທີ່ຄ້າຍຄືກັນ | | ✔ | | |
| 1080 | ການປຸງແຕ່ງອາຫານສັດ | ✔ | | | |
| 1104 | ການຜະລິດນ້ຳຫວານອັດລົມ; ການຜະລິດນ້ຳແຮ່ທາດ ແລະ ນ້ຳດື່ມບັນຈຸກວດອື່ນໆ | | | ✔ | |
| 1311 | ການກະກຽມ ແລະ ປັ່ນທໍ່ເສັ້ນໄຍ | ✔ | | | |
| 1312 | ການຕຳແຜ່ນແພ | ✔ | | | |
| 1313 | ການຕົບແຕ່ງແຜ່ນແພສຳເລັດຮູບ | ✔ | | | |
| 1321 | ການຖັກແລະແສ່ວຜ້າແພ | ✔ | | | |
| 1322 | ການຜະລິດເຄື່ອງໃຊ້ຈາກແຜ່ນແພ, ຍົກເວັ້ນເຄື່ອງນຸ່ງຮົ່ມ | ✔ | | | |
| 1323 | ການຜະລິດພົມ ແລະ ພົມປູພື້ນ | | | ✔ | |
| 1324 | ການຜະລິດເຊືອກ, ບ່ວງເຊືອກ, ການຜັນເຊືອກແລະຕາໜ່າງ | | | ✔ | |
| | *ການຜະລິດເຄື່ອງນຸ່ງຮົ່ມ* | | | | |
| 1410 | ການຜະລິດເຄື່ອງນຸ່ງຮົ່ມ, ຍົກເວັ້ນເຄື່ອງຂົນສັດ | | | ✔ | |
| 1430 | ການຜະລິດເຄື່ອງຖັກແລະ ແສ່ວເຄື່ອງນຸ່ງຫົ່ມ | | | ✔ | |
| | *ການຜະລິດເຄື່ອງໜັງ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ* | | | | |

| | | | | | |
|---|---|---|---|---|---|
| | *ການເອືອບ ແລະ ຟອກໜັງສັດ; ການຜະລິດກະເປົາເດີນທາງ; ກະເປົາຫິ້ວພາຍ.* | | | | |
| 1511 | ການເອືອບແລະຟອກໜັງສັດ; ການຕັດແຕ່ງແລະຍ້ອມສີໜັງຂົນສັດ | | | ✔ | |
| 1512 | ການຜະລິດຫີບກະເປົາເດີນທາງໜັງ; ກະເປົາໜັງຫິ້ວພາຍ ແລະ ຜະລິດຕະພັນຄ້າຍຄືເຊັ່ນ ອານມ້າ ແລະ ໜັງຫຸ້ມ | | | ✔ | |
| 1520 | ການຜະລິດເກີບໜັງ | | ✔ | | |
| | *ການປຸງແຕ່ງຜະລິດຕະພັນຈາກໄມ້, ຫວາຍ, ເຟືອງ ແລະ ວັດຖຸຈັກສານ* | | | | |
| 1621 | ການຜະລິດແຜ່ນເຄືອບ; ໄມ້ອັດ, ແຜ່ນກະດານ, ແລະ ໄມ້ກາກຕິງ | | ✔ | | |
| 1623 | ການຜະລິດເຄື່ອງບັນຈຸທີ່ເຮັດດ້ວຍໄມ້ | | | ✔ | |
| 1629 | ການຜະລິດຜະລິດຕະພັນອື່ນໆຈາກໄມ້, ການຜະລິດເຄື່ອງໃຊ້ ຈາກຫວາຍ, ເຟືອງ ແລະ ວັດຖຸຈັກສານ | | | ✔ | |
| | *ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ* | | | | |
| 1701 | ການຜະລິດເຫຍື່ອເຈ້ຍ,ເຈ້ຍ ແລະ ກະດາດແຂງ | | ✔ | | |
| 1702 | ການຜະລິດເຄື່ອງຫຸ້ມຫໍ່ທີ່ເຮັດດ້ວຍເຈ້ຍແລະ ກະດາດແຂງ, ແລະ ແກັດ ຫຼື ກັບເຈ້ຍ | | ✔ | | |
| 1709 | ການຜະລິດເຄື່ອງໃຊ້ອື່ນໆຈາກເຈ້ຍ ແລະ ເຈ້ຍກະດາດແຂງອື່ນໆ | | ✔ | | |
| | *ການປະດິດຖ່ານຫີນເຜົາໃໝ້ ແລະ ຜະລິດຕະພັນນ້ຳມັນກັ່ນກອງ* | | | | |
| 1920 | ການປະດິດຜະລິດຕະພັນນ້ຳມັນກັ່ນກອງ | | | ✔ | |
| | *ການຜະລິດສານເຄມີ ແລະ ຜະລິດຕະພັນເຄມີ, ການຜະລິດສານເຄມີພື້ນຖານ ຝຸ່ນວິທະຍາສາດ ແລະ ສ່ວນປະສົມສານໄນໂຕຣເຈນ, ປລາສຕິກ ແລະ ຢາງສັງເຄາະໃນແບບຊິງເບື້ອງຕົ້ນ* | | | | |
| 2011 | ການຜະລິດສານເຄມີພື້ນຖານ | | ✔ | | |
| 2012 | ການຜະລິດຝຸ່ນວິທະຍາສາດ ແລະ ສ່ວນປະສົມສານໄນໂຕຣເຈນ | ✔ | | | |
| 2013 | ການຜະລິດປລາສຕິກ ແລະຢາງສັງເຄາະໃນແບບຊິງເບື້ອງຕົ້ນ | | | ✔ | |
| | *ການຜະລິດຜະລິດຕະພັນເຄມີອື່ນໆ* | | | | |
| 2022 | ການຜະລິດນ້ຳສີ, ນ້ຳມັນຄັດເງົາ ແລະ ສີເຄືອບທີ່ຄ້າຍກັນ ນ້ຳມຶກການພິມແລະ ກາວຕິດ | | | ✔ | |
| 2023 | ການຜະລິດສະບູກ້ອນແລະ ສະບູຝຸ່ນ, ຜະລິດຕະພັນຊັກລ້າງ, ນ້ຳຫອມ ແລະນ້ຳຢາລ້າງຫ້ອງນ້ຳ | | ✔ | | |
| 2030 | ການຜະລິດເສັ້ນໄຍສັງເຄາະ | | ✔ | | |
| 2100 | ການຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງຢາແລະ ຜະລິດຕະພັນການມາຈາກພືດ | ✔ | | | |
| | *ການຜະລິດຢາງ ແລະ ຜະລິດຕະພັນປລາສຕິກ* | | | | |

| | | | | | |
|---|---|---|---|---|---|
| 2211 | ການຜະລິດຢາງລໍ້ລົດ ແລະ ຢາງໃນ; ຢາງໂອບ ແລະ ຫລໍ່ດອກຢາງຕົບລົດ | ✔ | | | |
| 2219 | ການຜະລິດ ຜະລິດຕະພັນຢາງອື່ນໆ | ✔ | | | |
| 2220 | ການຜະລິດ ຜະລິດຕະພັນປລາສຕິກ | ✔ | | | |
| | *ການຜະລິດຜະລິດຕະພັນແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ* | | | | |
| 2310 | ການຜະລິດແກ້ວແລະ ຜະລິດຕະພັນຈາກແກ້ວ | ✔ | | | |
| | *ການຜະລິດຜະລິດຕະພັນແຮ່ທາດອື່ນໆ ທີ່ບໍ່ແມ່ນໂລຫະ ຊຶ່ງບໍ່ທັນຈັດເຂົ້າບ່ອນໃດ* | | | | |
| 2391 | ການຜະລິດຜະລິດຕະພັນຫຼອມຍາກ | ✔ | | | |
| 2392 | ການຜະລິດວັດສະດຸເຄື່ອງກໍ່ສ້າງທີ່ເຮັດດ້ວຍດິນໜຽວ | | | ✔ | |
| 2393 | ການຜະລິດຜະລິດຕະພັນເຄື່ອປັ້ນດິນເຜົາ ແລະ ຖ້ວຍຊາມທີ່ເປັນກະເບື້ອງອື່ນໆ | ✔ | | | |
| 2394 | ການຜະລິດຊີມັງ,ປູນຂາວ ແລະ ປູນຕິດເຄືອບອື່ນໆ | | | ✔ | |
| 2395 | ການຜະລິດຜະລິດຕະພັນສຳເລັດຮູບຈາກຄອນກີດ, ຊີມັງ ແລະ ປູນ | | | ✔ | |
| 2396 | ການຕັດ, ຂັດ, ສີວຫີນໃຫ້ເປັນຜະລິດຕະພັນສຳເລັດຮູບ | | ✔ | | |
| | *ການປະດິດຜະລິດຕະພັນໂລຫະປະດິດ, ຍົກເວັ້ນ ເຄື່ອງຈັກກົນ ແລະ ອຸປະກອນ*<br>*ການຜະລິດຜະລິດຕະພັນໂລຫະທີ່ເປັນໂຄງສ້າງ, ຖັງອ່າງ, ອ່າງເກັບນ້ຳ ແລະ ເຄື່ອງລະບາຍນ້ຳ* | | | | |
| 2511 | ການຜະລິດຜະລິດຕະພັນໂລຫະທີ່ເປັນໂຄງສ້າງ | | | ✔ | |
| 2512 | ການຜະລິດຖັງ, ອ່າງເກັບນ້ຳແລະເຄື່ອງບັນຈຸທີ່ເຮັດດ້ວຍໂລຫະ | | ✔ | | |
| 2513 | ການຜະລິດເຄື່ອງເຮັດອາຍນ້ຳ, ຍົກເວັ້ນອ່າງຕົ້ມນ້ຳຮ້ອນສູນກາງ | | | ✔ | |
| | *ການຜະລິດຜະລິດຕະພັນໂລຫະອື່ນໆ; ການເຄື່ອນໄຫວບໍລິການດ້ານງານໂລຫະອື່ນໆ* | | | | |
| 2591 | ການຕີ, ຫນີບ, ກົດ ແລະ ການມ້ວນໂລຫະ; ການຫລອມເສດມຸ່ນໂລຫະ | | | ✔ | |
| 2592 | ການສ້ອມແຊມ ຕົບແຕ່ງ ແລະ ເຄືອບໂລຫະ | | | ✔ | |
| 2593 | ການຜະລິດເຄື່ອງມີຄົມ, ເຄື່ອງມືແລະເຄື່ອງໃຊ້ໂລຫະທົ່ວໄປ | ✔ | | | |
| | *ການຜະລິດເຄື່ອງຄອມພິວເຕີ, ເຄື່ອງອີເລັກໂຕນິກ ແລະຜະລິດຕະພັນກ່ຽວກັບສາຍຕາ* | | | | |
| | *ການຜະລິດເຄື່ອງວັດແທກ, ເຄື່ອງທົດລອງ, ອຸປະກອນຄວບຄຸມ ບັນຊາການເດີນເຮືອ, ເຂັ້ມທິດ ແລະ ໂມງ* | | | | |
| 2651 | ການຜະລິດເຄື່ອງວັດແທກ, ເຄື່ອງທົດລອງ, ອຸປະກອນຄວາມຄຸມ ແລະ ບັນຊາການເດີນເຮືອ | ✔ | | | |
| 2652 | ການຜະລິດໂມງແຂວນຝາ ແລະ ໂມງໃສ່ແຂນ | ✔ | | | |

| | | | | | |
|---|---|---|---|---|---|
| 2660 | ການຜະລິດເຄື່ອງສາຍແສງ, ເຄື່ອງກວດດ້ວຍໄຟ ແລະ ເຄື່ອງສ່ອງໄຟຟ້າ | ✔ | | | |
| 2670 | ການຜະລິດວັດແທກສາຍຕາ ແລະ ເຄື່ອງປະກອບ | | | ✔ | |
| 2680 | ການຜະລິດຫົວອ່ານອັດເທັບ ແລະ ອຸປະກອນເກັບແສງສີສຽງ, ການຜະລິດອຸປະທອນໄຟຟ້າ | | | ✔ | |
| 2710 | ການຜະລິດໂມເຕີໄຟຟ້າລົດຍົນ,ເຄື່ອງປັ່ນໄຟ,ໝໍ້ແບ່ງໄຟ, ເຄື່ອງສົ່ງໄຟຟ້າ ແລະ ເຄື່ອງຄວບຄຸມໄຟຟ້າ | ✔ | | | |
| 2720 | ການຜະລິດໝໍ້ໄຟ ແລະ ໝໍ້ເກັບໄຟຟ້າ | ✔ | | | |
| | *ການຜະລິດເຄື່ອງຈັກ ແລະ ເຄື່ອງປະກອບທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ; ການຜະລິດເຄື່ອງຈັກສຳລັບໃຊ້ທົ່ວໄປ* | | | | |
| 2811 | ການຜະລິດຫົວຈັກ ແລະ ກົງຫັນປີ່ນ, ຍົກເວັ້ນເຄື່ອງເຮືອບິນ, ລົດຍົນ ແລະ ລົດຈັກ | ✔ | | | |
| 2812 | ການຜະລິດເຄື່ອງຈັກພະລັງງານທີ່ກິນທາດແຫຼວ | | ✔ | | |
| 2813 | ການຜະລິດຈັກສູບ, ຈັກປ້ຳຄວາມດັນ, ອຸປະກອນເປີດປິດ ແລະ ປຸ່ມປິດເປີດນ້ຳ | ✔ | | | |
| 2814 | ການຜະລິດລູກບີ(ລູກປືນ), ເກັຍ, ສິ້ນສ່ວນເຟືອງເກັຍ ແລະ ອຸປະກອນຄັບເຄື່ອນ | | ✔ | | |
| 2815 | ການຜະລິດເຕົາອົບ, ເຕົາຫລອມແລະ ເຕົາຫລອມເຜົາໄຫມ້ | | | ✔ | |
| 2816 | ການຜະລິດລິຟ, ເຄື່ອງລາກແກ່, ຍົກ ແລະ ອຸປະກອນຫ້ອຍແຂວນ | | | ✔ | |
| 2817 | ການຜະລິດເຄື່ອງຈັກແລະ ເຄື່ອງປະກອບສຳຫລັບຫ້ອງການ(ຍົກເວັ້ນເຄື່ອງຄອມພີວ ເຕີ ແລະ ເຄື່ອງປະກອບ) | | | ✔ | |
| 2819 | ການເຄື່ອງຈັກເພື່ອຮັບໃຊ້ທົ່ວໄປ | | | | |
| | *ການຜະລິດເຄື່ອງຈັກ ເພື່ອຮັບໃຊ້ຈຸດປະສົງສະເພາະ* | | | | |
| 2821 | ການຜະລິດເຄື່ອງຈັກຮັບໃຊ້ການກະສິກຳ ແລະ ປ່າໄມ້ | ✔ | | | |
| 2822 | ການຜະລິດເຄື່ອງຈັກສຳລັບແປຮູບໂລຫະ ແລະ ເຄື່ອງມືກົນຈັກ | ✔ | | | |
| 2823 | ການຜະລິດເຄື່ອງຈັກສຳລັບການຫລອມໂລຫະ | ✔ | | | |
| 2824 | ການຜະລິດເຄື່ອງຈັກສຳລັບການຂຸດຄົ້ນບໍ່ແຮ່ແລະ ການກໍ່ສ້າງ | ✔ | | | |
| 2825 | ການຜະລິດເຄື່ອງຈັກສຳລັບການປຸງແຕ່ງອາຫານ, ເຄື່ອງດື່ມແລະຮຳຢາສູບ | ✔ | | | |
| 2826 | ການຜະລິດເຄື່ອງຈັກສຳລັບຕ່ຳແຜ່ນ, ຕັດຫຍິບ ແລະ ຜະລິດຕະພັນຫນັງ | ✔ | | | |
| 2829 | ການຜະລິດເຄື່ອງເພື່ອຈຸດປະສົງສະເພາະອື່ນໆ | ✔ | | | |
| | *ອຸດສາຫະກຳການແປຮູບອື່ນໆ* | | | | |
| | *ການຜະລິດເຄື່ອງເອປະດັບ ແລະ ສິ່ງທີ່ກ່ຽວພັນກັບເຄື່ອງເອ້ປະດັບ* | | | | |
| 3211 | ການຜະລິດເຄື່ອງເອ້ປະດັບແລະຊິ້ນສ່ວນປະກອບເຄື່ອງເອ້ປະດັບ | ✔ | | | |
| 3212 | ການຜະລິດເຄື່ອງເອ້ຫຽມ ແລະ ຊິ້ນສ່ວນປະກອບ | | ✔ | | |

| | | | | | |
|---|---|---|---|---|---|
| 3220 | ການຜະລິດເຄື່ອງຫລິ້ນດົນຕີ | ✔ | | | |
| 3230 | ການຜະລິດເຄື່ອງຫລິ້ນກິລາ | ✔ | | | |
| 3250 | ການຜະລິດ ແລະ ສະໜອງຢາປົວພະຍາດ ແລະ ອຸປະກອນການປິ່ນປົວແຂ້ວ | ✔ | | | |
| 3290 | ອຸດສາຫະກຳການແປຮູບການຜະລິດອື່ນໆທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ | | | ✔ | |
| | *ການສະໜອງໄຟຟ້າ, ອາຍແກັສ, ອາຍຮ້ອນ ແລະ ອາກາດປັບແຕ່ງ* | | | | |
| 3510 | ການຜະລິດ, ສົ່ງ ແລະ ແຈກຈ່າຍກະແສໄຟຟ້າ | ✔ | | | |
| 3520 | ການຜະລິດອາຍແກັສ; ແຈກຈ່າຍອາຍແກັສ ຜ່ານທໍ່ສົ່ງໃຫຍ່ | ✔ | | | |
| | *ການສະໜອງນ້ຳ, ລະບາຍນ້ຳເສຍ, ການບໍລິຫານຈັດການແລະ ເຄື່ອນໄຫວ ບຳບັດສິ່ງເສດເຫຼືອ* | | | | |
| 3600 | ການເກັບຮັກສານ້ຳ, ບຳບັດ ແລະ ສະໜອງນ້ຳ | ✔ | | | |
| 3700 | ການລະບາຍນ້ຳເສຍ | ✔ | | | |
| | *ການເກັບຮັກສາ, ບຳບັດ ແລະ ການຈັດສິ່ງເສດເຫຼືອ, ການເກັບກູ້ເສດວັດສະດຸ*<br>**ການເກັບຮັກສາສິ່ງເສດເຫຼືອ** | | | | |
| 3811 | ການເກັບຮັກສາ ສິ່ງເສດເຫຼືອ ທີ່ບໍ່ເປັນອັນຕະລາຍ | ✔ | | | |
| 3812 | ການເກັບຮັກສາ ສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ✔ | | | |
| | *ການບຳບັດ ແລະ ກຳຈັດ ສິ່ງເສດເຫຼືອ* | | | | |
| 3821 | ການບຳບັດ ແລະ ການກຳຈັດ ສິ່ງເສດເຫຼືອ ທີ່ບໍ່ເປັນອັນຕະລາຍ | ✔ | | | |
| 3822 | ການບຳບັດ ແລະ ການກຳຈັດ ສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ✔ | | | |
| 3830 | ການເກັບກູ້ເສດວັດສະດຸ | ✔ | | | |
| 3900 | ການເຄື່ອນໄຫວບຳບັດ ແລະ ບໍລິການຈັດການຄຸ້ມຄອງ ສິ່ງເສດເຫຼືອອື່ນໆ | ✔ | | | |
| X | **ຂະແໜງໂຍທາທິການ ແລະ ຂົນສົ່ງ (ຕາມຄຳເຫັນຂອງກະຊວງໂຍທາ ສະບັບລົງວັນທີ 7/9/2010 )** | | | | |
| | *ການຜະລິດລົດຍົນ, ລົດພວງ ແລະ ອຸປະກອນຕິດລົດພວງ* | | | | |
| 2920 | ການຜະລິດກົງລົດຍົນສຳຫຼັບລົດຍົນ ; ການຜະລິດລົວພວງ ແລະ ເຄື່ອງລົດພວງ | | | ✓ | |
| 2930 | ການຜະລິດສິ້ນສ່ວນ ແລະ ອຸປະກອນສຳລັບລົດຍົນ | | | ✓ | |
| 3011 | ການກໍ່ສ້າງກຳປັ່ນ ແລະ ເຮືອແພ | | | ✓ | |
| 3012 | ການສ້າງເຮືອທ່ອງທ່ຽວ ແລະ ກິລາ | | | ✓ | |

| | | | | | |
|---|---|---|---|---|---|
| 3020 | ການຜະລິດຫົວຈັກລົດໄຟ ແລະ ລໍ້ເລື່ອນລົດໄຟ | | ✓ | | |
| 3030 | ການຜະລິດເຮືອບິນ, ຍານອາວະກາດ ແລະ ເຄື່ອງຈັກທີ່ກ່ຽວຂ້ອງ | ✓ | | | |
| 3091 | ການຜະລິດລົດຈັກສອງລໍ້ | | ✓ | | |
| 3092 | ການຜະລິດລົດຖີບ ແລະ ລໍ້ສໍາລັບຄົນເສຍອົງຄະ | ✓ | | | |
| 3099 | ການຜະລິດອຸປະກອນການຂົນສົ່ງອື່ນໆທີ່ບໍ່ທັນໄດ້ຈັດເຂົ້າບ່ອນໃດ | | ✓ | | |
| | *ການຂົນສົ່ງ ແລະ ສາງສິນຄ້າ* | | | | |
| 4911 | ຂົນສົ່ງຜູ້ໂດຍສານທາງລົດໄຟ | | ✓ | | |
| 4912 | ຂົນສົ່ງສິນຄ້າທາງລົດໄຟ | | ✓ | | |
| 4923 | ການຂົນສົ່ງສິນຄ້າທາງບົກ | | | ✓ | |
| | *ການຂົນສົ່ງທາງນໍ້າ ການຂົນສົ່ງທາງທະເລ ແລະ ລຽບຊາຍຝັ່ງ* | | | | |
| 5012 | ການຂົນສົ່ງສິນຄ້າທາງທະເລ ແລະ ລຽບຕາມຊາຍຝັ່ງ | | | ✓ | |
| 5021 | ການຂົນສົ່ງໂດຍສານທາງແມ່ນໍ້າ | | ✓ | | |
| 5022 | ການຂົນສົ່ງສິນຄ້າທາງແມ່ນໍ້າ | | ✓ | | |
| 5110 | ການຂົນສົ່ງໂດຍສານທາງອາກາດ | | ✓ | | |
| XI | ຂະແໜງ ວິທະຍາສາດ ແລະ ເຕັກໂນໂລຊີ (ຕາມຄໍາເຫັນຂອງອົງການສະບັບເລກທີ1759/ອວຕຊ-ຫກ,ວັນທີ 17/9/2010) | | | | |
| | *ຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ ການເຄື່ອນໄຫວ ຈັດພີມ, ການພີມປື້ມ, ວາລະສານ ແລະ ການຈັດພີມອື່ນໆ* | | | | |
| 5820 | ການຈັດພີມຊອບແວຣ | | ✓ | | |
| | *ໂທລະຄົມມະນາຄົມ* | | | | |
| | ຄົ້ນຄວ້າ ແລະ ສອບທຽບບໍລິມາດ ລົດບັນທຸກ ນໍ້າມັນເຊື້ອໄຟ | | ✓ | | |
| | *ການເຄື່ອນໄຫວ ດ້ານສະຖາປັດຕະຍາກໍາ ແລະ ວິສະວະກໍາ; ການກວດສອບດ້ານເຕັກນິກ ແລະ ການວິເຄາະ* | | | | |
| 7120 | ການກວດສອບດ້ານເຕັກນິກ ແລະ ການວິເຄາະ | ✓ | | | |
| | *ການຄົ້ນຄວ້າ ທາງວິທະຍາສາດ ແລະ ການພັດທະນາ* | | | | |
| 7210 | ການຄົ້ນຄວ້າ ແລະ ການສ້າງຈໍາລອງ ກ່ຽວກັບ ວິທະຍາສາດ ທໍາມະຊາດ ແລະ ວິສະວະກອນ | ✓ | | | |

| | | | | | |
|---|---|---|---|---|---|
| | *ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ ອື່ນໆ* | | | | |
| 7410 | ການເຄື່ອນໄຫວອອກແບບສະເພາະ | | ✓ | | |
| 7490 | ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ ອື່ນໆ ທີ່ບໍ່ໄດ້ຈັດເຂົ້າບ່ອນໃດ | | ✓ | | |
| XII | **ຂະແໜງການກິລາ-ກາຍະກໍາ (ຕາມຄໍາເຫັນຂອງຄກຊ ສະບັບເລກທີ 410 /ຄກຊ ,ລົງວັນທີ 19/11/2010 )** | | | | |
| | ສ້າງມະຫາວິທະຍາໄລກິລາສະເພາະ | ✓ | | | |
| | ສະໂມສອນກິລາທີ່ມີມາດຕະຖານສາກົນ | | ✓ | | |
| | ສ້າງສະໜາມກິລາບານເຕະ ມາດຕະຖານສາກົນ ຂອງແຂວງ | ✓ | | | |
| | ສ້າງສະໜາມກິລາໃນຮົ່ມ ມາດຕະຖານສາກົນ ຂອງແຂວງ | | ✓ | | |
| | ສ້າງສະໜາມກິລາເປຕັງ ມາດຕະຖານສາກົນ ຂອງແຂວງ | | | ✓ | |
| | ສະໜາມກ໊ອບ ມາດຕະຖານສາກົນ | | ✓ | | |
| | ສ້າງສູນຝຶກກິລາປະເພດຕ່າງໆ | | ✓ | | |

# ເອກະສານຊ້ອນທ້າຍ ເລກທີ່ 2 : ບັນຊີເຂດສົ່ງເສີມການລົງທຶນ

| ຊື່ແຂວງ/ນະຄອນ | ເຂດສົ່ງເສີມການລົງທຶນ | | |
|---|---|---|---|
| | ເຂດ1 | ເຂດ2 | ເຂດ3 |
| ນະຄອນຫລວງວຽງຈັນ | ເມືອງ ສັງທອງ | ເມືອງ ປາກງື່ມ | ເມືອງ ຈັນທະບູລີ<br>ເມືອງ ສີໂຄດຕະບອງ<br>ເມືອງ ໄຊເສດຖາ<br>ເມືອງ ສີສັດຕະນາກ<br>ເມືອງ ຫາດຊາຍຟອງ<br>ເມືອງ ນາຊາຍທອງ<br>ເມືອງ ໄຊທານີ |
| ແຂວງ ຜົ້ງສາລີ | ເມືອງ ຍອດອູ<br>ເມືອງ ສຳພັນ<br>ເມືອງ ຂວາ<br>ເມືອງ ໃໝ່ | ເມືອງ ບຸນເໜືອ<br>ເມືອງ ບຸນໃຕ້ | ເມືອງ ຜົ້ງສາລີ |
| ແຂວງ ຫລວງນ້ຳທາ | ເມືອງ ລອງ<br>ເມືອງ ນາແລ<br>ເມືອງ ວຽງພູຄາ | ເມືອງ ສິງ | ເມືອງ ນ້ຳທາ |
| ແຂວງ ບໍ່ແກ້ວ | ເມືອງ ເມິງ<br>ເມືອງ ຜາອຸດົມ<br>ເມືອງ ປາກທາ | ເມືອງ ຕົ້ນເຜິ້ງ | ເມືອງ ຫ້ວຍຊາຍ |
| ແຂວງ ອຸດົມໄຊ | ເມືອງ ຫລາ<br>ເມືອງ ນາໝໍ້<br>ເມືອງ ງາ<br>ເມືອງ ແບ່ງ<br>ເມືອງ ປາກແບ່ງ | ເມືອງ ຮຸນ | ເມືອງ ໄຊ |
| ແຂວງ ຫົວພັນ | ເມືອງ ວຽງທອງ<br>ເມືອງ ຊຳໃຕ້<br>ເມືອງ ວຽງໄຊ<br>ເມືອງ ຊຽງຄໍ້<br>ເມືອງ ແອດ<br>ເມືອງ ສົບເບົາ | ເມືອງ ຫົວເມືອງ | ເມືອງ ຊຳເໜືອ |

| | | | |
|---|---|---|---|
| ແຂວງ ຫລວງພະບາງ | ເມືອງ ໂພນໄຊ<br>ເມືອງ ວຽງຄຳ<br>ເມືອງ ພູຄູນ<br>ເມືອງ ປາກແຊງ<br>ເມືອງ ໂພນທອງ | ເມືອງ ງອຍ<br>ເມືອງ ນ້ຳບາກ<br>ເມືອງ ຈອມເພັດ<br>ເມືອງ ຊຽງເງິນ<br>ເມືອງ ນ່ານ | ເມືອງ ຫລວງພະບາງ |
| ແຂວງ ໄຊຍະບູລີ | ເມືອງ ໄຊສະຖານ<br>ເມືອງ ຊຽງຮອນ<br>ເມືອງ ບໍ່ແຕນ | ເມືອງ ປາກລາຍ<br>ເມືອງ ແກ່ນທ້າວ<br>ເມືອງ ທົ່ງມີໄຊ<br>ເມືອງ ພຽງ<br>ເມືອງ ເງິນ<br>ເມືອງ ທົ່ງສາ<br>ເມືອງ ຄອບ | ເມືອງ ໄຊຍະບູລີ |
| ແຂວງ ຊຽງຂວາງ | ເມືອງ ໝອກ<br>ເມືອງ ຜາໄຊ<br>ເມືອງ ທາໂທມ | ເມືອງ ໜອງແຮດ<br>ເມືອງ ຄຳ<br>ເມືອງ ພູກູດ | ເມືອງ ແປກ |
| ແຂວງ ວຽງຈັນ | ເມືອງ ຮົ່ມ<br>ເມືອງ ໄຊສົມບູນ<br>ເມືອງ ໝື່ນ<br>ເມືອງ ແມດ | ເມືອງ ຫີນເຫີບ<br>ເມືອງ ກາສີ<br>ເມືອງ ຊະນະຄາມ<br>ເມືອງ ເຟືອງ | ເມືອງ ວັງວຽງ<br>ເມືອງ ແກ້ວອຸດົມ<br>ເມືອງ ວຽງຄຳ<br>ເມືອງ ທຸລະຄົມ<br>ເມືອງໂພນໂຮງ |
| ແຂວງ ບໍລິຄຳໄຊ | ເມືອງ ໄຊຈຳພອນ<br>ເມືອງ ວຽງທອງ<br>ເມືອງ ບໍລິຄັນ | ເມືອງ ປາກກະດິງ<br>ເມືອງ ທ່າພະບາດ<br>ເມືອງ ຄຳເກີດ | ເມືອງ ປາກຊັນ |
| ແຂວງ ຄຳມ່ວນ | ເມືອງ ບົວລະພາ<br>ເມືອງ ນາກາຍ<br>ເມືອງ ໄຊບົວທອງ | ເມືອງ ໜອງບົກ<br>ເມືອງ ຫີນບູນ<br>ເມືອງ ເຊບັ້ງໄຟ<br>ເມືອງ ມາຫາໄຊ<br>ເມືອງ ຍົມມະລາດ | ເມືອງ ທ່າແຂກ |
| ແຂວງສະຫວັນນະເຂດ | ເມືອງ ນອງ<br>ເມືອງ ເຊໂປນ<br>ເມືອງ ພິນ<br>ເມືອງ ວິລະບູລີ | ເມືອງ ອຸທຸມພອນ<br>ເມືອງ ສອງຄອນ<br>ເມືອງ ຈຳພອນ<br>ເມືອງ ອາດສະພັງທອງ | ເມືອງໄກສອນພົມວິຫານ |

| | | | |
|---|---|---|---|
| | ເມືອງ ທ່າປາງທອງ<br>ເມືອງ ທ່າພະລານໄຊ<br>ເມືອງ ຊົນບູລີ<br>ເມືອງ ອາດສະພອນ | ເມືອງ ໄຊບູລີ<br>ເມືອງ ໄຊພູທອງ | |
| ແຂວງ ສາລະວັນ | ເມືອງ ສະໝ້ວຍ<br>ເມືອງ ຕະໂອ້ຍ<br>ເມືອງ ຕຸ້ມລານ | ເມືອງ ນະຄອນເພັງ<br>ເມືອງ ຄົງເຊໂດນ<br>ເມືອງ ວາປີ<br>ເມືອງ ເລົ່າງາມ | ເມືອງ ສາລະວັນ |
| ແຂວງເຊກອງ | ເມືອງ ກະລືມ<br>ເມືອງ ດາກຈຶງ | ເມືອງ ທາແຕງ | ເມືອງ ລະມາມ |
| ແຂວງຈຳປາສັກ | ເມືອງ ສຸຂຸມາ<br>ເມືອງ ບາຈຽງ<br>ເມືອງ ມູນລະປະໂມກ<br>ເມືອງ ປະທຸມພອນ | ເມືອງ ປາກຊ່ອງ<br>ເມືອງ ໂພນທອງ<br>ເມືອງ ໂຂງ<br>ເມືອງ ຈຳປາສັກ | ເມືອງ ປາກເຊ |
| ແຂວງອັດຕະປື | ເມືອງ ສະໜາມໄຊ<br>ເມືອງ ພູວົງ<br>ເມືອງ ສານໄຊ | ເມືອງ ໄຊເສດຖາ | ເມືອງ ສາມັກຄີໄຊ |

## ເອກະສານຊ້ອນທ້າຍເລກທີ 3: ກິດຈະການສຳປະທານ

| ລຳດັບ | ກິດຈະການກິດຈະການສຳປະທານ |
|---|---|
| 1 | **ຂະແໜງ ແຮ່ທາດ** |
| | **ຂັ້ນສູນກາງເປັນຜູ້ພິຈາລະນາ** |
| 1.1 | ກິດຈະການຂຸດຄົ້ນ ແລະ ສຳຫລວດ |
| 1.2 | ກິດຈະການຂຸດຄົ້ນ |
| 1.3 | ກິດຈະການປຸງແຕ່ງແຮ່ທາດ |
| 1.4 | ກິດຈະການສຳຫລວດ-ຂຸດຄົ້ນນ້ຳມັນດິບ ແລະ ອາຍແກັສ |
| | **ຂັ້ນແຂວງ, ນະຄອນ ເປັນຜູ້ພິຈາລະນາ** |
| 1.5 | ການຂຸດຄົ້ນແຮ່ທາດແບບຫັດຖະກຳ (ນຳໃຊ້ເຄື່ອງມືແບບປະຖົມປະຖານ ແລະ ບໍ່ໄດ້ນຳໃຊ້ກົນຈັກຂຸດຄົ້ນ) ແຮ່ທາດທີ່ອະນຸຍາດໃຫ້ຂຸດຄົ້ນແບບຫັດຖະກຳຄື: ແຮ່ຄຳຕົກຂ້ອນ, ແຮ່ກົ່ວຕົກຂ້ອນ ແລະ ທາງແຮ່ |
| 1.6 | ກິດຈະການຂຸດຄົ້ນຫີນ,ຊາຍ ສຳລັບວຽກງານກໍ່ສ້າງ |
| 2 | **ຂະແໜງໄຟຟ້າ** |
| | **ຂັ້ນສູນກາງເປັນຜູ້ພິຈາລະນາ (ກຳລັງຕິດຕັ້ງແຕ່ 5 MW ຂຶ້ນໄປ)** |
| 2.1 | ການພັດທະນາພະລັງງານໄຟຟ້ານ້ຳຕົກ |
| 2.2 | ການພັດທະນາພະລັງງານໄຟຟ້າດ້ວຍລົມ |
| 2.3 | ການພັດທະນາພະລັງງານໄຟຟ້າດ້ວຍແສງຕາເວັນ |
| 2.4 | ການພັດທະນາພະລັງງານໄຟຟ້າຄວາມຮ້ອນ |
| | **ຂັ້ນແຂວງ, ນະຄອນ ເປັນຜູ້ພິຈາລະນາ (ກຳລັງຕິດຕັ້ງ 5 MW ລົງມາ )** |
| 2.5 | ການພັດທະນາພະລັງງານໄຟຟ້ານ້ຳຕົກ |
| 2.6 | ການພັດທະນາພະລັງງານໄຟຟ້າດ້ວຍລົມ |
| 2.7 | ການພັດທະນາພະລັງງານໄຟຟ້າດ້ວຍແສງຕາເວັນ |
| 2.8 | ການພັດທະນາພະລັງງານໄຟຟ້າຄວາມຮ້ອນ |
| 3 | **ຂະແໜງການບໍລິການອື່ນໆທີ່ ພົວພັນກັບການນຳໃຊ້ສິດໃນກຳມະສິດຕ່າງໆຂອງລັດ** |
| | **ຂັ້ນສູນກາງເປັນຜູ້ພິຈາລະນາ** |
| 3.1 | ການລົງທຶນໃນຂະແໜງການໂທລະຄົມ, ວົງໂຄຈອນດາວທຽມ.. |
| 3.2 | ສະຖານີວິທະຍຸ, ໂທລະພາບ |
| 3.3 | ການລົງທຶນໃນຂະແໜງການສ້າງຕັ້ງສາຍການບິນ, ການຂົນສົ່ງທາງອາກາດ ແລະ ການຂົນສົ່ງທາງທະເລ |
| 3.4 | ການລົງທຶນ(ສຳປະທານ)ໃນຂະແໜງກໍ່ສ້າງຕະຫລາດ, ສູນການຄ້າ, ສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກແຮມ, ສວນສາທາລະນະ, ສຳນັກງານ, ທີ່ພັກອາໃສ ແລະ ອື່ນໆທີ່ນຳໃຊ້ທີ່ດິນຂອງລັດ |
| 3.5 | ການລົງທຶນໃນການກໍ່ສ້າງພື້ນຖານໂຄງລ່າງ: ເສັ້ນທາງ, ຂົນສົ່ງ (ທາງບົກ, ທາງນ້ຳ) |

| | |
|---|---|
| | ທາງລົດໄຟ, ສ້າງຂົວ, ສ້າງສະໜາມບິນ, ນ້ຳປະປາ, ສະຖານທີ່ເກັບມ້ຽນ ຫລືກຳຈັດຂີ້ເຫຍື້ອ, ເກັບມ້ຽນ ສິ່ງເສດເຫລືອ ແລະ ອື່ນໆ |
| 3.6 | ການລົງທຶນໃນຂະແໜງປະກັນໄພ, ສະຖາບັນການເງິນທີ່ມີການຮ່ວມທຶນກັບລັດ |
| | **ຂັ້ນແຂວງ, ນະຄອນ ເປັນຜູ້ພິຈາລະນາ** |
| 3.7 | ສະຖານີວິທະຍຸ, ໂທລະພາບ(ລະດັບທ້ອງຖິ່ນ) |
| 3.8 | ການລົງທຶນໃນຂະແໜງກໍ່ສ້າງຕະຫລາດ, ສູນການຄ້າ, ສະຖານທີ່ທ່ອງທ່ຽວ, ສວນສາທາລະນະ, ສຳນັກງານ, ທີ່ພັກອາໃສ ແລະ ອື່ນໆ...(ພາຍໃນທ້ອງຖິ່ນຂອງຕົນ) |
| 3.9 | ການລົງທຶນໃນການກໍ່ສ້າງພື້ນຖານໂຄງລ່າງ:ເສັ້ນທາງ, ສ້າງຂົວ, ນ້ຳປະປາ, ສ້າງບ່ອນບຳບັດນ້ຳເປື້ອນ, ເກັບມ້ຽນສິ່ງເສດເຫລືອ ແລະ ອື່ນໆ... |
| 4 | **ຂະແໜງທ່ອງທ່ຽວ** |
| | **ຂັ້ນສູນກາງເປັນຜູ້ພິຈາລະນາ** |
| 4.1 | ກິດຈະການການລົງທຶນ ພັດທະນາ ສະຖານທີ່ທ່ອງທ່ຽວ ລະດັບຊາດ (ສວນສັດເປີດ, ສວນສະໜຸກ, ແຫລ່ງທ່ອງທ່ຽວຈຳລອງ) |
| 4.2 | ການດຳເນີນທຸລະກິດດ້ານ ໂຮງແຮມ, ລີສອດ ລະດັບສາມດາວຂຶ້ນໄປ, ພັດທະຄານ ທີ່ມີການນຳໃຊ້ທີ່ດິນຂອງລັດ |
| | **ຂັ້ນແຂວງ, ນະຄອນ ເປັນຜູ້ພິຈາລະນາ** |
| 4.3 | ກິດຈະການການລົງທຶນ ພັດທະນາ ສະຖານທີ່ທ່ອງທ່ຽວ ລະດັບທ້ອງຖິ່ນ (ສວນສັດເປີດ, ສວນສະໜຸກ, ແຫລ່ງທ່ອງທ່ຽວຈຳລອງ) |
| 4.4 | ການດຳເນີນທຸລະກິດດ້ານ ໂຮງແຮມ, ລີສອດ ລະດັບນ້ອຍກ່ວາສາມດາວລົງມາ ພັດທະຄານ ທີ່ມີການນຳໃຊ້ທີ່ດິນຂອງລັດ |
| 5 | ຂະແໜງການລົງທຶນໃນຂະແໜງກະສິກຳ-ປ່າໄມ້ |
| | **ຂັ້ນສູນກາງເປັນຜູ້ພິຈາລະນາ** |
| 5.1 | ກິດຈະການສຳປະທານທີ່ດິນປູກພືດລົ້ມລຸກ ແລະ ພືດ ສະບຽງອາຫານ |
| 5.2 | ກິດຈະການສຳປະທານທີ່ດິນລ້ຽງສັດໃຫຍ່ ງົວ,ຄວາຍ ແລະອື່ນໆ |
| 5.3 | ກິດຈະການສຳປະທານທີ່ດິນປູກໄມ້ໃຫ້ໝາກ ແລະ ພືດຢືນຕົ້ນ, ໄມ້ອຸດສາຫະກຳ (ໄມ້ກະຖິນນາໂລງ, ໄມ້ວິກ) |
| 5.4 | ກິດຈະການສຳປະທານທີ່ດິນປູກພືດເສດຖະກິດ |
| 5.5 | ກິດຈະການສຳປະທານທີ່ດິນປູກເຄືອງປ່າຂອງດົງ ແລະ ພືດເປັນຢາ |
| 5.6 | ກິດຈະການສຳປະທານທີ່ດິນ ລ້ຽງສັດປີກ, ສັດນ້ອຍເຊັ່ນ: ແບ້,ແກະ ແລະ ອື່ນໆ |
| 5.7 | ກິດຈະການສຳປະທານທີ່ດິນ ລ້ຽງສັດນ້ຳ, ສັດປ່າ |
| 6 | **ຂັ້ນແຂວງ, ນະຄອນ ເປັນຜູ້ພິຈາລະນາ (ໃນຂອບເຂດເນື້ອທີ່ດິນ 150 ເຮັກຕາລົງມາ)** |
| 6.1 | ກິດຈະການສຳປະທານທີ່ດິນປູກພືດລົ້ມລຸກ ແລະ ພືດ ສະບຽງອາຫານ |
| 6.2 | ກິດຈະການສຳປະທານທີ່ດິນລ້ຽງສັດໃຫຍ່ ງົວ,ຄວາຍ ແລະອື່ນໆ |
| 6.3 | ກິດຈະການສຳປະທານທີ່ດິນປູກໄມ້ໃຫ້ໝາກ ແລະ ພືດຢືນຕົ້ນ, ໄມ້ອຸດສາຫະກຳ (ໄມ້ກະຖິນນາໂລງ, ໄມ້ວິກ) |

| | |
|---|---|
| 6.4 | ກິດຈະການສຳປະທານທີ່ດິນປູກພືດເສດຖະກິດ |
| 6.5 | ກິດຈະການສຳປະທານທີ່ດິນປູກເຄື່ອງປ່າຂອງດົງ ແລະ ພືດເປັນຢາ |
| 6.6 | ກິດຈະການສຳປະທານທີ່ດິນ ລ້ຽງສັດປີກ, ສັດນ້ອຍ ແບ້ ແກະແລະ ອື່ນໆ |
| 6.7 | ກິດຈະການສຳປະທານທີ່ດິນ ລ້ຽງສັດນ້ຳ |
| **7** | **ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ** |
| 7.1 | ພັດທະນາຕົວເມືອງໃໝ່ທີ່ທັນສະໄໝຮອບດ້ານ |
| 7.2 | ເຂດອຸດສາຫະກຳ, ເຂດການຜະລິດ ເພື່ອສົ່ງອອກ, ເຂດຕົວເມືອງທ່ອງທ່ຽວ, ເຂດການຄ້າປອດພາສີ, ເຂດພັດທະນາເທັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ເຂດເສດຖະກິດຊາຍ ແດນ, ເຂດຈັດສັນຕົວເມືອງ, ເຂດຕົວເມືອງໃໝ່ ແລະ ອື່ນໆ |